# العقيدة الصحيحة وما يضادها

# ຄວາມເຊື່ອທີ່ຖືກຕ້ອງ ແລະ ຄວາມເຊື່ອທີ່ບໍ່ຖືກ

# ຄວາມເຊື່ອທີ່ຖືກຕ້ອງ ແລະ ຄວາມເຊື່ອທີ່ບໍ່ຖືກ

ຂຽນໂດຍ

ທ່ານເຊກຜູ້ຊົງຄຸນນະວຸດ ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງກະລຸນາປຣານີ ຜູ້ຊົງເມດຕາສະເໝີ

## ບົດນຳ

ມວນການສັນລະເສີນເປັນສິດພຽງພຣະອົງດຽວ, ແລະຂໍອວຍພອນຄວາມສັນຕິສຸກແກ່ທ່ານຜູ້ທີ່ເປັນນະບີສຸດທ້າຍບໍ່ມີຜູ້ໃດຈະມາຕໍ່ຫຼັງຈາກທ່ານ ແລະ ຄອບຄົວຂອງທ່ານ ແລະ ບັນດາສາວົກສະຫາຍຂອງທ່ານ.

ຫຼັກຄວາມເຊື່ອທີ່ຖືກຕ້ອງຄືພື້ນຖານຂອງສາສະໜາອິສລາມ ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງເລືອກມາບັນຍາຍໃນຫົວຂໍ້ນີ້ ຄຳພີອັລ-ກຸຣອານ ແລະ ຫະດີຊ ເຊິ່ງເປັນຫຼັກຖານທາງສາສະໜາໄດ້ສອນເຮົາວ່າ: ຄຳເວົ້າ ຫຼື ການກະທຳດີຈະຖືກຕ້ອງ ແລະ ໄດ້ຮັບການຮັບຮອງກໍ່ຕໍ່ເມື່ອອອກມາຈາກຫຼັກການໃນຄວາມເຊື່ອທີ່ຖືກຕ້ອງ ດັ່ງນັ້ນຫາກຄວາມເຊື່ອບໍ່ຖືກຕ້ອງທັ້ງຄຳເວົ້າ ແລະ ການກະທຳອັນເປັນຜົນສືບເນື່ອງຈາກຄວາມເຊື່ອທີ່ບໍ່ຖືກຕ້ອງກໍ່ຍ່ອມເປັນໂມຂະໄປນຳ ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿الْيَوْمَ أُحِلَّ لَكُمُ الطَّيِّبَاتُ وَطَعَامُ الَّذِينَ أُوتُوا الْكِتَابَ حِلٌّ لَكُمْ وَطَعَامُكُمْ حِلٌّ لَهُمْ وَالْمُحْصَنَاتُ مِنَ الْمُؤْمِنَاتِ وَالْمُحْصَنَاتُ مِنَ الَّذِينَ أُوتُوا الْكِتَابَ مِنْ قَبْلِكُمْ

إِذَا آتَيْتُمُوهُنَّ أُجُورَهُنَّ مُحْصِنِينَ غَيْرَ مُسَافِحِينَ وَلَا مُتَّخِذِي أَخْدَانٍ وَمَنْ يَكْفُرْ بِالْإِيمَانِ فَقَدْ حَبِطَ عَمَلُهُ وَهُوَ فِي الْآخِرَةِ مِنَ الْخَاسِرِينَ٥﴾

(ມື້ນີ້ສິ່ງດີ ໆ ທັງຫຼາຍໄດ້ຖືກອະນຸມັດແກ່ພວກເຈົ້າແລ້ວ ແລະ ອາຫານຂອງຜູ້ທີ່ໄດ້ຮັບ ປຶ້ມຄຳພີນັ້ນເປັນທີ່ອະນຸມັດແກ່ພວກເຈົ້າແລ້ວ ແລະ ອາຫານຂອງພວກເຈົ້າກໍ່ເປັນທີ່ອະນຸມັດແກ່ພວກເຂົາ ແລະ ບັນດາຍິງສາວບໍລິສຸດໃນບັນດາຜູ້ສັດທາຍິງ ແລະ ບັນດາຍິງບໍລິສຸດໃນຫມູ່ບັນດາຜູ້ທີ່ໄດ້ຮັບພຣະຄຳພີກ່ອນຈາກພວກເຈົ້າ ກໍ່ເປັນອະນຸມັດແກ່ພວກເຈົ້າຄືກັນ ເມື່ອພວກເຈົ້າໄດ້ມອບແກ່ພວກນາງເຊິ່ງມະຫັຣຂອງພວກນາງໃນຖານະເປັນ ຜູ້ແຕ່ງງານ ບໍ່ແມ່ນຜູ້ທີ່ເຮັດຊີນາ(ຜິດປະເວນີ)ຢ່າງເປີດເຜີຍ ແລະ ບໍ່ໄດ້ຍຶດເອົານາງເປັນເພື່ອນໂດຍການເຮັດຊີນາລັບ ໆ ແນ່ນອນ ວຽກງານຂອງເຂົາກໍ່ບໍ່ມີຜົນ ໃນຂະນະດຽວກັນໃນອະຄິເຣາະຫ໌ (ໂລກຫນ້າ) ພວກເຂົາຈະຢູ່ໃນບັນດາຜູ້ທີ່ຂາດທຶນ) (ໂອງການທີ່ 5 ບົດທີ່ 5). ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَلَقَدْ أُوحِيَ إِلَيْكَ وَإِلَى الَّذِينَ مِنْ قَبْلِكَ لَئِنْ أَشْرَكْتَ لَيَحْبَطَنَّ عَمَلُكَ وَلَتَكُونَنَّ مِنَ الْخَاسِرِينَ٦٥﴾

(ແລະໂດຍແນ່ນອນໄດ້ມີວະຫ໌ຍີມາຍັງເຈົ້າ (ມູຮຳມັດ) ແລະ ມາຍັງບັນດານະບີກ່ອນຫນ້າເຈົ້າ ຫາກເຈົ້າຕັ້ງພາຄີຮ່ວມ (ກັບອັລລໍຫ໌), ແນ່ນອນການກະທຳຂອງເຈົ້າກໍ່ບໍ່ມີຜົນ ແລະ ແນ່ນອນເຈົ້າຈະຢູ່ໃນກຸ່ມຜູ້ຂາດທຶນ) (ໂອງການທີ່ 39 ບົດທີ່ 65). ມີໂອງການໃນຄຳພີອັລ-ກຸຣອານຢູ່ຫຼາຍບົດທີ່ກ່ຽວຂ້ອງໃນແງ່ປະເດັນນີ້, ທັງຄຳພີອັລ-

ກຸຣອານ ແລະ ອັລ-ຫາດີຊ ຕ່າງກໍ່ລະບຸເຖິງຫຼັກຄວາມເຊື່ອທີ່ຖືກຕ້ອງເຊິ່ງສາມາດສະຫຼຸບສັ້ນ ໆ ເປັນດັ່ງນີ້: ຄືການສັດທາເຊື່ອໃນອັລລໍຫ໌, ມະລາອີກະຫ໌ (ເທວະດາທູດສະຫວັນ), ຄຳພີ, ສາດສະດາທູດ, ວັນສິ້ນໂລກ, ແລະ ການກຳໜົດເລື່ອງດີ ແລະ ບໍ່ດີ ທັງຫົກປະເດັນນີ້ເປັນຮາກຖານຂອງຄວາມເຊື່ອທີ່ຖືກຕ້ອງຕາມທີ່ມີມາໃນຄຳພີອັລ-ກຸຣອານຂອງອັລລໍຫ໌ ແລະ ທ່ານນະບີມຸຮຳມັດ ຊໍລລັລລໍຮຸ ອະໄລຮິ ວະຊັລລໍາ, ຈາກຫຼັກການທັງຫົກນີ້ເອງ ໄດ້ມີການແຕກແຍກປະເດັນຍ່ອຍເປັນຫຼັກຄວາມເຊື່ອໃນເລື່ອງລີ້ລັບຕ່າງ ໆ ແລະ ຮອມເຖິງທຸກຄຳສອນຂອງທ່ານສາສະດາມຸຮຳມັດ ຫຼັກຖານຈາກຄຳພີອັລ-ກຸຣອານ ແລະ ອັລ-ຫາດີຊ ຕໍ່ຫຼັກຄວາມເຊື່ອທັງຫົກນີ້ມີຢ່າງຫຼາຍ ຄືດັ່ງຈາກຄຳເວົ້າຂອງອັລລໍຫ໌ທີ່ບອກວ່າ:

﴿لَيْسَ الْبِرَّ أَنْ تُوَلُّوا وُجُوهَكُمْ قِبَلَ الْمَشْرِقِ وَالْمَغْرِبِ وَلَكِنَّ الْبِرَّ مَنْ آمَنَ بِاللَّهِ وَالْيَوْمِ الْآخِرِ وَالْمَلَائِكَةِ وَالْكِتَابِ وَالنَّبِيِّينَ﴾

(ບໍ່ໄດ້ແມ່ນຄຸນນະທຳຄວາມດີ ການທີ່ພວກເຈົ້າຫັນໜ້າຂອງພວກເຈົ້າໄປທາງທິດຕາເວັນອອກ ແລະ ທິດຕາເວັນຕົກ ແຕ່ຄຸນນະທຳຄວາມດີຄືຜູ້ທີ່ເຊື່ອໃນອັລລໍຫ໌ ແລະ ວັນສຸດທ້າຍ(ວັນລ້າງໂລກ), ແລະ ສັດທາຕໍ່ບັນດາເທວະດາ, ບັນດາພຣະຄຳພີ, ແລະ ບັນດາສາດສະດາທັງໝົດ) (ໂອງການທີ່ 2 ບົດທີ່ 177). ໃນອາຍະຫ໌, ທີ່ພຣະອົງຜູ້ຊົງມະຫາບໍລິສຸດກ່າວວ່າ:

﴿آمَنَ الرَّسُولُ بِمَا أُنْزِلَ إِلَيْهِ مِنْ رَبِّهِ وَالْمُؤْمِنُونَ كُلٌّ آمَنَ بِاللَّهِ وَمَلَائِكَتِهِ وَكُتُبِهِ وَرُسُلِهِ لَا نُفَرِّقُ بَيْنَ أَحَدٍ مِنْ رُسُلِهِ﴾

(ຣໍຊູລນັ້ນ (ທ່ານນະບີມຸຮຳມັດ) ໄດ້ສັດທາໃນສິ່ງທີ່ໄດ້ຖືກປະທານລົງມາແກ່ລາວ ຈາກພຣະເຈົ້າຂອງລາວ ແລະ ມຸມິນຜູ້ສັດທາທັງຫມົດກໍ່ສັດທາດ້ວຍ ທຸກຄົນເຊື່ອໃນອັລລໍຫ໌ ແລະ ມະລາອິກະຫ໌ຂອງພຣະອົງ ແລະ ສັດທາຕໍ່ບັນດາພຣະຄຳພີຂອງພຣະອົງ ແລະ ບັນດາຣໍຊູລຂອງພຣະອົງ) (ໂອງການທີ່ 2 ບົດທີ່ 285). ແລະດຳລັດຂອງພຣະອົງ:

﴿يَا أَيُّهَا الَّذِينَ آمَنُوا آمِنُوا بِاللَّهِ وَرَسُولِهِ وَالْكِتَابِ الَّذِي نَزَّلَ عَلَى رَسُولِهِ وَالْكِتَابِ الَّذِي أَنْزَلَ مِنْ قَبْلُ وَمَنْ يَكْفُرْ بِاللَّهِ وَمَلَائِكَتِهِ وَكُتُبِهِ وَرُسُلِهِ وَالْيَوْمِ الْآخِرِ فَقَدْ ضَلَّ ضَلَالًا بَعِيدًا١٣٦﴾

(ໂອ້ ບັນດາຜູ້ສັດທາທັ້ງຫລາຍ ຈົ່ງສັດທາຕໍ່ອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ແລະ ພຣະຄຳພີທີ່ພຣະອົງໄດ້ປະທານລົງມາຍັງຣໍຊູລຂອງພຣະອົງ ແລະ ພຣະຄຳພີທີ່ພຣະອົງໄດ້ປະທານມາກ່ອນນັ້ນ ແລະ ຜູ້ໃດປະຕິເສດສັດທາຕໍ່ອັລລໍຫ໌ ແລະ ມາລາອິກະຫ໌ຂອງພຣະອົງ ແລະ ບັນດາຄຳພີຂອງພຣະອົງ ແລະ ບັນດາຣໍຊູລຂອງພຣະອົງ ແລະມື້ໂລກຫນ້າແລ້ວນັ້ນ ແນ່ນອນເຂົາກໍ່ໄດ້ຫລົງທາງໄປແລ້ວໄກເຕີບ) (ໂອງການທີ່ 4 ບົດທີ່ 136). ແລະດຳລັດຂອງພຣະອົງ:

﴿أَلَمْ تَعْلَمْ أَنَّ اللَّهَ يَعْلَمُ مَا فِي السَّمَاءِ وَالْأَرْضِ إِنَّ ذَلِكَ فِي كِتَابٍ إِنَّ ذَلِكَ عَلَى اللَّهِ يَسِيرٌ ٧٠﴾

(ເຈົ້າບໍ່ຮູ້ບໍ? ແທ້ຈິງອັລລໍຫ໌ຊົງຮອບຮູ້ສິ່ງທີ່ຢູ່ໃນຊັ້ນຟ້າ ແລະ ແຜ່ນດິນ ແທ້ຈິງສິ່ງນັ້ນຢູ່ໃນບັນທຶກແລ້ວ

ແທ້ຈິງໃນການນັ້ນເປັນການງ່າຍດາຍສຳລັບອັລລໍຫ໌)
(ໂອງການທີ່ 22 ບົດທີ່ 70). ອັລ-ຫາດີຊທີ່ໄດ້ລະບຸເຖິງຫຼັກການທັງຫົກນັ້ນມີຢູ່ຫຼວງຫຼາຍ ເຊັ່ນຫາດີຊຊໍຣີຫ໌ອັນໂດ່ງດັງທີ່ລາຍງານໂດຍທ່ານອີຫມ່າມມຸສລິມໃນບັນທຶກຂອງທ່ານວ່າ : ທ່ານຜູ້ນຳແຫ່ງສັດທາຊົນກໍ່ຄືທ່ານ ອູມັຣ ບິນ ຄອດຕໍອບ ໄດ້ເລົ່າວ່າ: ເທວະທູດຈິບຣີລໄດ້ຖາມທ່ານນະບີມຸຮໍາມັດ - ຂໍຄວາມສັນຕິສຸກຈົ່ງມີແດ່ທ່ານ- ເຖິງຫຼັກສັດທາ ທ່ານຈຶ່ງຕອບວ່າ:

«الإيمان أن تؤمن بالله، وملائكته وكتبه ورسله واليوم الآخر وتؤمن بالقدر خيره وشره» الحديث،

"ການອີມານ(ສັດທາ) ໝາຍເຖິງການເຊື່ອໃນພຣະເຈົ້າກໍ່ຄືອັລລໍຫ໌, ບັນດາມະລາອິກະຫ໌(ເທວະດາທູດສະຫວັນ), ຄຳພີ, ສະສານະທູດ(ບັນດາສາດສະດາ), ແລະວັນສິ້ນໂລກ, ແລະການກຳໜົດຄວາມດີຄວາມຊົ່ວ[1]ຫະດີຊ, ຈາກການບັນທຶກຂອງທ່ານອີຫມາມທັງສອງ ຄືທ່ານອີ່ຫມ່າບຸກໍຣີ ແລະ ທ່ານອີຫມ່າມມຸສລິມ ຈາກການລາຍງານຂອງທ່ານອະບີຮຸຣອຍເຣາະຫ໌. ຫຼັກການທັງຫົກ ປະການນີ້: ເປັນສິ່ງຈຳເປັນເໜືອມຸສລິມທຸກຄົນທີ່ຈະຕ້ອງເຊື່ອສັດທາໃນສິດການເປັນພຣະເຈົ້າຂອງອັລລໍຫ໌ຜູ້ຊົງອຳນາດ

---

[1] ມຸສລິມ ອັລ-ອີມານ (8), ອັດຕິຣມີຊີ ອັລ-ອີມານ (2610), ອັນນິສາອີ ອັລ-ອີມານ ວັສຊອາຣໍອິອະຫ໌ (4990), ອະບູດາວູດ ອັສສຸນນະຫ໌ (4695), ອິບນຸມາຈະຫ໌ ອັລ-ມຸກໍອດດາມະຫ໌ (63), ອະຫ໌ມັດ (1/27).

ໃນເລື່ອງການຟື້ນຄືນຊີບ ແລະ ເລື່ອງອື່ນ ໆ ທີ່ເບິ່ງບໍ່ເຫັນ(ເລັ້ນລັບ)

## ການສັດທາຕໍ່ອັລລໍຫ໌

ການສັດທາຕໍ່ອັລລໍຫ໌ ໝາຍເຖິງ ການເຊື່ອວ່າພຣະອົງຄືພຣະເຈົ້າ ຜູ້ມີສິດໄດ້ຮັບການເຄົາລົບບູຊາພຽງຜູ້ດຽວ ປາດສະຈາກສິ່ງອື່ນໃດ

ສ່ວນໜຶ່ງຂອງການສັດທາຕໍ່ອັລລໍຫ໌ ຄືການສັດທາວ່າພຣະອົງນັ້ນເປັນພຣະຜູ້ເປັນເຈົ້າທີ່ແທ້ຈິງ ທີ່ສົມຄວນທີ່ຮັບການເຄົາລົບພັກດີ ທຸກສິ່ງທຸກປະການອື່ນນອກຈາກພຣະອົງແລ້ວ ບໍ່ສົມຄວນທີ່ຈະໄດ້ຮັບການເຄົາລົບກາບໄຫວ້ ທັ້ງນີ້ກໍ່ເນື່ອງຈາກພຣະອົງເປັນຜູ້ຊົງບັງເກີດປວງບ່າວ ຜູ້ຊົງປະທານຄວາມງາມຄວາມດີຢ່າງຫຼວງຫຼາຍ ຜູ້ຊົງປະທານປັດໃຈຍັງຊີບ ຊົງຮອບຮູ້ທັ້ງໃນທີ່ລັບ ແລະ ເປີດເຜີຍ ຜູ້ທີ່ສາມາດປະທານຜົນລະບຸນແກ່ຜູ້ທີ່ເຊື່ອຟັງ ແລະ ປະຕິບັດຕາມ ແລະ ຊົງລົງໂທດແກ່ຜູ້ທີ່ຝ່າຝືນ ທັ້ງນີ້ກໍ່ເພື່ອເຄົາລົບພັກດີ (ອິບາດະຫ໌) ນີ້ແຫລະທີ່ເປັນພຣະປະສົງຂອງພຣະອົງໃນການສ້າງມະນຸດ ແລະ ຍິນຂຶ້ນມາ ຊົງບັນຊາໃຫ້ພວກເຂົາເຫຼົ່ານັ້ນເຄົາລົບພັກດີ ດັ່ງທີ່ພຣະອົງມີດໍາລັດວ່າ:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ٥٦﴾

(ແລະ ຂ້າບໍ່ໄດ້ສ້າງຍິນ(ຜີ) ແລະ ມະນຸດ ມາເພື່ອຈຸດປະສົງອື່ນໃດ

ເວັ້ນແຕ່ການກາບໄຫວ້ເຄົາລົບພັກດີຕໍ່ຂ້າ) (ໂອງການທີ່ 51 ບົດທີ່ 56).

﴿مَا أُرِيدُ مِنْهُمْ مِنْ رِزْقٍ وَمَا أُرِيدُ أَنْ يُطْعِمُونِ٥٧﴾

(ຂ້າບໍ່ຕ້ອງການປັດໃຈຍັງຊີບນຳພວກເຂົາ ແລະ ຂ້າກໍ່ບໍ່ຕ້ອງການໃຫ້ພວກເຂົາໃຫ້ອາຫານແກ່ຂ້າ) (ໂອງການທີ່ 51 ບົດທີ່ 57).

﴿إِنَّ اللَّهَ هُوَ الرَّزَّاقُ ذُو الْقُوَّةِ الْمَتِينُ٥٨﴾

(ແທ້ຈິງແລ້ວອັລລໍຫ໌ ຄືຜູ້ປະທານປັດໃຈຍັງຊີບອັນຫລາກຫຼາຍ ຜູ້ຊົງມີພະລັງທີ່ເຂັ້ມແຂງຍິ່ງ) (ໂອງການທີ່ 51 ບົດທີ່ 58). ແລະ ພຣະອົງຫຍັງໄດ້ຕຣັດວ່າ:

﴿يَا أَيُّهَا النَّاسُ اعْبُدُوا رَبَّكُمُ الَّذِي خَلَقَكُمْ وَالَّذِينَ مِنْ قَبْلِكُمْ لَعَلَّكُمْ تَتَّقُونَ٢١﴾

(ມະນຸດເອີ່ຍ ຈົ່ງເຄົາລົບອິບາດະຮ໌ ພຣະຜູ້ເປັນເຈົ້າຂອງພວກເຈົ້າຜູ້ຊົງສ້າງພວກເຈົ້າ ແລະ ບັນດາຜູ້ທີ່ມາກ່ອນພວກທ່ານເກີດ ເພື່ອວ່າພວກເຈົ້າຈະຍຳເກງ (ຢ້ານຕໍ່ອັລລໍຫ໌) (ໂອງການທີ່ 2 ບົດທີ່ 21).

﴿الَّذِي جَعَلَ لَكُمُ الْأَرْضَ فِرَاشًا وَالسَّمَاءَ بِنَاءً وَأَنْزَلَ مِنَ السَّمَاءِ مَاءً فَأَخْرَجَ بِهِ مِنَ الثَّمَرَاتِ رِزْقًا لَكُمْ فَلَا تَجْعَلُوا لِلَّهِ أَنْدَادًا وَأَنْتُمْ تَعْلَمُونَ٢٢﴾

(ຄືຜູ້ຊົງໃຫ້ແຜ່ນດິນເປັນບ່ອນນອນ ແລະ ຟາກຟ້າເປັນອາຄານແກ່ພວກເຈົ້າ ແລະ ຊົງໃຫ້ນ້ຳຫລັ່ງລົງມາຈາກທ້ອງຟ້າ ແລະ ໄດ້ຊົງໃຫ້ບັນດາໝາກໄມ້ອອກມາ ເນື່ອງດ້ວຍນ້ຳນັ້ນ ທັ້ງນີ້ເພື່ອເປັນປັດໃຈຍັງຊີບແກ່ພວກເຈົ້າ ດັ່ງນັ້ນພວກເຈົ້າຈົ່ງຢ່າໃຫ້ມີຜູ້ເທົ່າທຽມໃດ ໆ ຂຶ້ນ

ສຳລັບອັລລໍກ໌ ໂດຍທີ່ພວກເຈົ້າຮູ້ກັນຢູ່) (ໂອງການທີ່ 2 ບົດທີ່ 22). ແທ້ຈິງແລ້ວ ພຣະອົງໄດ້ສົ່ງບັນດາຣໍຊູລ ແລະ ປະທານບັນດາຄຳພີລົງມາ ກໍ່ເພື່ອມາອະທິບາຍຊີ້ແຈ້ງ ແລະ ເຊີນຊວນຕໍ່ສັດຈະທັມອັນນີ້, ຮຽກຮ້ອງ ແລະ ຕັກເຕືອນໃຫ້ຮູ້ເຖິງສິ່ງທີ່ກົງກັນຂ້າມກັບສັດຈະທັມ ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿وَلَقَدْ بَعَثْنَا فِي كُلِّ أُمَّةٍ رَسُولًا أَنِ اعْبُدُوا اللَّهَ وَاجْتَنِبُوا الطَّاغُوتَ﴾

(ແລະໂດຍແນ່ນອນ ເຮົາໄດ້ສົ່ງຣໍຊູລມາໃນທຸກປະຊາຊາດ (ໂດຍໃຫ້ເຂົາປະກາດວ່າ) ພວກທ່ານຈົ່ງເຄົາລົບພັກດີຕໍ່ອັລລໍຫ໌ ແລະ ຈົ່ງຫຼີກຫນີອອກຫ່າງ (ການສັກກາລະ) ຈາກພວກຕໍ່ກູດ (ໄຊຕອນ ຫຼື ຈະເວັດຮູບປັ້ນ) (ໂອງການທີ່ 16 ບົດທີ່ 36). ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَمَا أَرْسَلْنَا مِنْ قَبْلِكَ مِنْ رَسُولٍ إِلَّا نُوحِي إِلَيْهِ أَنَّهُ لَا إِلَهَ إِلَّا أَنَا فَاعْبُدُونِ٢٥﴾

(ແລະເຮົາບໍ່ໄດ້ສົ່ງຣໍຊູລຄົນໃດມາກ່ອນຫນ້າເຈົ້າ (ໝາຍເຖິງທ່ານນະບີມຸຮຳມັດ) ຍົກເວັ້ນແຕ່ເຮົາໄດ້ວະຫ໌ຍູໃຫ້ແກ່ເຂົາວ່າ ບໍ່ມີພຣະເຈົ້າອື່ນໃດທີ່ແທ້ຈິງນອກຈາກຂ້າ ດ້ວຍເຫດນີ້ພວກເຈົ້າຈົ່ງເຄົາລົບພັກດີຕໍ່ຂ້າ) (ໂອງການທີ່ 21 ບົດທີ່ 25). ແລະພຣະຜູ້ຊົງເດສານຸພາບໄດ້ກ່າວວ່າ:

﴿الر كِتَابٌ أُحْكِمَتْ آيَاتُهُ ثُمَّ فُصِّلَتْ مِنْ لَدُنْ حَكِيمٍ خَبِيرٍ ١ أَلَّا تَعْبُدُوا إِلَّا اللَّهَ إِنَّنِي لَكُمْ مِنْهُ نَذِيرٌ وَبَشِيرٌ ٢﴾

("ອະລິຟ ລາມ ຣໍ" ນີ້ຄືຄຳພີທີ່ໂອງການຕ່າງ ໆ ຂອງຄຳພີນັ້ນໄດ້ຖືກວາງໄວ້ຢ່າງຮັດກຸມມີລະບຽບ ແລະ ຖືກຈຳແນກເລື່ອງຕ່າງ ໆ ຢ່າງຊັດແຈ້ງ

ຈາກພຣະຜູ້ຊົງສະຫຼາດຫຼັກແຫລມ ແລະ ຜູ້ຊົງຮອບຮູ້ລ່ຽວຊານ)

(ໂດຍໄດ້ສອນໄວ້ໃນຄຳພີວ່າ) ພວກເຈົ້າຈະບໍ່ໄປເຄົາລົບພັກດີຕໍ່ຜູ້ໃດນອກຈາກອັລລໍຫ໌ ແທ້ຈິງຂ້ອຍ(ມຸຮຳມັດ) ໄດ້ຮັບການແຕ່ງຕັ້ງຈາກພຣະອົງ ມາຍັງພວກທ່ານເພື່ອເປັນຜູ້ຕັກເຕືອນ ແລະ ຜູ້ແຈ້ງຂ່າວດີ) (ໂອງການທີ່ 11 ບົດທີ່ 1-2).

ແລະຄວາມໝາຍທີ່ແທ້ຈິງຂອງການອິບາດະຫ໌ນີ້ກໍ່ຄື ການສະແດງເຖິງເອກະພາບຂອງອັລລໍຫ໌ ໃນທຸກເລື່ອງທີ່ປວງບ່າວຖະວາຍຄວາມພັກດີ ເປັນຕົ້ນກໍ່ຄື ການວິງວອນຂໍ ຄວາມຢ້ານກົວ ຄວາມຫວັງ ການລະຫມາດ ການຖືສິນອົດ ການເຊືອດ ການບົນບານ ແລະ ອື່ນ ໆ ຈາກສິ່ງທີ່ກ່າວມາຂ້າງຕົ້ນແລ້ວ ເຊິ່ງເປັນການອິບາດະຫ໌ຕ່າງ ໆ ໃນຮູບແບບຂອງການນອບນ້ອມຖ່ອມຕົນຕໍ່ອັລລໍຫ໌ ມີຄວາມປາດຖະນາປະກອບກັບຄວາມຢ້ານ ພ້ອມກັບຄວາມກະຕັນຍູ ສຳນຶກໃນບຸນຄຸນຂອງອັລລໍຫ໌ຢ່າງເຕັມປ່ຽມ ແລະ ມີຄວາມຮູ້ສຶກຕ່ຳຕ້ອຍຕໍ່ຄວາມຍິ່ງໃຫຍ່ຂອງພຣະອົງ ສ່ວນໃຫຍ່ຂອງອັລ-ກຸຣອານໄດ້ລົງມາໃນຫຼັກພື້ນຖານອັນຍິ່ງໃຫຍ່ນີ້ ດັ່ງພຣະດຳລັດຂອງອັລລໍຫ໌ທີ່ວ່າ:

﴿فَاعْبُدِ اللَّهَ مُخْلِصًا لَهُ الدِّينَ ٢ أَلَا لِلَّهِ الدِّينُ الْخَالِصُ﴾

(ດັ່ງນັ້ນ ເຈົ້າຈົ່ງເຄົາລົບພັກດີຕໍ່ອັລລໍຫ໌ ໂດຍເປັນຜູ້ຖະວາຍການເຄົາລົບຢ່າງບໍລິສຸດແດ່ພຣະອົງ (ພຽງອົງດຽວເທົ່ານັ້ນ)

ຈົ່ງຮູ້ໄວ້ເຖີດວ່າ ສຳຫຼັບອັລລໍຫ໌ແລ້ວ (ບໍ່ມີພາຄີໃດ ໆ ອີກນອກຈາກ) ການເຄົາລົບພັກດີທີ່ຜ່ອງແຜ້ວບໍລິສຸດ) (ໂອງການທີ່ 39 ບົດທີ່ 2-3). ແລະໃນໂອງການຂອງອັລລໍຫ໌ໄດ້ກ່າວວ່າ:

﴿وَقَضَىٰ رَبُّكَ أَلَّا تَعۡبُدُوٓاْ﴾

(ແລະພຣະເຈົ້າຂອງເຈົ້າໄດ້ມີບັນຊາວ່າ ພວກເຈົ້າຢ່າໄດ້ເຄົາລົບພັກດີຜູ້ໃດນອກຈາກພຣະອົງເທົ່ານັ້ນ ) (ໂອງການທີ່ 17 ບົດທີ່ 23). ແລະ ໂອງການທີ່ວ່າ

﴿فَادۡعُوا اللَّهَ مُخۡلِصِينَ لَهُ الدِّينَ وَلَوۡ كَرِهَ الۡكَافِرُونَ ١٤﴾

(ດັ່ງນັ້ນພວກເຈົ້າຈົ່ງວິງວອນຕໍ່ອັລລໍຫ໌ ໂດຍເປັນຜູ້ຖະວາຍການເຄົາລົບພັກດີຢ່າງບໍລິສຸດໃຈແດ່ພຣະອົງເທົ່ານັ້ນ ເຖິງແມ້ວ່າພວກປະຕິເສດສັດທາຈະກຽດຊັງກໍຕາມ) (ໂອງການທີ່ 40 ບົດທີ່ 14). ແລະ ໃນບັນທຶກຂອງທ່ານອີຫມ່າທັງສອງ ຈາກລາຍງານຂອງທ່ານມຸອາຊ -ຣໍດີຍັລລໍຮຸອັນຮຸ- ແທ້ຈິງທ່ານນະບີ -ຊໍລລັລລໍຮຸ ອະໄລຮີ ວະຊັລລໍາ- ກ່າວວ່າ:

«حق الله على العباد أن يعبدوه ولا يشركوا به شيئا».

"ສິດທິຂອງອັລລໍຫ໌ອັນພຶ່ງມີຕໍ່ປວງບ່າວກໍ່ຄື ການທີ່ເຂົາເຫຼົ່ານັ້ນຕ້ອງເຄົາລົບພັກດີຕໍ່ພຣະອົງ ແລະ ບໍ່ນຳສິ່ງໃດຂຶ້ນມາເປັນພາຄີ (ການໄຫວ້) ຮ່ວມກັບພຣະອົງ"[1].

---

[1] ອັລ-ບຸກໍຣີ ອັລ-ຈິຮາດ ວັສໄສຣຸ (2701), ມຸສລິມ ອັລ-ອີມານ (30), ອັດຕັຣມີຊີ ອັລ-ອີມານ (2643), ອິບນຸມາຈະຫ໌ ອັຊຊະຫ໌ດ໌ (4296), ອະຫ໌ມັດ (5/328).

ການສັດທາຕໍ່ອັລລໍຫ໌ຄືການສັດທາຕໍ່ທຸກສິ່ງທີ່ພຣະອົງຊົງມີໂອງການບັງຄັບໃຫ້ປວງບ່າວປະພຶດປະຕິບັດຫຼັກອິສລາມທັ້ງຫ້າປະການ ທີ່ປະກົດຊັດເຈນ

ສິ່ງໜຶ່ງຈາກການສັດທາຕໍ່ອັລລໍຫ໌ຄືການສັດທາຕໍ່ທຸກສິ່ງທີ່ພຣະອົງຊົງມີໂອງການບັງຄັບໃຫ້ປວງບ່າວປະພຶດປະຕິບັດຫຼັກອິສລາມທັ້ງຫ້າປະການທີ່ປະກົດ ເຊິ່ງໄດ້ແກ່ການປະຕິຍານວ່າ "ລາອິລາຫະ ອິລລັລລໍຫ໌ ມຸຮໍາມັດ ຣໍຊູລຸລລໍຫ໌ (ບໍ່ມີພຣະເຈົ້າອື່ນໃດທີ່ຄວນໄດ້ຮັບການເຄົາລົບພັກດີນອກຈາກອັລລໍຫ໌ ແລະ ມຸຮໍາມັດເປັນສາສະນະທູດຂອງອັລລໍຫ໌" ການດໍາລົງການລະຫມາດ ການຈ່າຍຊະກາດ ການຖືສິນອົດໃນເດືອນຣໍມະດອນ ການເຮັດຫັຈ ນະເມືອງມັກກະຫ໌ສໍາຫຼັບຜູ້ທີ່ມີຄວາມສາມາດເດີນທາງໄປໄດ້ ແລະ ອື່ນ ໆ ອີກທີ່ເປັນຟັຣດູ(ສາສະໜາບັງຄັບ) ຕາມບັນຫຍັດທີ່ໄດ້ລະບຸໄວ້

ຫຼັກອິສລາມທີ່ສໍາຄັນ ແລະ ຍິ່ງໃຫຍ່ທີ່ສຸດກໍ່ຄືການປະຕິຍານວ່າ ບໍ່ມີຜູ້ທີ່ຄວນໄດ້ຮັບການເຄົາລົບພັກດີອື່ນໃດນອກຈາກອັລລໍຫ໌ ເພາະການປະຕິຍານວ່າບໍ່ມີບໍ່ມີຜູ້ທີ່ຄວນໄດ້ຮັບການເຄົາລົບພັກດີອື່ນໃດນອກຈາກອັລລໍຫ໌ ຈໍາເປັນຕ້ອງມີຄວາມອິກລາສ (ບໍລິສຸດໃຈ) ມອບການອິບາດະຫ໌ຕໍ່ອັລລໍຫ໌ອົງດຽວ ແລະ ປະຕິເສດການອິບາດະຫ໌ຕໍ່ພຣະເຈົ້າອື່ນຈາກພຣະອົງ ເຊິ່ງນີ້ກໍ່ຄື ຄວາມໝາຍຂອງຄໍາວ່າ "ລາອິລາຫະ ອິລລັລລໍຫ໌"

(ບໍ່ມີຜູ້ທີ່ຄວນໄດ້ຮັບການເຄົາລົບພັກດີອື່ນໃດນອກຈາກອັລ ລໍຫ໌)

ສະນັ້ນ ທຸກສິ່ງທີ່ຖືກເຄົາລົບພັກດີນອກຈາກອັລລໍຫ໌ ບໍ່ວ່າຈະເປັນມະນຸດ ມະລາອີກະຫ໌ ຍິນ ຫຼືອື່ນຈາກນັ້ນ ທັ້ງໝົດທີ່ກ່າວມານີ້ຈຶ່ງເປັນສິ່ງທີ່ເຄົາລົບພັກດີໂດຍບໍ່ຖືກຕ້ອ ງ ເປັນສິ່ງຫຼອງຕາ ເພາະສິ່ງທີ່ສົມຄວນໄດ້ຮັບການເຄົາລົບພັກດີຢ່າງແທ້ຈິງ ແລະ ຖືກຕ້ອງນັ້ນຄືອັລລໍຫ໌ພຽງອົງດຽວເທົ່ານັ້ນ ດັ່ງທີ່ພຣະອົງໄດ້ຕຣັດໄວ້ວ່າ:

﴿ذَلِكَ بِأَنَّ اللَّهَ هُوَ الْحَقُّ وَأَنَّ مَا يَدْعُونَ مِنْ دُونِهِ هُوَ الْبَاطِلُ﴾

(ນັ້ນກໍ່ເພາະວ່າອັລລໍຫ໌ຄືຜູ້ຊົງສັດຈະ ແລະ ແທ້ຈິງ ສິ່ງທີ່ພວກເຂົາເຫຼົ່ານັ້ນວິງວອນອື່ນຈາກພຣະອົງນັ້ນມັນເປັນເ ລື່ອງເທັດ) (ໂອງການທີ່ 22 ບົດທີ່ 62). ໄດ້ເຄີຍຊີ້ແຈ້ງມາກ່ອນແລ້ວວ່າອັລລໍຫ໌ ໄດ້ຊົງສ້າງມະນຸດ ແລະ ຍິນ ມາເພື່ອຫຼັກພື້ນຖານອັນເດີມອັນນີ້ ນັ້ນກໍ່ຄືເພື່ອອີບາດະຫ໌ຕໍ່ພຣະອົງ ຊົງແຕ່ງຕັ້ງຣໍຊູລມາ ແລະ ປະທານຄໍາພີຂອງພຣະອົງມາກໍ່ເພື່ອການນີ້ ສະນັ້ນຈຶ່ງຄວນພິຈາລະນາຢ່າງຖ່ອງແທ້ ແລະ ຄິດທົບທວນໃຫ້ຫຼາຍ ໆ ເພື່ອທີ່ຈະໄດ້ປະລັກຊັດແກ່ທ່ານໃນສິ່ງທີ່ເກີດຂຶ້ນແກ່ມຸສລິມເ ປັນຈໍານວນຫຼາຍ ທີ່ບໍ່ຮູ້ບໍ່ເຂົ້າໃຈໃນຫຼັກພື້ນຖານດັ້ງເດີມອັນນີ້ ຈຶ່ງໄດ້ໄປສັກກາລະສິ່ງອື່ນຄວບຄູ່ກັບອັລລໍຫ໌ ທັນເທ ຫຼື ແບ່ງປັນສິດ ເຊິ່ງເປັນຂອງພຣະອົງພຽງອົງດຽວໄປໃຫ້ແກ່ຜູ້ອື່ນ (ຂໍອັລລໍຫ໌ຊົງຊ່ວຍເຫຼືອດ້ວຍທອນ)

ສ່ວນໜຶ່ງຂອງການສັດທາຕໍ່ອັລລໍຫ໌ໄດ້ແກ່ການສັດທາວ່າ ພຣະອົງຄືຜູ້ຊົງສ້າງໂລກ ຜູ້ບໍລິຫານກິດຈະການຕ່າງ ໆ ຂອງມະນຸດ ຊົງຄວບຄຸມມະນຸດດ້ວຍຄວາມສາມາດ ດ້ວຍເດສານຸພາບຂອງພຣະອົງ

ສ່ວນໜຶ່ງຂອງການສັດທາຕໍ່ອັລລໍຫ໌ໄດ້ແກ່ການສັດທາວ່າ ພຣະອົງຄືຜູ້ຊົງສ້າງໂລກ ຜູ້ບໍລິຫານກິດຈະການຕ່າງ ໆ ຂອງມະນຸດ ຊົງຄວບຄຸມມະນຸດດ້ວຍຄວາມສາມາດ ດ້ວຍເດສານຸພາບຂອງພຣະອົງ ມະຫາບໍລິສຸດ ພຣະອົງຊົງຄອບຄອງໂລກນີ້ ແລະ ໂລກໜ້າ ຊົງເປັນຜູ້ເປັນເຈົ້າແຫ່ງຈັກກວານ ບໍ່ມີຜູ້ສ້າງອື່ນນອກຈາກພຣະອົງ, ຊົງສົ່ງຣໍຊູລມາ ຊົງປະທານຄຳພີລົງມາ ກໍ່ເພື່ອຟື້ນຟູປັບປຸງສະພາບວິຖີຊີວິດຂອງປວງບ່າວ ເຊີນຊວນຄົນເຫຼົ່ານັ້ນໄປສູ່ຄວາມປອດໄພ ສູ່ການເຮັດຄວາມດີທີ່ຍັ້ງຍືນໃນໂລກນີ້ ແລະ ໂລກໜ້າ, ພຣະອົງນັ້ນບໍ່ມີຫຸ້ນສ່ວນ ບໍ່ມີພາຄີໃດ ໆ ຮ່ວມກັບພຣະອົງ ໃນເລື່ອງທີ່ກ່າວມາທັ້ງໝົດ ດັ່ງທີ່ພຣະອົງໄດ້ຕຣັດວ່າ:

﴿اللَّهُ خَالِقُ كُلِّ شَيْءٍ وَهُوَ عَلَى كُلِّ شَيْءٍ وَكِيلٌ٦٢﴾

(ອັລລໍຫ໌ຄືຜູ້ຊົງສ້າງທຸກສິ່ງ ແລະ ພຣະອົງຊົງເປັນຜູ້ຮັບມອບໝາຍໃຫ້ຄຸ້ມຄອງຮັກສາທຸກສິ່ງທຸກຢ່າງ) (ໂອງການທີ່ 39 ບົດທີ່ 62). ແລະ ພຣະອົງກ່າວຕື່ມອີກວ່າ:

﴿إِنَّ رَبَّكُمُ اللَّهُ الَّذِي خَلَقَ السَّمَاوَاتِ وَالْأَرْضَ فِي سِتَّةِ أَيَّامٍ ثُمَّ اسْتَوَى عَلَى الْعَرْشِ يُغْشِي اللَّيْلَ النَّهَارَ يَطْلُبُهُ حَثِيثًا وَالشَّمْسَ وَالْقَمَرَ وَالنُّجُومَ مُسَخَّرَاتٍ بِأَمْرِهِ أَلَا لَهُ الْخَلْقُ وَالْأَمْرُ تَبَارَكَ اللَّهُ رَبُّ الْعَالَمِينَ٥٤﴾

(ແທ້ຈິງພຣະເຈົ້າຂອງພວກເຈົ້ານັ້ນ ຄື ອັລລໍຫ໌ ຜູ້ຊົງສ້າງບັນດາຊັ້ນຟ້າ ແລະ ແຜ່ນດິນ ພາຍໃນຫົກມື້ ແລະ ສະຖິດຢູ່ເທິງບັນລັງ ພຣະອົງຊົງໃຫ້ກາງຄືນຄອງຄຸມກາງເວັນໃນສະພາບທີ່ກາງຄືນໄລ່ຕາມກາງເວັນຢ່າງວ່ອງໄວ ແລະ ພຣະອົງໄດ້ສ້າງດວງອາທິດ ແລະ ດວງຈັນ ແລະ ບັນດາດວງດາວຂຶ້ນຖືກກຳໜົດໃຫ້ກຳໜົດເຮັດໜ້າທີ່ບໍລິການ ຕາມພຣະບັນຊາຂອງພຣະອົງ ຈົ່ງຮັບຮູ້ວ່າ ການສ້າງ ແລະ ກິດຈະການທັງຫຼາຍເປັນສິດທິຂອງພຣະອົງເທົ່ານັ້ນ ມະຫາບໍລິສຸດແດ່ອັລລໍຫ໌ ຜູ້ເປັນພຣະເຈົ້າແຫ່ງສາກົນລະໂລກ) (ໂອງການທີ່ 7 ບົດທີ່ 54).

ການສັດທາຕໍ່ພຣະນາມອັນປະເສີດພ້ອມທັ້ງຄຸນນະລັກສະນະອັນສູງສົ່ງຂອງອັລລໍຫ໌ ໂດຍບໍ່ມີການບິດເບືອນ ບໍ່ມີການສ້າງຖ້ອຍຄຳໃຫ້ເຫັນວ່າເປັນແນວໃດ ບໍ່ມີການປຽບເປີຍວ່າຄືກັບສິ່ງໃດ

ແລະສ່ວນໜຶ່ງຂອງການສັດທາຕໍ່ອັລລໍຫ໌ນັ້ນ ໄດ້ແກ່ການສັດທາໃນພຣະນາມອັນປະເສີດ ພ້ອມທັ້ງຄຸນນະລັກສະນະອັນສູງສົ່ງຂອງພຣະອົງ ດັ່ງທີ່ໄດ້ປະກົດໃນຄຳພີອັລ-ກຸຣອານອັນສິງກຽດ ແລະ ທີ່ລະບຸແນ່ຊັດຈາກທ່ານຣໍຊູລ ຊັລລັລລໍຮຸ ອະໄລຮີ ວະສັລລໍາ ຜູ້ຊື່ສັດຂອງພຣະອົງ ໂດຍບໍ່ມີການບິດເບືອນ ບໍ່ມີການສ້າງຖ້ອຍຄຳໃຫ້ເຫັນວ່າເປັນແນວໃດ ບໍ່ມີການປຽບເປີຍວ່າຄືກັບສິ່ງໃດ ຫາກແຕ່ເຮົາຈຳເປັນຕ້ອງເຊື່ອຖືຕາມທີ່ທ່ານນະບີ ຊັລລັລລໍຮຸ

ອະໄລຮີ ອະສັລລໍາ ບອກມາ ໂດຍບໍ່ສົນໃຈວ່າເປັນຈັ່ງໃດ (ໃນຮູບແບບໃດ) ພ້ອມທັງສັດທາຕໍ່ພຣະນາມອັນປະເສີດ ແລະ ຄຸນນະລັກສະນະອັນສູງສົ່ງ ສະແດງເຖິງຄວາມໝາຍອັນຍິ່ງໃຫຍ່ເຊິ່ງກໍ່ເປັນຄຸນນະລັກສະນະຕ່າງ ໆ ຂອງອັລລໍຫ໌ຜູ້ຊົງກຽງໄກ ຈໍາຕ້ອງບັນຍາຍຄຸນນະລັກສະນະໃຫ້ເໝາະສົມກັບພຣະອົງ ໂດຍ ບໍ່ມີການປຽບເປີຍຄຸນນະລັກສະນະຂອງພຣະອົງໃຫ້ສະເໝີເໝືອນກັບສິ່ງຖືກສ້າງໃດ ໆ ຂອງພຣະອົງ ດັ່ງທີ່ຊົງມີດໍາລັດໄວ້ວ່າ:

﴿لَيْسَ كَمِثْلِهِ شَيْءٌ وَهُوَ السَّمِيعُ الْبَصِيرُ﴾

(ບໍ່ມີສິ່ງໃດສະເໝີເໝືອນພຣະອົງ ແລະ ພຣະອົງຜູ້ຊົງໄດ້ຍິນ ຜູ້ຊົງເຫັນ) (ໂອງການທີ່ 42 ບົດທີ່ 11). ແລະພຣະອົງໄດ້ກ່າວວ່າ:

﴿فَلَا تَضْرِبُوا لِلَّهِ الْأَمْثَالَ إِنَّ اللَّهَ يَعْلَمُ وَأَنْتُمْ لَا تَعْلَمُونَ ٧٤﴾

(ດັ່ງນັ້ນ ພວກເຈົ້າຢ່າໄດ້ຍົກອຸທາຫອນທັງຫລາຍກັບອັລລໍຫ໌ ແທ້ຈິງອັລລໍຫ໌ນັ້ນ ຊົງຮອບຮູ້ ແລະ ພວກເຈົ້າຕ່າງຫາກທີ່ບໍ່ຮູ້) (ໂອງການທີ່ 16 ບົດທີ່ 74). ນີ້ຄືຫຼັກການເຊື່ອມັ່ນຂອງອະຫ໌ລຸຊຊຸນນະຫ໌ ວັລຈະມາອະຫ໌ (ບັນດາຜູ້ທີ່ຕິດຕາມແບບຢ່າງຂອງທ່ານຣໍຊູລ ແລະ ເຫຼົ່າບັນດາຊໍຮາບະຫ໌) ທີ່ເປັນສາວົກຂອງທ່ານຣໍຊູລ ຊັລລັລລໍຮຸ ອະໄລຮີ ອະສັລລໍາ ແລະ ຜູ້ດໍາເນີນຕາມເຫຼົ່ານັ້ນດ້ວຍດີຕະຫຼອດມາ ເປັນຫຼັກການເຊື່ອມັ່ນທີ່ອີຫມໍາ ອະບຸລ ຮາຊັນ ອັລ-ອັຊອາຣີ

(ຂໍອັລລໍຫ໌ໂປດເມດຕາທ່ານດ້ວຍ) ໄດ້ຖ່າຍທອດມາໄວ້ໃນໜັງສືຂອງທ່ານທີ່ມີຊື່ວ່າ "ອັລ-ມະກໍລາຕ" ຈາກເຫຼົ່ານັກບັນທຶກຫະດີຊ ກຸ່ມອະຫ໌ລຸຊຊຸນນະຫ໌ ແລະ ຄົນອື່ນ ໆ ໃນບັນດາອຸລະມາ (ນັກປາດ) ອິສລາມ ເຊັ່ນດຽວກັບຜູ້ສັດທາທີ່ເຊື່ອມັ່ນກໍ່ໄດ້ຄັດລອກ ແລະ ຖ່າຍທອດຫຼັກການເຊື່ອມັ່ນນີ້ເຊັ່ນກັນ

ອັລ-ເອົາຊາອີຍ໌ (ຂໍອັລລໍຫ໌ໂປດເມດຕາທ່ານດ້ວຍ) ໄດ້ກ່າວວ່າ ອັຊ-ຊູຫຣີ ແລະ ມັ້ກຫູລ (ສອງນັກປາດລຸ້ນຕາບິອີນຫຼັງຈາກຊໍຮາບະຫ໌) ໄດ້ຖືກຖາມເຖິງໂອງການຕ່າງ ໆ ທີ່ກ່ຽວກັບສິຟາຕ (ຄຸນນະລັກສະນະ) ຂອງອັລລໍຫ໌ ທ່ານທັ້ງສອງຕອບວ່າ "ຈົ່ງເຮັດໃຫ້ຜ່ານໄປຕາມທີ່ມີປະກົດໃນຕົວບົດ" ອັລ-ວະລີດ ອິບນຸ ມຸສລິມ (ຂໍອັລລໍຫ໌ໂປດເມດຕາທ່ານດ້ວຍ) ກ່າວວ່າ ທ່ານອິໝ່າມມາລິກ, ອັລ-ເອົາຊາອີຍ໌, ອັລ-ໄລສ ອິບນຸ ສະອັດ ແລະ ຊຸຟຍານ ອັສ-ເສົາຣີຍ໌ (ຂໍອັລລໍຫ໌ໂປດເມດຕາພວກທ່ານດ້ວຍ) ໄດ້ຖືກຖາມເຖິງຫະດີຊຕ່າງ ໆ ທີ່ມີປະກົດກ່ຽວກັບເລື່ອງສິຟາຕ (ຂອງອັລລໍຫ໌) ບຸກຄົນທັ້ງໝົດນັ້ນຕອບເປັນສຽງດຽວກັນວ່າ "ຈົ່ງເຮັດໃຫ້ມັນຜ່ານໄປ ຢ່າງທີ່ມັນມີມາໂດຍບໍ່ມີການລະບຸວິທີການວ່າເປັນແນວໃດ" ອັລ-ເອົາຊາອີຍ໌ (ຂໍອັລລໍຫ໌ໂປດເມດຕາທ່ານດ້ວຍ) ກ່າວວ່າ "ເຮົາ ແລະ ກຸ່ມຕາບິອີນຈໍານວນຫຼາຍກ່າວວ່າ ແທ້ຈິງອັລລໍຫ໌ຊົງສະຖິດຢູ່ບົນບັນລັງຂອງພຣະອົງ ແລະ ເຮົາສັດທາເລື່ອງສິຟາຕທີ່ມີມາໃນສຸນນະຫ໌"

ເມື່ອທ່ານອໍບີອະຫ໌ ອິບນຸ ອັບດຸຣເຣາະມານ ອາຈານຂອງທ່ານອີຫມ່າມາລິກ (ຂໍອັລລໍຫ໌໌ໂປດເມດຕາທ່ານດ້ວຍ) ຖືກຖາມກ່ຽງກັບຄຸນນະລັກສະນະ ອັລ-ອິສຕິວາ (ການສະຖິດຢູ່) ທ່ານກ່າວວ່າ "(ຄວາມໝາຍຂອງ) ອັລ-ອິສຕິວາ ບໍ່ໄດ້ຢູ່ນອກເໜືອຄວາມເຂົ້າໃຈ ຫາກແຕ່ວິທີການນັ້ນບໍ່ໄດ້ຢູ່ໃນການເຂົ້າເຖິງຂອງສະຕິປັນຍາ ເຮົາ ອັລລໍຫ໌ເປັນຜູ້ສົ່ງສານນີ້ ທ່ານຣໍຊູລມີຫນ້າທີ່ຊີ້ແຈງເຜີຍແຜ່ ແລະ ເຮົາມີຫນ້າທີ່ຕ້ອງເຊື່ອ"

"ແລະເມື່ອທ່ານອີຫມ່າມາລິກຖືກຖາມກ່ຽວກັບເລື່ອງນີ້ ທ່ານຕອບວ່າ "(ຄວາມໝາຍຂອງ) ອັລ-ອິສຕິວາ ນັ້ນເປັນເລື່ອງທີ່ຮູ້ກັນດີ ແຕ່ທະວ່າ (ຂໍ້ເທັດຈິງ) ເປັນແນວໃດນັ້ນ ເປັນເລື່ອງທີ່ບໍ່ອາດຮູ້ໄດ້ ແລະ ການສັດທາຕໍ່ເລື່ອງນີ້ເປັນສິ່ງຈຳເປັນ (ດ້ວຍເຫດນີ້) ການຖາມເຖິງເລື່ອງນີ້ (ວ່າເປັນແນວໃດ) ຈຶ່ງເປັນບິດອະຫ໌" ແລ້ວທ່ານໄດ້ກ່າວແກ່ຜູ້ຖາມອີກວ່າ "ຂ້ອຍບໍ່ເຫັນທ່ານອື່ຫຍັງ ນອກຈາກເສຍຈາກຕ້ອງເປັນຄົນທີ່ຊົ່ວຊ້າ" ແລະ ທ່ານກໍ່ສັ່ງໃຫ້ລາວອອກໄປ.

ຫຍັງປະກົດມີລາຍງານເຊິ່ງມີຄວາມໝາຍເຊັ່ນດຽວກັນນີ້ ຈາກອຸມມຸລ ມຸອ໌ມີນີນ ອຸມມຸ ສະລາມະຫ໌ ຣໍດີຍັລລໍ ອັນຮາ ແລະ ທ່ານອີຫມາມ ອະບູ ອັບດຸຣເຣາະມານ ອັບດຸລລໍຫ໌ ອິບນຸ ມຸບາຣ໊ອກ ໄດ້ກ່າວວ່າ (ຂໍອັລລໍຫ໌ເມດຕາພວກທ່ານ) : (ເຮົາຮູ້ຈັກພຣະຜູ້ເປັນເຈົ້າຂອງເຮົາວ່າ ພຣະອົງຊົງປະທັບຢູ່ບົນຊັ້ນຟ້າທັ້ງຫຼາຍຂອງພຣະອົງ

ບົນບັນລັງຂອງພຣະອົງ
ໂດຍແຍກໄປຈາກສິ່ງຖືກສ້າງຂອງພຣະອົງ).
ຄຳເວົ້າຂອງບັນດາອິຫມ່າໃນບົດນີ້ມີຢູ່ຢ່າງຫຼວງຫຼາຍ
ເຮົາບໍ່ສາມາດຈະຄັດລອກມາໄວ້ໃນການບັນຍາຍຄັ້ງນີ້ໄດ້ໝົດ
ຜູ້ໃດຕ້ອງການຈະຮູ້ໃຫ້ຫຼາຍກວ່ານີ້
ກໍ່ຂໍໃຫ້ທົບທວນຂໍ້ຂຽນທີ່ອຸລະມາ ຂຽນໄວ້ໃນບົດນີ້ ເຊັ່ນໃນ ໜັງສື "ອັສ-ສຸນນະຫ໌" ຂອງທ່ານອັບດຸລລໍຫ໌ ລູກຂອງທ່ານອິຫມ່າອະຫ໌ມັດ, ໜັງສື "ອັດ-ເຕົາຮີດ" ຂອງທ່ານອິຫມ່າມຸຮໍາມັດ ອິບນຸ ຄຸໄຊມະຫ໌ ຜູ້ຍິ່ງໃຫຍ່, ໜັງສື "ອັສ-ສຸນນະຫ໌" ຂອງທ່ານອະບຸກໍາຊິມ ອັລ-ລາລະກາອີຍ໌ ອັດ-ຕໍບາຣີ, ໜັງສື "ອັສ-ສູນນະຫ໌" ຂອງອະບຸ ບັກຣ ອິບນຸ ອະບີ ອາສີມ ແລະ ຄໍາຕອບຂອງທ່ານເຊກຄຸລ ອິສລາມ ອິບນຸ ໄຕມີຍະຫ໌ ແກ່ຊາວເມືອງຫຸມາຫ໌ ເຊິ່ງເປັນຄໍາຕອບທີ່ຍິ່ງໃຫຍ່ ມີປະໂຫຍດລໍ້າຄ່າ
ທ່ານໄດ້ໃຫ້ຄວາມກະຈ່າງແຈ້ງໃນຄໍາຕອບນັ້ນ
ກ່ຽວກັບຫຼັກການເຊື່ອມັ່ນ (ອາກີດະຫ໌) ຂອງອະຫ໌ລຸຊຊຸນນະຫ໌ ພ້ອມຫຼັກຖານຈາກບັນຍັດສາສະໜາ ແລະ ຈາກສະຕິປັນຍາ ທີ່ຊີ້ແຈງເຖິງຄວາມຖືກຕ້ອງຂອງຄໍາເວົ້າຂອງອະຫ໌ລຸຊຊຸນນະຫ໌ ແລະ ຄວາມເທັດໃນວາຈາຂອງຝ່າຍກົງກັນຂ້າມ. ໃນທໍານອງດຽວກັນ ສານຂອງທ່ານທີ່ມີຊື່ວ່າ "ອັດ-ຕັດມູຣີຍະຫ໌" ກໍ່ໄດ້ຂະຫຍາຍຄວາມເລື່ອງນີ້ໄວ້ຢ່າງກວ້າງຂວາງ ໄດ້ຊີ້ແຈງເຖິງຫຼັກການເຊື່ອມັ່ນຂອງອະຫ໌ລຸຊຊຸນນະຫ໌
ດ້ວຍຫຼັກຖານຕາມທີ່ຖ່າຍທອດກັນມາ
(ຄືຫຼັກຖານຈາກອັລກຸຣອານ ແລະ ອັລຫາດີຊ) ແລະ ຫຼັກຖານທາງສະຕິປັນຍາ ທ່ານໄດ້ຕອບຜູ້ທີ່ໂຕ້ແຍ້ງ

ດ້ວຍສິ່ງທີ່ສະແດງເຖິງສັດຈະທຳ ແລະ ທຳລາຍລ້າງສິ່ງທີ່ເປັນເທັດ ເພື່ອໃຫ້ທຸກຄົນທີ່ເປັນນັກວິຊາການທີ່ມີວັດຖຸປະສົງດີ ແລະ ມີຄວາມປາດຖະນາທີ່ຈະຮູ້ຈັກສັດຈະທຳໄດ້ພິຈາລະນາໃນເລື່ອງນີ້, ໂດຍໃຜກໍ່ຕາມທີ່ຂັດແຍ້ງກັບອະຫ໌ລຸຊຊຸນນະຫ໌ໃນເລື່ອງທີ່ເຂົາເຫຼົ່ານັ້ນເຊື່ອມັ່ນກ່ຽວກັບບົດວ່າດ້ວຍພຣະນາມ ແລະ ຄຸນນະລັກສະນະຂອງອັລລໍຫ໌ ແນ່ນອນເຂົາຜູ້ນັ້ນຈະຕົກຢູ່ໃນຄວາມຂັດແຍ້ງກັບຫຼັກຖານແຫ່ງຄຳພີອັລ-ກຸຣອານ ແລະ ສຸນນະຫ໌ ຫຼື ແມ້ແຕ່ຫຼັກຖານແຫ່ງສະຕິປັນຍາ ອີກທັ້ງຍັງຂັດແຍ້ງຢ່າງຊັດແຈ້ງກັບທຸກສິ່ງທີ່ເຂົາຢືນຢັນ ແລະ ປະຕິເສດ.

ສ່ວນອະຫ໌ລຸຊຊຸນນະຫ໌ນັ້ນ ພວກເຂົາໄດ້ຢືນຢັນໃຫ້ກັບອັລລໍຫ໌ ໃນສິ່ງທີ່ພຣະອົງໄດ້ຊົງຢືນຢັນແກ່ຕົວຂອງພຣະອົງເອງ ໃນຄຳພີອັນມີກຽດຂອງພຣະອົງ ຫຼື ທີ່ທ່ານຣໍຊູລຂອງພຣະອົງໄດ້ຢືນຢັນໃຫ້ກັບພຣະອົງໄວ້ໃນສຸນນະຫ໌ທີ່ຖືກຕ້ອງຂອງທ່ານ ອັນເປັນການຢືນຢັນທີ່ບໍ່ມີການລະບຸຕົວຢ່າງ (ຫຼືປຽບທຽບ) ແລະ ເຂົາເຫຼົ່ານັ້ນໄດ້ຖືວ່າພຣະອົງຊົງບໍລິສຸດປາດສະຈາກຄວາມສະເຫມືອນ ຫຼື ຄວາມຄ້າຍຄືກັບສິ່ງຖືກສ້າງຂອງພຣະອົງ ທັ້ງນີ້ໂດຍບໍ່ຖືວ່າຄຸນນະລັກສະນະເຫຼົ່ານັ້ນ ເປັນໂມຂະສຳຫຼັບພຣະອົງ ດັ່ງນັ້ນບຸກຄົນເຫຼົ່ານັ້ນຈຶ່ງໄດ້ຮັບໄຊຊະນະ

ໂດຍປອດໄພຈາກຄວາມຂັດແຍ້ງ ແລະ ປະຕິບັດຕາມຫຼັກຖານທັ້ງມວນ ນີ້ກໍ່ຄືກິດຂອງອັລລໍຫ໌ ຜູ້ທີ່ຍຶດມັ່ນຕໍ່ສັດຈະທໍາເຊິ່ງພຣະອົງໄດ້ແຕ່ງຕັ້ງບັນດາຣໍຊູລຂອງພຣະອົງມາ ເຂົາຜູ້ນັ້ນຈະໃຊ້ຄວາມພະຍາຍາມຢ່າງເຕັມທີ່ເພື່ອບັນລຸສັດຈະທໍາດັ່ງກ່າວ ແລະ ມີຄວາມບໍລິສຸດຕໍ່ອັລລໍຫ໌ດ້ວຍການຂໍວິງວອນຕໍ່ພຣະອົງໃຫ້ຊ່ວຍເຫຼືອປະຄັບປະຄອງ ຈົນເຂົາໄດ້ພົບກັບສັດຈະທໍານັ້ນ ແລະ ຂໍໃຫ້ພຣະອົງສະແດງຂໍ້ພິສູດຂອງພຣະອົງໃຫ້ເດັ່ນແຈ້ງ ໃຫ້ເປັນເຊັ່ນທີ່ພຣະອົງມີດໍາລັດວ່າ :

﴿بَلْ نَقْذِفُ بِالْحَقِّ عَلَى الْبَاطِلِ فَيَدْمَغُهُ فَإِذَا هُوَ زَاهِقٌ﴾

(ແຕ່ທະວ່າເຮົາຈະຂວ້າງສັດຈະທໍາລົງບົນຄວາມເທັດ ແລ້ວມັນກໍ່ຈະລົບລ້າງຄວາມເທັດ ເຊິ່ງເມື່ອນັ້ນແຫລະ ມັນຈະສູນສະລາຍໄປ) (ໂອງການທີ່ 21 ບົດທີ່ 18). ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَلَا يَأْتُونَكَ بِمَثَلٍ إِلَّا جِئْنَاكَ بِالْحَقِّ وَأَحْسَنَ تَفْسِيرًا٣٣﴾

(ແລະພວກເຂົາຈະບໍ່ນໍາຂໍ້ປຽບທຽບ (ໃນເຊິ່ງຄັດຄ້ານທີ່ເຫລວໄຫລໃດ ໆ) ມາສະເໜີຕໍ່ເຈົ້າ(ມຸຮໍາມັດ) ເວັ້ນແຕ່ເຮົາຈະໄດ້ນໍາຄວາມຈິງມາໃຫ້ເຈົ້າ ແລະ ການອະທິບາຍຢ່າງດີຍິ່ງແກ່ເຈົ້າ (ເພື່ອຕອບໂຕ້) (ໂອງການທີ່ 25 ບົດທີ່ 33). ອັລ-ຫາຟິຊ ອິບນຸ ກະຊີຣ ໄດ້ກ່າວໄວ້ໃນໜັງສືຕັຟຊີຣຂອງທ່ານ ເຊິ່ງເປັນໜັງສືທີ່ແຜ່ຫຼາຍ ເມື່ອທ່ານອະທິບາຍພຣະດໍາລັດຂອງອັລລໍຫ໌ຕະອາລາທີ່ວ່າ

(ຄວາມວ່າ "ແທ້ຈິງພຣະຜູ້ເປັນເຈົ້າຂອງພວກເຈົ້ານັ້ນ ຄືອັລລໍຫ໌ຜູ້ຊົງສ້າງບັນດາຊັ້ນຟ້າ ແລະ ແຜ່ນດິນພາຍໃນຫົກມື້ ແລ້ວຊົງສະຖິດຢູ່ບົນບັນລັງ" (ໂອງການທີ່ 7 ບົດທີ່ 54). ທ່ານໄດ້ກ່າວເຖິງບົດນີ້ ດ້ວຍຄໍາອະທິບາຍອັນສົມຄວນທີ່ຈະຄັດລອກມາກ່າວໄວ້ ນະ ທີ່ນີ້. ທ່ານອິບນຸ ກະຊີຣ (ຂໍອັລລໍຫ໌ເມດຕາທ່ານ) ໄດ້ກ່າວໄວ້ຕາມຕົວບົດ "ກ່ຽວກັບເລື່ອງນີ້ ຄົນທັງຫຼາຍເວົ້າກັນຫຼວງຫຼາຍເຫລືອເກີນ ນະ ທີ່ນີ້ ບໍ່ແມ່ນບ່ອນທີ່ຈະມາຕີແຜ່ຄວາມເຫັນເຫຼົ່ານັ້ນ ຫາກແຕ່ໃນເລື່ອງນີ້ ເຮົາຂໍດໍາເນີນຕາມແນວທາງສະລັຟຊໍລິຫ໌ (ບັນພະຊົນທີ່ດີລຸ່ນທໍາອິດ) ເຊັ່ນ ທ່ານອີຫມ່າມາລິກ, ອັລ-ເອົາຊາອີ, ອັຊ-ເຊົາຣີ, ອັລ-ໄລຊ໌ ອິບນຸ ສະອັດ, ອີຫມ່າ ອັຊ-ຊາຟີອີ, ອີຫມ່າອະຫ໌ມັດ, ອິສຮາກ ອິບນຸ ຣໍຮາໄວ ແລະ ອື່ນໆ ທີ່ເປັນຜູ້ນໍາຂອງມຸສລິມໃນອະດີດ ແລະ ປັດຈຸບັນ. ແລະ ການດໍາເນີນຕາມແນວທາງຂອງສະລັຟຊໍລິຫ໌ກໍ່ຄືການເຮັດໃ ຫ້ເລື່ອງນີ້ຜ່ານໄປຕາມທີ່ປະກົດໃນຕົວບົດໂດຍບໍ່ມີການຕັ້ງ ຄໍາຖາມວ່າເປັນຢ່າງໃດ ບໍ່ມີການປຽບທຽບວ່າເຫມືອນກັບສິ່ງໃດ ແລະ ບໍ່ປະຕິເສດຄຸນນະລັກສະນະແຫ່ງການເປັນພຣະເຈົ້າ ແລະ ສິ່ງທີ່ແຜ້ວຜ່ານເຂົ້າມາໃນສະມອງຂອງຜູ້ປຽບທຽບວ່າສະເຫ ມືອນກັບພຣະອົງ ແລະ ບໍ່ມີສິ່ງໃດທີ່ທຽບເທົ່າກັບພຣະອົງ ແລະ ພຣະອົງນັ້ນສະດັບຟັງ ຊົງເບິ່ງເຫັນເລື່ອງຕ່າງ ໆ ເປັນເຫມືອນເຊັ່ນບັນດາອີຫມ່າຕ່າງ ໆ ເຊັ່ນ ທ່ານອີຫມ່ານະອີມ ອິບນຸ ຫັມມາດ ອັລ-ຄຸຊາອີ

ອາຈານຂອງອິຫມ່າອັລ-ບຸກຄໍຣີ ໄດ້ກ່າວຍ້ຳໄວ້ວ່າ "ຜູ້ໃດທີ່ປຽບທຽບອັລລໍຫ໌ກັບສິ່ງຖືກສ້າງຂອງພຣະອົງ ເຂົາຜູ້ນັ້ນໄດ້ຕົກສາສະໜາແລ້ວ (ເປັນກາຟີຣ) ຜູ້ໃດທີ່ປະຕິເສດສິ່ງທີ່ອັລລໍຫ໌ຊົງແຈ້ງຄຸນນະລັກສະນະຂອງພຣະອົງເອງແລ້ວ ເຂົາຜູ້ນັ້ນກໍ່ເປັນຜູ້ປະເສດການສັດທາໃນສິ່ງທີ່ອັລລໍຫ໌ ແລະ ຣໍຊູລໄດ້ບັນຍາຍຄຸນນະລັກສະນະຂອງພຣະອົງນັ້ນບໍ່ມີການປຽບທຽບໄດ້ວ່າຄືກັບສິ່ງໃດ ຜູ້ໃດຢືນຢັນເຫມາະສົມກັບຄວາມກຽງໄກຂອງພຣະອົງແລ້ວ ແລະ ໄດ້ປະຕິເສດຕໍ່ຄຸນນະລັກສະນະແຫ່ງຄວາມບົກພ່ອງຕ່າງ ໆ ຈາກພຣະອົງ ເຂົາຜູ້ນັ້ນກໍ່ໄດ້ດຳເນີນຢູ່ໃນແນວທາງທີ່ຖືກຕ້ອງ".

## ການສັດທາເຊື່ອຕໍ່ເທວະດາ ມະລາອິກະຫ໌

ສ່ວນການສັດທາ (ອີມານ) ຕໍ່ມະລາອິກະຫ໌ນັ້ນ ປະກອບດ້ວຍການອີມານຢ່າງສັ້ນໆ ດັ່ງນີ້ຄື ມຸສລິມຕ້ອງສັດທາວ່າ ອັລລໍຫ໌ຊົງບັງເກີດມະລາອິກະຫ໌ເພື່ອໃຫ້ພວກເຂົາເຄົາລົບພັກດີ ແລະ ເປັນບ່າວຮັບຄຳສັ່ງຂອງພຣະອົງ ແລະ ພຣະອົງຊົງບັນຍາຍຄຸນນະລັກສະນະຂອງພວກເຂົາເຫຼົ່ານັ້ນວ່າ ພວກເຂົາເປັນບ່າວທີ່ໄດ້ຮັບການຍົກຍ່ອງ ພວກເຂົາບໍ່ລ່ວງເກີນພຣະອົງບໍ່ວ່າຈະດ້ວຍວາຈາ ຫຼື ການກະທຳ ພວກເຂົາປະຕິບັດຕາມຄຳບັນຊາຂອງອັລລໍຫ໌ໂດຍບໍ່ມີການປະຕິເສດ ດັ່ງມີພຣະດຳລັດທີ່ວ່າ :

﴿يَعْلَمُ مَا بَيْنَ أَيْدِيهِمْ وَمَا خَلْفَهُمْ وَلَا يَشْفَعُونَ إِلَّا لِمَنِ ارْتَضَى وَهُمْ مِنْ خَشْيَتِهِ مُشْفِقُونَ٢٨﴾

(ພຣະອົງຊົງຮອບຮູ້ ສິ່ງທີ່ຢູ່ເບື້ອງຫນ້າພວກເຂົາ ແລະ ສິ່ງທີ່ຢູ່ເບື້ອງຫລັງພວກເຂົາ (ມະລາອິກະຫ໌) ແລະ ພວກເຂົາຈະບໍ່ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ໃດ ນອກຈາກຜູ້ທີ່ພຣະອົງຊົງພໍໃຈ (ອະນຸຍາດໃຫ້ຂໍ) ແລະ ຍ້ອນຄວາມຢ້ານກົວຕໍ່ພຣະອົງ ພວກເຂົາຈຶ່ງເນື້ອຕົວສັ່ນ) (ໂອງການທີ່ 21 ບົດທີ່ 28).

ມະລາອິກະຫ໌ນັ້ນແບ່ງອອກເປັນຫຼາຍພວກ ບາງພວກໄດ້ຮັບມອບໝາຍໃຫ້ແບກຫາມບັນລັງ ບາງພວກເປັນຜູ້ດູແລຮັກສາສວນສະຫວັນ ແລະ ຂຸມນະຣົກ ບາງພວກໄດ້ຮັບມອບໃຫ້ທຳໜ້າທີ່ເກັບຮັກສາບັນຊີກຳ (ດີແລະຊົ່ວ) ຂອງປວງມະນຸດ ເຮົາຕ້ອງສັດທາທຸກຢ່າງທີ່ຣໍຊູລລຸລລໍຫ໌ໄດ້ຖ່າຍທອດໃຫ້ແກ່ເຮົາ ເຊັ່ນມະລາອິກະຫ໌ ຍິບຣີລ ເປັນຜູ້ຮັບໂອງການຈາກອັລລໍຫ໌ ມາຖ່າຍທອດໃຫ້ແກ່ບັນດາຣໍຊູລ, ມີກາອີລ ເປັນຍາມຮັກສາການນະຣົກ, ອິສຣໍຟີລ ເປັນຜູ້ເຮັດໜ້າທີ່ເປົ່າສັງ ນະ ວັນໂລກໜ້າ ເຫຼົ່ານີ້ເປັນຕົ້ນ ທັງນີ້ເພາະມີການລະບຸໄວ້ໃນຫາດິຊຊໍຮີຫ໌ຫຼາຍຫາດິຊ ຊຶ່ງແຈ້ງໄວ້ໃນຕຳລາຫາດິຊຊໍຮີຫ໌ ເຊິ່ງລາຍງານໂດຍທ່ານຍິງອາອີຊະຫ໌ -ຣໍດີຍັລລໍຮຸ ອັນຮາ- ມີຄວາມວ່າ ທ່ານນະບີໄດ້ກ່າວວ່າ:

«خلقت الملائكة من نور وخلق الجان من مارج من نار وخلق آدم مما وصف لكم»

ຄວາມວ່າ: " ມະລາອິກະຫ໌ນັ້ນຖືກບັງເກີດມາຈາກລັດສະໝີ ແລະ ຍິນນັ້ນຖືກບັງເກີດມາຈາກເປວໄຟ ສ່ວນອາດຳນັ້ນໄດ້ຖືກບັງເກີດຈາກສິ່ງທີ່ໄດ້ບັນຍາຍໃຫ້ແກ່ພວກທ່ານໄດ້ຮັບຮູ້ແລ້ວ"[1] ບັນທຶກໂດຍທ່ານມຸສລິມ ໃນຊໍຮີຫ໌ຂອງທ່ານ.

## ການສັດທາຕໍ່ຄຳພີຕ່າງ ໆ

ໃນທຳນອງດຽວກັນການສັດທາຕໍ່ບັນດາຄຳພີ ກໍ່ຈຳເປັນຕ້ອງສັດທາພໍເປັນສັງເຂບດັ່ງນີ້, ອັລລໍຫ໌ຕະອາລາໄດ້ປະທານຄຳພີໃຫ້ແກ່ບັນດານະບີ ແລະ ຣໍຊູລເພື່ອມາຊີ້ແຈ້ງເຖິງສິດຂອງພຣະອົງ ແລະ ເຊີນຊວນສູ່ພຣະອົງ ດັ່ງທີ່ໄດ້ຕຣັດວ່າ:

﴿لَقَدْ أَرْسَلْنَا رُسُلَنَا بِالْبَيِّنَاتِ وَأَنْزَلْنَا مَعَهُمُ الْكِتَابَ وَالْمِيزَانَ لِيَقُومَ النَّاسُ بِالْقِسْطِ﴾

(ໂດຍແນ່ນອນ ເຮົາໄດ້ສົ່ງບັນດາຣໍຊູລຂອງເຮົາພ້ອມດ້ວຍຫລັກຖານທັ້ງຫລາຍອັນຊັດແຈ້ງ ແລະ ເຮົາໄດ້ປະທານລົງມາພ້ອມກັບພວກເຂົາເຊິ່ງຄຳພີ ແລະ ເຄື່ອງໝາຍ ເພື່ອມະນຸດຈະໄດ້ດຳລົງຢູ່ບົນຄວາມທ່ຽງທຳ) (ໂອງການທີ່ 57 ບົດທີ່ 25). ແລະພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿كَانَ النَّاسُ أُمَّةً وَاحِدَةً فَبَعَثَ اللَّهُ النَّبِيِّينَ مُبَشِّرِينَ وَمُنْذِرِينَ وَأَنْزَلَ مَعَهُمُ الْكِتَابَ بِالْحَقِّ لِيَحْكُمَ بَيْنَ النَّاسِ فِيمَا اخْتَلَفُوا فِيهِ وَمَا اخْتَلَفَ فِيهِ﴾

(ມະນຸດນັ້ນເຄີຍເປັນປະຊາຊາດດຽວກັນ ພາຍຫລັງອັລລໍຫ໌ໄດ້ສົ່ງບັນດານະບີມາໃນຖານະເປັນຜູ້ແຈ້ງຂ່າວດີ ແລະ ຜູ້ຕັກເຕືອນ ແລະ

[1] ມຸສລິມ ຫນັງສື ອັຊຊະດີ ວັຣຣ໌ກໍອິກ (2996), ອະມັດ (6/153)

ໄດ້ລົງປະທານຄຳພີອັນປະກອບໄປດ້ວຍຄວາມຈິງລົງມາກັບພວກເຂົາດ້ວຍ ເພື່ອວ່າຄຳພີນັ້ນຈະໄດ້ຕັດສິນລະຫວ່າງມະນຸດໃນສິ່ງທີ່ພວກເຂົາຂັດແຍ້ງກັນ ແລະ ບໍ່ມີໃຜຂັດແຍ້ງໃນຄຳພີນັ້ນ) (ໂອງການທີ່ 2 ບົດທີ່ 213).

ແລະ ເຮົາສັດທາຕໍ່ຄຳພີຕ່າງ ໆ ທີ່ອັລລໍຫ໌ໄດ້ລົງຂະນານນາມໄວ້ເຊັ່ນ ຄຳພີເຕົາຣໍຫ໌ (ໄບເບີນເກົ່າ) ອິນຈີລ (ໄບເບີນໃຫມ່) ອັຊ-ຊະບູຣ ແລະ ອັລ-ກຸຣອານເປັນຕົ້ນ ເຊິ່ງອັລ-ກຸຣອານນັ້ນເປັນຄຳພີທີ່ສົມບູນແບບທີ່ສຸດ ແລະ ເປັນຄຳພີສຸດທ້າຍທີ່ມີໃຈຄວາມຄອບຄຸມຄຳພີກ່ອນ ໆ ມີໃຈຄວາມຢືນຢັນເນື້ອຫາທີ່ລະບຸໄວ້ໃນຄຳພີກ່ອນ ໆ ແລະ ເປັນຄຳພີທີ່ທຸກປະຊາຊາດຈຳເປັນຕ້ອງດຳເນີນຕາມ ແລະ ນຳມາປະຕິບັດໃຊ້ໃນຖານະເປັນຂໍ້ບັງຄັບສູງສຸດໃນການຕັດສິນຄວາມ ຫຼື ຂໍ້ຂັດແຍ້ງໃນທຸກສັງຄົມມະນຸດ ລວມທັ້ງຫະດິຊທີ່ຖືກຕ້ອງຂອງທ່ານນະບີດ້ວຍ ເພາະວ່າອັລລໍຫ໌ໄດ້ລົງແຕ່ງຕັ້ງນະບີມຸຮຳມັດ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ເປັນທູດຂອງອັລລໍຫ໌ມາສູ່ມະນຸດ ແລະ ຍິນ(ຜີ) ທັ້ງມວນ ພຣະອົງໄດ້ລົງປະທານອັລກຸຣອານໃຫ້ແກ່ທ່ານນະບີມຸຮຳມັດ ເພື່ອວ່າທ່ານຈະໄດ້ໃຊ້ເປັນກົດຫມາຍຕັດສິນຂໍ້ພິພາດລະຫວ່າງປວງມະນຸດ ພຣະອົງໄດ້ລົງປະທານອັລກຸຣອານເພື່ອໃຊ້ບຳບັດສິ່ງຊົ່ວຮ້າຍທີ່ສຸມຢູ່ໃນເອິກ ແລະ ຊີ້ແຈ້ງໃຫ້ຄວາມກະຈ່າງແຈ້ງແກ່ທຸກສິ່ງ ຊີ້ນຳມະນຸດໄປສູ່ທາງທີ່ທ່ຽງທຳ ແລະ

ເປັນການປະທານຄວາມເມດຕາໃຫ້ແກ່ບັນດາຜູ້ສັດທາ ພຣະອົງໄດ້ກ່າວວ່າ:

﴿وَهَذَا كِتَابٌ أَنْزَلْنَاهُ مُبَارَكٌ فَاتَّبِعُوهُ وَاتَّقُوا لَعَلَّكُمْ تُرْحَمُونَ١٥٥﴾

(ແລະນີ້ແມ່ນຄຳພີທີ່ເຮົາປະທານລົງມາ ເປັນຄຳພີທີ່ມີຄວາມຈຳເລີນປະເສີດ ດັ່ງນັ້ນຈົ່ງປະຕິບັດຕາມຄຳພີນີ້ເຖີດ ແລະ ຈົ່ງຢຳເກງ ເພື່ອວ່າພວກເຈົ້າຈະໄດ້ຮັບຄວາມເມດຕາ) (ໂອງການທີ່ 6 ບົດທີ່ 155). ແລະອັລລໍຫ໌ໄດ້ຕຣັດວ່າ:

﴿وَنَزَّلْنَا عَلَيْكَ الْكِتَابَ تِبْيَانًا لِكُلِّ شَيْءٍ وَهُدًى وَرَحْمَةً وَبُشْرَى لِلْمُسْلِمِينَ﴾

(ແລະ ເຮົາໄດ້ປະທານຄຳພີແກ່ເຈົ້າ ເພື່ອຊີ້ແຈງແກ່ທຸກສິ່ງ ແລະ ເພື່ອເປັນຂໍ້ຊີ້ນຳສູ່ທາງຖືກຕ້ອງ ແລະ ຄວາມເມດຕາ ແລະ ເປັນຂ່າວດີແກ່ບັນດາມຸສລິມ) (ໂອງການທີ່ 16 ບົດທີ່ 89). ແລະ ພຣະອົງກ່າວຕື່ມອີກວ່າ:

﴿قُلْ يَا أَيُّهَا النَّاسُ إِنِّي رَسُولُ اللَّهِ إِلَيْكُمْ جَمِيعًا الَّذِي لَهُ مُلْكُ السَّمَاوَاتِ وَالْأَرْضِ لَا إِلَهَ إِلَّا هُوَ يُحْيِي وَيُمِيتُ فَآمِنُوا بِاللَّهِ وَرَسُولِهِ النَّبِيِّ الْأُمِّيِّ الَّذِي يُؤْمِنُ بِاللَّهِ وَكَلِمَاتِهِ وَاتَّبِعُوهُ لَعَلَّكُمْ تَهْتَدُونَ١٥٨﴾

(ຈົ່ງກ່າວເຖີດ (ມູຮຳມັດ) ວ່າໂອ້ມະນຸດທັງຫລາຍ ແທ້ຈິງຂ້ອຍຄືຣໍຊູລຂອງອັລລໍຫ໌ມາຍັງພວກທ່ານທັງມວນ ຊຶ່ງພຣະອົງນັ້ນອຳນາດແຫ່ງບັນດາຊັ້ນຟ້າ ແລະ ແຜ່ນດິນເປັນຂອງພຣະອົງ ບໍ່ມີຜູ້ໃດຄວນໄດ້ຮັບການເຄົາລົບສັກກະລະຍົກເວັ້ນພຣະອົງເ ທ່ານັ້ນ ຜູ້ຊົງໃຫ້ຊີວິດ ແລະ ເຮັດໃຫ້ຕາຍ ດັ່ງນັ້ນພວກທ່ານຈົ່ງສັດທາຕໍ່ອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ແລະ ພວກເຈົ້າຈົ່ງປະຕິບັດຕາມເຂົາເທີດ ເພື່ອວ່າພວກເຈົ້າຈະໄດ້ຮັບຄຳຊີ້ນຳ (ສູ່ທາງທີ່ຖືກຕ້ອງ)

(ໂອງການທີ່ 7 ບົດທີ່ 158). ໂອງການຕ່າງ ໆ ໃນຄວາມໝາຍເຊັ່ນນີ້ມີຢູ່ຫຼວງຫລາຍ.

## ການສັດທາຕໍ່ບັນດາຣໍຊູລ (ສາດສະດາ)

ໃນທໍານອງດຽວກັນ ກ່ຽວກັບບັນດາຣໍຊູລນັ້ນຈໍາເປັນທີ່ເຮົາຈະຕ້ອງສັດທາໂດຍສັງເຂບ ແລະ ໂດຍລະອຽດ ສະນັ້ນເຮົາຕ້ອງສັດທາວ່າແທ້ຈິງອັລລໍຫ໌ໄດ້ສົ່ງບັນດາຣໍຊູລມາຍັງປວງບ່າວຂອງ ພຣະອົງໃນຖານະເປັນຜູ້ບອກຂ່າວດີ ຜູ້ຕັກເຕືອນ ແລະ ຜູ້ເຊີນຊວນໄປສູ່ສັດຈະທໍາ ດັ່ງນັ້ນຜູ້ໃດທີ່ຝ່າຝືນບໍ່ຍອມເຊື່ອຟັງທ່ານເຫຼົ່ານັ້ນ ພວກເຂົາຍ່ອມໄດ້ຮັບຄວາມຜິດຫວັງ ແລະ ຄວາມເສົ້າໂສກເສຍໃຈ ຜູ້ເປັນຣໍຊູລຄົນສູດທ້າຍ ແລະ ເປັນຣໍຊູລທີ່ປະເສີດທີ່ສຸດ ກໍ່ຄືນະບີຂອງເຮົາ ທ່ານນະບີມຸຮໍາມັດ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ດັ່ງໂອງການຂອງອັລລໍຫ໌ທີ່ວ່າ:

﴿وَلَقَدْ بَعَثْنَا فِي كُلِّ أُمَّةٍ رَسُولًا أَنِ اعْبُدُوا اللَّهَ وَاجْتَنِبُوا الطَّاغُوتَ﴾

(ແລະໂດຍແນ່ນອນ ເຮົາໄດ້ແຕ່ງຕັ້ງຣໍຊູລມາໄປຍັງແຕ່ລະປະຊາຊາດ (ໂດຍຣໍຊູລຈະກ່າວແກ່ປະຊາຊາດນັ້ນ ໆ ວ່າ) ພວກທ່ານຈົ່ງເຄົາລົບພັກດີຕໍ່ອັລລໍຫ໌ ແລະ ຈົ່ງຫຼີກຫນີອອກຫ່າງຈາກພວກຕໍາກູດຮູບປັ້ນ(ຈະເວັດ) (ໂອງການທີ່ 16 ບົດທີ່ 36). ແລະ ພຣະອົງກ່າວຕື່ມອີກວ່າ:

﴿رُسُلًا مُبَشِّرِينَ وَمُنْذِرِينَ لِئَلَّا يَكُونَ لِلنَّاسِ عَلَى اللَّهِ حُجَّةٌ بَعْدَ الرُّسُلِ﴾

(ຄືບັນດາຣໍຊູລໃນຖານະຜູ້ແຈ້ງຂ່າວດີ ແລະ ໃນຖານະຜູ້ຕັກເຕືອນ ເພື່ອວ່າມະນຸດຈະບໍ່ໄດ້ມີຂໍ້ອ້າງໃດ ໆ

ທີ່ຈະເກົາຕົວກັບອັລລໍຫ໌ໄດ້ອີກ ຫລັງຈາກບັນດາຣໍຊູລເຫຼົ່ານັ້ນ (ໄດ້ປະກາດສັດຈະທຳແລ້ວ) (ໂອງການທີ່ 4 ບົດທີ່165). ແລະ ພຣະອົງກ່າວຕື່ມອີກວ່າ:

﴿مَا كَانَ مُحَمَّدٌ أَبَا أَحَدٍ مِنْ رِجَالِكُمْ وَلَكِنْ رَسُولَ اللَّهِ وَخَاتَمَ النَّبِيِّينَ﴾

(ມູຮໍາມັດ ບໍ່ໄດ້ເປັນພໍ່ຂອງຜູ້ໃດຈາກບັນດາບຸລຸດຂອງພວກເຈົ້າ ແຕ່ເປັນຣໍຊູລຂອງອັລລໍຫ໌ ແລະ ເປັນນະບີຄົນສຸດທ້າຍ) (ໂອງການທີ່ 33 ບົດທີ່ 40). ຜູ້ໃດໃນບັນດານະບີທີ່ອັລລໍຫ໌ໄດ້ລືອງລະບຸຊື່ ໂດຍການບອກເລົ່າຂອງທ່ານຣໍຊູລ ເຮົາກໍ່ສັດທາຕໍ່ພວກທ່ານຢ່າງເຈາະຈົງແນ່ນອນ ດັ່ງເຊັ່ນທ່ານນະບີນູຫ໌ ຮູດ ຊໍລິຫ໌ ອິບຣໍຫີມ ແລະ ທ່ານອື່ນ ໆ (ຂໍພອນອັນປະເສີດ ແລະ ຄວາມສັນຕິຈົ່ງມີແດ່ນະບີຂອງເຮົາ ແລະ ແດ່ບັນດານະບີທັ້ງຫຼາຍ.

## ການສັດທາຕໍ່ວັນອາຄີເຣາະຫ໌ (ໂລກໜ້າ)

ສ່ວນຄວາມເຊື່ອຕໍ່ວັນສຸດທ້າຍ(ວັນສິ້ນໂລກ) ຄື:

ສ່ວນການສັດທາຕໍ່ວັນໂລກໜ້ານັ້ນ ຄືການສັດທາຕໍ່ທຸກສິ່ງທີ່ອັລລໍຫ໌ ແລະ ຣໍຊູລໄດ້ບອກໄວ້ ກໍ່ແມ່ນສິ່ງທີ່ຈະເກີດຂຶ້ນຫຼັງຈາກການຕາຍ ເຊັ່ນ ການຖືກທໍລະມານ ຫຼື ໄດ້ຮັບຄວາມສຸກໃນລະຫວ່າງຢູ່ໃນຫລຸມຝັງສົບ ຕະຫຼອດຈົນສິ່ງທີ່ຈະເກີດຂຶ້ນໃນວັນກິຍາມະຫ໌ ເຊິ່ງເປັນມື້ຂອງການຟື້ນຊີວິດຂຶ້ນມາໃຫມ່ ຈະເກີດຄວາມໂກລາຫົນ ຄວາມຄັບຂັນ ຂໍ່ວຂ້າມ ລືງລັ່ງນ້ຳໜັກ ການສອບສວນ ການຕອບແທນ ແລະ

ການປະກາດກຳຄວາມດີ ແລະ ຊົ່ວຂອງມວນມະນຸດ ສິ່ງເຫຼົ່ານີ້ລວມຢູ່ໃນການສັດທາຕໍ່ວັນໂລກໜ້າ ດ້ວຍເຫດນີ້ຈຶ່ງມີຜູ້ຮັບສະມຸດບັນທຶກຄວາມກຳຂອງຕົນດ້ວຍມືຂວາ ບ້າງຄົນກໍ່ຮັບດ້ວຍມືຊ້າຍ ບ້າງຄົນກໍ່ຮັບທາງຂ້າງຫຼັງ, ການສັດທາໃນເລື່ອງສະນ້ຳຂອງທ່ານນະບີມຸຮຳມັດ ຊໍລັລລໍຮຸ ອະໄລຮີ ວະສັລລຳ ເຊິ່ງຈະມີຜູ້ຄົນມາດື່ມນ້ຳທີ່ບໍ່ນ້ຳນີ້ ການສັດທາຕໍ່ສະຫວັນ ນະຣົກ ການພົບກັບອັລລໍຫ໌ຂອງບັນດາຜູ້ສັດທາ ການໂອລົມຂອງພຣະອົງກັບພວກເຂົາເຫຼົ່ານັ້ນ ແລະ ອື່ນ ໆ ອີກນອກເໜືອຈາກສິ່ງທີ່ກ່າວມານັ້ນ ກໍ່ຢູ່ໃນການສັດທາຕໍ່ວັນໂລກໜ້າເຊັ່ນກັນ ສະນັ້ນຈຶ່ງຈຳເປັນຕ້ອງສັດທາ ເຊື່ອມັ່ນຕໍ່ເລື່ອງດັ່ງກ່າວທັ້ງໝົດຕາມທີ່ອັລລໍຫ໌ ແລະ ຣໍຊູລໄດ້ແຈ້ງໄວ້.

## ການສັດທາຕໍ່ກົດກຳໜົດສະພາວະ (ກໍດັຣ)

ສ່ວນການສັດທາຕໍ່ກົດກຳໜົດສະພາວະນັ້ນ ປະກອບດ້ວຍການເຊື່ອຕໍ່ສີ່ປະການ ດັ່ງນີ້ຄື:

ປະການທຳອິດ: ສັດທາວ່າອັລລໍຫ໌ນັ້ນຊົງຮັບຮູ້ເຖິງທຸກສິ່ງທີ່ມີມາໃນອາດີດ ແລະ ທີ່ຈະເກີດຂຶ້ນໃນອະນາຄົດ ພຣະອົງຊົງຮູ້ເຖິງບັດໄຈຍັງຊີບ ຫຼື ໂຊກລາບຕ່າງ ໆ (ຣິສກີ) ກຳໜົດອາຍຸຂອງບຸກຄົນເຫຼົ່ານັ້ນ ມື້ຕາຍ ມື້ເກີດ ແລະ ອື່ນ ໆ ເຊິ່ງບໍ່ມີສິ່ງໃດເປັນສິ່ງຊ່ອນເລັ້ນແກ່ພຣະອົງ ດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ:

﴿أَنَّ اللهَ بِكُلِّ شَيْءٍ عَلِيمٌ﴾

(ແທ້ຈິງອັລລໍຫ໌ນັ້ນຊົງຮອບຮູ້ໃນທຸກສິ່ງທຸກຢ່າງ) (ໂອງການທີ່ 2 ບົດທີ່ 231). ແລະພຣະຜູ້ຊົງເດສານຸພາບໄດ້ກ່າວວ່າ:

﴿لِتَعْلَمُوا أَنَّ اللَّهَ عَلَى كُلِّ شَيْءٍ قَدِيرٌ وَأَنَّ اللَّهَ قَدْ أَحَاطَ بِكُلِّ شَيْءٍ عِلْمًا﴾

(ເພື່ອພວກເຈົ້າຈະໄດ້ຮູ້ວ່າ ແທ້ຈິງອັລລໍຫ໌ນັ້ນເປັນຜູ້ຊົງອານຸພາບຫລາຍກວ່າທຸກສິ່ງທຸກຢ່າງ ແລະ ແທ້ຈິງອັລລໍຫ໌ນັ້ນຊົງຫ້ອມລ້ອມທຸກສິ່ງຢ່າງໄວ້ດ້ວຍຄວາມຮອບຮູ້ (ຂອງພຣະອົງ) (ໂອງການທີ່ 65 ບົດທີ່ 12).

ປະການທີ່ສອງ: ສັດທາວ່າພຣະອົງຊົງບັນທຶກສິ່ງທີ່ພຣະອົງຊົງກຳຫນົດເປັນກົດສະພາວະການ (ເຫດການທີ່ຈະເປັນໄປຕາມທຳມະຊາດ) ດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ:

﴿قَدْ عَلِمْنَا مَا تَنْقُصُ الْأَرْضُ مِنْهُمْ وَعِنْدَنَا كِتَابٌ حَفِيظٌ ٤﴾

(ແນ່ນອນ ເຮົາຮູ້ດີເຖິງສິ່ງທີ່ແຜ່ນດິນກັດກິນຈາກ(ຮ່າງຂອງ) ພວກເຂົາເຫຼົ່ານັ້ນ (ຈົນສະລາຍ) ແລະ ນະທີ່ເຮົານັ້ນມີບັນທຶກທີ່ຖືກຮັກສາໄວ້) (ໂອງການທີ່ 50 ບົດທີ່ 4). ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَكُلَّ شَيْءٍ أَحْصَيْنَاهُ فِي إِمَامٍ مُبِينٍ﴾

(ແລະຮ່ອງຮອຍຂອງພວກເຂົາ ແລະ ທຸກສິ່ງນັ້ນ ເຮົາໄດ້ລວບລວມໄວ້ຢ່າງຄົບຖ້ວນໃນບັນທຶກອັນຊັດແຈ້ງ) (ໂອງການທີ່ 36 ບົດທີ່ 12). ແລະ ພຣະອົງກ່າວຕື່ມອີກວ່າ:

﴿أَلَمْ تَعْلَمْ أَنَّ اللَّهَ يَعْلَمُ مَا فِي السَّمَاءِ وَالْأَرْضِ إِنَّ ذَلِكَ فِي كِتَابٍ إِنَّ ذَلِكَ عَلَى اللَّهِ يَسِيرٌ ٧٠﴾

(ເຈົ້າບໍ່ຮູ້ບໍ? ແທ້ຈິງອັລລໍຫ໌ຊົງຮອບຮູ້ສິ່ງທີ່ຢູ່ໃນຊັ້ນຟ້າ ແລະ ແຜ່ນດິນ ສິ່ງເຫຼົ່ານີ້ (ຖືກເກັບຮັກສາ) ຢູ່ໃນບັນທຶກ ແທ້ຈິງສິ່ງເຫຼົ່ານັ້ນເປັນເລື່ອງງ່າຍດາຍສໍາລັບອັລລໍຫ໌) (ໂອງການທີ່ 22 ບົດທີ່ 70).

ປະການທີ່ສາມ: ສັດທາຕໍ່ພຣະປະສົງຂອງອັລລໍຫ໌ ສະນັ້ນສິ່ງໃດທີ່ພຣະອົງຊົງປະສົງກໍ່ຈະໃຫ້ບັງເກີດຂຶ້ນ ແລະ ສິ່ງໃດທີ່ພຣະອົງບໍ່ຊົງປະສົງ ສິ່ງນັ້ນກໍ່ຈະບໍ່ເກີດຂຶ້ນ ພຣະອົງຊົງກ່າວວ່າ:

﴿إِنَّ اللَّهَ يَفْعَلُ مَا يَشَاءُ﴾

(ແທ້ຈິງອັລລໍຫ໌ຊົງກະທໍາໃນສິ່ງທີ່ພຣະອົງຊົງປະສົງ) (ໂອງການທີ່ 22 ບົດທີ່ 18). ແລະພຣະຜູ້ຊົງກຽງໄກໄດ້ກ່າວວ່າ:

﴿إِنَّمَا أَمْرُهُ إِذَا أَرَادَ شَيْئًا أَنْ يَقُولَ لَهُ كُنْ فَيَكُونُ ٨٢﴾

(ອັນແທ້ຈິງ ພຣະບັນຊາຂອງພຣະອົງນັ້ນເມື່ອພຣະອົງຊົງຕ້ອງການສິ່ງໃດ ພຣະອົງກໍຈະເວົ້າກັບມັນວ່າ ຈົ່ງເປັນ ແລ້ວມັນກໍຈະເປັນຂຶ້ນມາ) (ໂອງການທີ່ 36 ບົດທີ່ 82). ແລະ ພຣະອົງໄດ້ຕຣັດວ່າ:

﴿وَمَا تَشَاءُونَ إِلَّا أَنْ يَشَاءَ اللَّهُ ۚ إِنَّ اللَّهَ كَانَ عَلِيمًا حَكِيمًا ٣٠﴾

(ແລະພວກເຈົ້າຈະບໍ່ປະສົງ (ບໍ່ສໍາເລັດສິ່ງໃດ ໆ) ເວັ້ນແຕ່ອັລລໍຫ໌ຈະມີພຣະປະສົງ (ໃຫ້ມັນເກີດຂຶ້ນ) ແທ້ຈິງອັລລໍຫ໌ເປັນຜູ້ຊົງຮອບຮູ້ ຜູ້ຊົງສະຕິປັນຍາຫຼັກແຫຼມ) (ໂອງການທີ່ 76 ບົດທີ່ 30).

ປະການທີ່ສີ່ : ສັດທາວ່າການສ້າງສັນທຸກສັບພະສິ່ງໃນຈັກກະວານເປັນຂອງ ອັລລໍຫ໌ ບໍ່ມີຜູ້ໃດເປັນຜູ້ສ້າງນອກຈາກພຣະອົງ ແລະ

ບໍ່ມີຜູ້ຄຸ້ມຄອງທີ່ດີຍິ່ງນອກຈາກພຣະອົງ ດັ່ງທີ່ມີພຣະດຳລັດວ່າ:

﴿ٱللَّهُ خَٰلِقُ كُلِّ شَيۡءٖۖ وَهُوَ عَلَىٰ كُلِّ شَيۡءٖ وَكِيلٞ٦٢﴾

(ອັລລໍຫ໌ ຄືຜູ້ຊົງສ້າງທຸກສິ່ງ ແລະ ພຣະອົງຊົງເປັນຜູ້ຊົງດູແລ ແລະ ຄຸ້ມຄອງທຸກສັບພະສິ່ງ) (ໂອງການທີ່ 39 ບົດທີ່ 62). ພຣະອົງກ່າວຕື່ມອີກວ່າ:

﴿يَا أَيُّهَا النَّاسُ اذْكُرُوا نِعْمَتَ اللَّهِ عَلَيْكُمْ هَلْ مِنْ خَالِقٍ غَيْرُ اللَّهِ يَرْزُقُكُمْ مِنَ السَّمَاءِ وَالْأَرْضِ لَا إِلَهَ إِلَّا هُوَ فَأَنَّى تُؤْفَكُونَ٣﴾

(ໂອ້ມະນຸດທັງຫລາຍເອີ່ຍ! ພວກເຈົ້າຈົ່ງລຳລຶກເຖິງຄວາມໂປດປານຂອງອັລລໍຫ໌ທີ່ມີຕໍ່ພວກເຈົ້າ ຈະມີຜູ້ສ້າງອື່ນໃດນອກຈາກອັລລໍຫ໌ແນວນັ້ນບໍ ທີ່ປະທານປັດໃຈຍັງຊີບຈາກຟາກຟ້າ ແລະ ແຜ່ນດິນ ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງ ດັ່ງນັ້ນເປັນຫຍັງລະພວກເຈົ້າຈຶ່ງຖືກຫລອກລວງໃຫ້ຫັນຫນີຫ່າງອອກໄປ (ຈາກຄວາມເປັນຈິງ) (ໂອງການທີ່ 35 ບົດທີ່ 3). ສະນັ້ນ ການສັດທາຕໍ່ອັລ-ກໍດັຣ ຈຶ່ງຄອບຄຸມການສັດທາຕໍ່ສີ່ປະການທີ່ກ່າວມາແລ້ວຂ້າງຕົ້ນ ແລະ ນີ້ຄືການສັດທາຂອງອະຫ໌ລຸສສຸນນະຫ໌ ວັລຈະມາອະຫ໌ ເຊິ່ງແຕກຕ່າງໄປຈາກຜູ້ບໍ່ຍອມຮັບໃນບາງປະການຂອງສິ່ງເຫຼົ່ານີ້ຈາກກຸ່ມພວກອະຫ໌ລຸລບິດອະຫ໌.

## ການເຊື່ອວ່າອີມານ (ຄວາມສັດທາ) ເປັນທັງຄຳເວົ້າ ແລະ ການກະທຳ

## ຈະເພີ່ມຂຶ້ນດ້ວຍການເຊື່ອຟັງ ແລະ ຈະລຶດລົງດ້ວຍການເຮັດສິ່ງບໍ່ດີ

ໃນຈຳນວນສິ່ງທີ່ລວມຢູ່ໃນການສັດທາຕໍ່ອັລລໍຫ໌ ຄືການເຊື່ອວ່າອີມານ (ຄວາມສັດທາ) ເປັນທັ້ງຄຳເວົ້າ ແລະ ການກະທຳ ຈະເພີ່ມຂຶ້ນດ້ວຍການເຊື່ອຟັງ ແລະ ຈະລຶດລົງດ້ວຍການເຮັດມະອູຊີຍັດ (ສິ່ງບໍ່ດີ ຫຼື ຝ່າຝືນ) ແລະ ບໍ່ເປັນທີ່ອະນຸມັດໃຫ້ບຸກຄົນໃດກ່າວກັບມຸສລິມໃດມຸສລິມໜຶ່ງວ່າເປັນກາຟິຣ ດ້ວຍເຫດທີ່ລາວເຮັດມະສີຍັດຄວາມຊົ່ວແຕ່ຢ່າງໃດຢ່າງໜຶ່ງ ທີ່ບໍ່ແມ່ນການເຮັດຊີຣິກ(ການຕັ້ງພາຄີ) ແລະ ການປະຕິເສດສັດທາ (ກຸຟຣ) ເປັນຕົ້ນວ່າ ການຊີນາ (ລວມປະເວນີກັບຜູ້ທີ່ບໍ່ແມ່ນສາມີພັນລະຍາ), ການລັກຂະໂມຍ, ການກິນດອກເບ້ຍ, ດື່ມສິ່ງຂອງມຶນເມົາ, ການອັກກະຕັນຍູຕໍ່ບິດາມານດາ ແລະ ອື່ນ ໆ ອີກຍັງເປັນບາບໃຫຍ່ ຕາບໃດທີ່ລາວຜູ້ກະທຳນັ້ນບໍ່ໄດ້ຖືວ່າເລື່ອງດັ່ງກ່າວເປັນການອະນຸມັດ ທັ້ງນີ້ເນື່ອງຈາກພຣະດຳລັດຂອງອັລລໍຫ໌ວ່າ:

﴿إِنَّ اللَّهَ لَا يَغْفِرُ أَنْ يُشْرَكَ بِهِ وَيَغْفِرُ مَا دُونَ ذَٰلِكَ لِمَنْ يَشَاءُ﴾

(ແທ້ຈິງອັລລໍຫ໌ ຈະບໍ່ຊົງອະໄພໂທດໃຫ້ແກ່ການທີ່ສິ່ງຫນຶ່ງຈະຖືກໃຫ້ມີຕັ້ງພາຄີຂຶ້ນແກ່ພຣະອົງ ແລະ ພຣະອົງຊົງອະໄພໃຫ້ແກ່ສິ່ງອື່ນຈາກນັ້ນສຳຣັບຜູ້ທີ່ພຣະອົງຊົງປະສົງ) (ໂອງການທີ່ 4 ບົດທີ່ 48). ແລະ ເນື່ອງຈາກປະກົດໃນຫະດີຊຊໍຣີຫ໌ມຸຕະວາຕິຣເຊິ່ງມີຫຼາຍຫະດີຊຈາກທ່ານນະບີວ່າ

ອັລລໍຫ໌ຈະນຳຜູ້ທີ່ມີສັດທາຢູ່ໃນຈິດສຳນຶກຂອງລາວ ແມ້ພຽງເທົ່າມະເລັດພືດຜັກກາດໃຫ້ອອກຈາກໄຟນະຣົກ.

## ການມີຄວາມຮັກຄວາມມັກເພື່ອອັລລໍຫ໌ ມີຄວາມກຽດຊັງເພື່ອອັລລໍຫ໌ ມີການຜູກສຳພັນ ການອອກຫ່າງ ບົນພື້ນຖານຂອງບົດບັນຍັດແຫ່ງອັລລໍຫ໌

ແລະ ສ່ວນໜຶ່ງຈາກການສັດທາຕໍ່ອັລລໍຫ໌ ກໍ່ໄດ້ແກ່ ການມີຄວາມຮັກຄວາມມັກເພື່ອອັລລໍຫ໌ ມີຄວາມກຽດຊັງເພື່ອອັລລໍຫ໌ ມີການມຸວາລາຫ໌ (ການຜູກສຳພັນ) ແລະ ມຸອາດະຫ໌(ການອອກຫ່າງ) ບົນພື້ນຖານຂອງບົດບັນຍັດແຫ່ງອັລລໍຫ໌, ສະນັ້ນມຸມິນຈະຕ້ອງຮັກບັນດາມຸມິນຜູ້ສັດທາດ້ວຍກັນ ຜູກສຳພັນລະຫວ່າງກັນ ຕ້ອງບໍ່ພຶງໃຈກັບບັນດາຜູ້ປະຕິເສດ ແລະ ອອກຫ່າງຈາກພວກເຂົາເຫຼົ່ານັ້ນ, ບຸກຄົນລະດັບທຳອິດໃນກຸ່ມມຸມິນຈາກປະຊາຊາດນີ້ ກໍ່ໄດ້ແກ່ບັນດາສາວົກຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ. ສະນັ້ນ ອະຫ໌ລຸຊຊຸນນະຫ໌ ວັນຈະມາອະຫ໌ ຈຶ່ງຮັກບັນດາສາວົກເຫຼົ່ານີ້ ມອບຄວາມພຶງໃຈແກ່ພວກເຂົາ ເຊື່ອມັ່ນວ່າພວກເຂົາເຫລົ່ານີ້ ຄືບຸກຄົນທີ່ເປັນກຸ່ມຊົນທີ່ດີທີ່ສຸດຫຼັງຈາກບັນດາສາສະນະທູດ ທັ້ງນີ້ອະໄສຫຼັກຖານຈາກຄຳເວົ້າຂອງທ່ານນະບີ ທີ່ວ່າ:

«خير القرون قرني ثم الذين يلونهم ثم الذين يلونهم»

ຄວາມວ່າ "ສັດຕະວັດທີ່ດີທີ່ສຸດນັ້ນ ຄືສັດຕະວັດຂອງຂ້ອຍ ຈາກນັ້ນກໍ່ຄືບັນດາຜູ້ທີ່ມາຕໍ່ຈາກເຂົາເຫຼົ່ານັ້ນ

ຈາກນັ້ນກໍ່ຄືບັນດາຜູ້ທີ່ມາຫຼັງຈາກພວກເຂົາ"[1] ລາຍງານໂດຍທ່ານບຸກຄໍຣີ ແລະ ທ່ານມຸສລິມ. ຜູ້ສັດທາມີຄວາມເຊື່ອວ່າ ຜູ້ທີ່ປະເສີດສຸດໃນບັນດາສາວົກຂອງທ່ານນະບີມຸຮໍາມັດຄືທ່ານອະບູບັກຣ ອັສ-ສິດດີກ ຖັດມາກໍ່ຄືທ່ານ ອຸມັຣ ອັລ-ຟາຣູກ ຖັດມາກໍ່ຄືທ່ານ ອຸສມານ ຊຸນນູຣອນ ຖັດມາກໍ່ຄືທ່ານ ອະລີ ອັລ-ມຸຣຕະດໍ -ຣໍດີຍັລລໍຮຸອັນຮູມ- ແລະ ຖັດຈາກທ່ານເຫລົ່ານັ້ນ ກໍ່ເປັນບຸກຄົນທີ່ເຫລືອໃນສໍຣາບະຫ໌ທັງສິບທ່ານ (ທີ່ໄດ້ຮັບການແຈ້ງຂ່າວດີວ່າພວກເຂົາເຫຼົ່ານັ້ນເປັນຊາວສະຫວັນ) ຖັດມາກໍ່ເປັນບັນດາສາວົກອື່ນ ໆ ທັງໝົດ, ຜູ້ສັດທາຈະບໍ່ເຂົ້າໄປກ່ຽວຂ້ອງ ຫຼື ວິຈານການໂຕ້ແຍ້ງກັນລະຫວ່າງຊໍຣາບະຫ໌ ພວກເຂົາເຊື່ອວ່າສິ່ງທີ່ເກີດຂຶ້ນໃນລະຫວ່າງສາວົກນັ້ນ ໄດ້ຜ່ານການກັ່ນກອງ ວິນິດໄສ ແລະ ຜ່ານຄວາມຄິດເຫັນຈາກພວກເຂົາເຫລົ່ານັ້ນແລ້ວ ຜູ້ໃດທີ່ວິນິດໄສໄດ້ກົງກັບຂໍ້ເທັດຈິງອັນຖືກຕ້ອງ ເຂົາຜູ້ນັ້ນກໍ່ໄດ້ຮັບຜົນລະບຸນເປັນສອງເທົ່າ ແຕ່ຜູ້ໃດທີ່ວິນິດໄສຜິດພາດ ເຂົາຜູ້ນັ້ນກໍ່ຈະໄດ້ຮັບຜົນບຸນຕອບແທນພຽງສ່ວນດຽວ. ບັນດາມຸມິນຜູ້ສັດທາມີຄວາມຮັກຕໍ່ຄອບຄົວວົງຕະກູນ (ອະຫ໌ລຸລໄບຕ) ຂອງທ່ານນະບີ

[1] ທ່ານບຸກຄໍຣີ ໜັງສືອັຊຊະຫາດາຕ (2509), ທ່ານມຸສລິມ ໜັງສືຟະດໍອິລ ອັຊສໍຣາບະຫ໌ (2533), ທ່ານຕິຣມີຊີ ໜັງສືອັລມະນາກຸບ (3859), ທ່ານອິບນຸມາຈະຫ໌ ໜັງສືອະຫ໌ການ (2362), ທ່ານອະຫ໌ມັດ (1/434).

ມອບຄວາມຮັກຂອງພວກເຂົາຕໍ່ບັນດາພັນລະຍາຂອງທ່ານນະບີ ເຊິ່ງປຽບສະເຫມືອນເປັນແມ່ຂອງບັນດາຜູ້ສັດທາ ພວກເຂົາຈະກ່າວຂໍພອນໃຫ້ອັລລໍຫ໌ໂປດປານພວກນາງທຸກຄົນ ພວກເຂົາຈະອອກຫ່າງຈາກແນວທາງຂອງພວກຣໍຟິເດາະ ທີ່ບໍ່ມັກ ດ່າວ່າ ແລະ ປະນາມເຫລົ່າສາວົກຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ແຕ່ກັບເກີນເລີຍຕໍ່ອະລຸລໄບຕ ໂດຍຍົກຖານະຂອງອະລຸລໄບຕເກີນກວ່າເຫດເກີນກວ່າຕໍາແຫນ່ງທີ່ອັລລໍຫ໌ຈັດໃຫ້ພວກເຂົາ ຜູ້ສັດທາຫຍັງອອກຫ່າງຈາກແນວທາງຂອງພວກນະວາຊິບ ເຊິ່ງພວກນີ້ໄດ້ກໍ່ຄວາມເສຍຫາຍແກ່ອະລຸລໄບຕ ທັ້ງດ້ວຍວ່າຈາ ແລະ ການກະທໍາ.

ທັ້ງໝົດທີ່ໄດ້ກ່າວມາແລ້ວຢ່າງຍໍ່ ໆ ນັ້ນເຂົ້າຢູ່ພາຍໃຕ້ຫຼັກການເຊື່ອມັ່ນທີ່ຖືກຕ້ອງ ເຊິ່ງເປັນຫຼັກການທີ່ອັລລໍຫ໌ໄດ້ຊົງແຕ່ງຕັ້ງທ່ານນະບີມາເພື່ອເຜີຍແຜ່ສິ່ງນັ້ນ ແລະ ເປັນຫຼັກການເຊື່ອໝັ້ນຂອງກຸ່ມຊົນທີ່ໄດ້ຮັບຄວາມປອດໄພ ນັ້ນຄືອະຫ໌ລຸຊຊຸນນະຫ໌ ວະຈາມາອະຫ໌ ທີ່ທ່ານນະບີມຸຮໍາມັດ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວໄວ້ໃນເລື່ອງຂອງກຸ່ມຊົນນີ້ວ່າ

«لا تزال طائفة من أمتي على الحق منصورة لا يضرهم من خذلهم حتى يأتي أمر الله سبحانه»

ຄວາມໝາຍຄື "ຊົນກຸ່ມໜຶ່ງຈາກປະຊາຊາດຂອງຂ້ອຍ ຍັງຄົງຍືນຫຍັດຢູ່ບົນຄວາມທ່ຽງທໍາ ເປັນກຸ່ມຊົນທີ່ໄດ້ຮັບຄວາມຊ່ວຍເຫຼືອ ຜູ້ທີ່ຫຍຽດຍາມພວກເຂົາບໍ່ສາມາດສ້າງຄວາມເສຍຫາຍແກ່

ພວກເຂົາໄດ້ ຈອບຈີບຮອດມື້ແຫ່ງຄຳບັນຊາຂອງອັລລໍຫ໌ມາເຖິງ (ຄືວັນສິ້ນໂລກ ແລ້ວເກີດໂລກໜ້າ)[1] ທ່ານນະບີມຸຮຳມັດ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ຍັງໄດ້ກ່າວໄວ້ວ່າ:

«افترقت اليهود على إحدى وسبعين فرقة، وافترقت النصارى على اثنتين وسبعين فرقة، وستفترق هذه الأمة على ثلاث وسبعين فرقة كلها في النار إلا واحدة فقال الصحابة: من هي يا رسول الله؟ قال: من كان على مثل ما أنا عليه وأصحابي»

ຄວາມໝາຍວ່າ "ພວກຍະຮູດີ (ຢິວ) ໄດ້ແຕກແຍກອອກເປັນ 71 ກຸ່ມ ແລະ ຊາວນະຮໍຣໍ (ຄຣິສ) ໄດ້ແຕກແຍກເປັນ 72 ກຸ່ມ ແລະ ປະຊາຊາດນີ້ (ມຸສລິມ) ຈະແຕກແຍກເປັນ 73 ກຸ່ມ ທັງໝົດນັ້ນລົງນະຮົກ ນອກຈາກກຸ່ມດຽວເທົ່ານັ້ນ". ບັນດາຊໍຮາບະຫ໌ໄດ້ຖາມວ່າ "ໂອ້ທ່ານຣໍຊຸລແຫ່ງອັລລໍຫ໌ ກຸ່ມນັ້ນເປັນໃຜນໍ່?" ທ່ານຕອບວ່າ " ກຸ່ມນັ້ນຄືຜູ້ທີ່ມີການດຳເນີນບົນເສັ້ນທາງທີ່ຄືກັບເສັ້ນທາງຂອງຂ້ອຍ ແລະ ສາວົກຂອງຂ້ອຍ"[2] ນີ້ຄື ຫຼັກການເຊື່ອໝັ້ນທີ່ຈຳເປັນຕ້ອງສັດທາ ຍຶດໝັ້ນດຳເນີນຕາມຕະຫຼອດໄປ ແລະ ລະມັດລະວັງຈາກສິ່ງທີ່ຂັດກັບຫຼັກການນີ້.

[1] ທ່ານມຸສລິມ ໜັງສືອັລອິມາເຣາະຫ໌ (1920), ທ່ານຕິຣມີຊີ ອັລພິຕັນ (2229), ທ່ານອະບູດາວູດ ອັລພິຕັນ ວັລມຸລາຮາມະ (4252), ອິບນຸມາຈະຫ໌ ອັລພິຕັນ (3952), ອະຫ໌ມັດ (5/279).

[2] ອິບນຸມາຈະຫ໌ ອັລພິຕັນ (3992).

## ກຸ່ມຄົນທີ່ດຳເນີນຢູ່ບົນເສັ້ນທາງທີ່ຂັດກັບຄວາມຖືກຕ້ອງ

ກຸ່ມຜູ້ເຄົາລົບສັກກາລະຮູບປັ້ນ

ສ່ວນບັນດາຜູ້ທີ່ຫັນເຫອອກນອກທາງຂອງຫຼັກການນີ້ ແລະ ດຳເນີນໄປຕາມສິ່ງທີ່ກົງກັນຂ້າມນັ້ນ ມີຢູ່ຫຼາຍກຸ່ມຫຼາຍປະເພດດ້ວຍກັນ ອະທິເຊັ່ນ ກຸ່ມເຄົາລົບບູຊາທັ້ງຫຼາຍ ຈະເວັດ, ມະລາອິກະຫ໌, ບັນດາອະລີຍ໌, ຍິນ, ກົກໄມ້, ຫີນ, ແລະ ອື່ນ ໆ ອີກ, ຄົນເຫຼົ່ານີ້ບໍ່ໄດ້ຕອບສະນອງການເຊີນຊວນຂອງບັນດາຣໍຊູລ ຍິ່ງໄປກວ່ານັ້ນຍັງຂັດແຍ້ງ ແລະ ດື້ດຶງຕໍ່ບັນດາຣໍຊູລ ເຊັ່ນດັ່ງກັບພວກກຸເຣັຊ ແລະ ອາຣັບກົ໊ກອື່ນ ໆ ເຮັດກັບນະບີມຸຮຳມັດ ຊັລລັລລໍຮຸ ອະໄລຮີ ວະສັລລໍາ ຂອງເຮົາ ພວກເຂົາເຫລົ່ານັ້ນເຄີຍຂໍຕໍ່ສິ່ງທີ່ຖືກເຄົາລົບສັກກາລະ ໃຫ້ເຮັດທຸລະໃຫ້ ຂໍໃຫ້ຫາຍປ່ວຍ ແລະ ຂໍຄວາມຊ່ວຍເຫຼືອເພື່ອເອົາຊະນະສັດຕູ ພວກເຂົາເຄີຍຂ້າສັດບູຊາ ແລະ ບົນບານຕໍ່ສິ່ງທີ່ຖືກເຄົາລົບສັກກາລະດັ່ງກ່າວ ແລະ ເມື່ອທ່ານຣໍຊູລ ຊັລລັລລໍຮຸ ອະໄລຮີ ວະສັລລໍາ ຄັດຄ້ານການກະທຳເຊັ່ນນັ້ນ ແລະ ຮຽກຮ້ອງໃຫ້ພວກເຂົາຖະວາຍການເຄົາລົບພັກດີຕໍ່ອັລລໍຫ໌ແຕ່ພຽງອົງດຽວດ້ວຍຄວາມບໍລິສຸດໃຈ ພວກເຂົາກັບເຫັນວ່າເປັນສິ່ງແປກປະຫລາດ ແລະ ບໍ່ຍອມປະຕິບັດຕາມທ່ານຣໍຊູລ ແລະ ອັລລໍຫ໌ກ່າວວ່າ:

﴿أَجَعَلَ الْآلِهَةَ إِلَٰهًا وَاحِدًا ۖ إِنَّ هَٰذَا لَشَيْءٌ عُجَابٌ٥﴾

(ຄົນປະຕິເສດເຫລົ່ານັ້ນກ່າວວ່າ) ເຂົາ (ມຸຮໍາມັດ) ໄດ້ເຮັດໃຫ້ພຣະເຈົ້າຫຼາຍອົງເປັນພຣະເຈົ້າອົງດຽວແນວນັ້ນບໍ່? ແທ້ຈິງນີ້ເປັນສິ່ງທີ່ແປກປະຫຼາດແທ້ ໆ ) (ໂອງການທີ່ 38 ບົດທີ່ 5). ແຕ່ທ່ານຣໍຊູລຂອງອັລລໍຫ໌ກໍ່ຍັງຄົງດໍາເນີນການຮຽກຮ້ອງເຊີນຊວນພວກເຂົາສູ່ອັລລໍຫ໌ຕໍ່ໄປ ທ່ານໄດ້ເຕືອນພວກເຂົາບໍ່ໃຫ້ຕັ້ງພາຄີ ອະທິບາຍໃຫ້ພວກເຂົາໄດ້ຮູ້ເຖິງຂໍ້ເທັດຈິງຂອງສິ່ງທີ່ທ່ານຮຽກຮ້ອງເຊີນຊວນໄປສູ່ ຈົນກະທັ່ງອັລລໍຫ໌ໄດ້ຊີ້ງຊີ້ທາງແກ່ບາງຄົນໃນຫມູ່ພວກເຂົາ ຈົນຕໍ່ມາກໍ່ໄດ້ມີການຍອມຮັບ ແລະ ເຂົ້າຮັບສາສະໜາຂອງອັລລໍຫ໌ຢ່າງຫຼວງຫລາຍ ສາສະໜາຂອງພຣະອົງຈຶ່ງໄດ້ປະກົດເດັ່ນຊັດຂຶ້ນເຫນືອສາສະໜາອື່ນ ທັ້ງນີ້ຫຼັງຈາກການເຊີນຊວນຢ່າງຕໍ່ເນື່ອງ ແລະ ການຕໍ່ສູ້ຢ່າງອົດທົນເປັນເວລາຍາວນານຂອງທ່ານນະບີ ແລະ ບັນດາສາວົກຂອງທ່ານ ຮວມທັ້ງຜູ້ດໍາເນີນຕາມທ່ານເຫລົ່ານັ້ນດ້ວຍດີ ຕໍ່ມາສະພາບສະຖານະການໄດ້ປ່ຽນແປງໄປ ຄວາມບໍ່ຮູ້ໄດ້ແຜ່ກະຈາຍໃນຫມູ່ຊົນສ່ວນໃຫຍ່ ຈົນກະທັ່ງຄົນສ່ວນຫຼາຍກັບໄປສູ່ສາສະໜາຂອງພວກຈາຮີລີຍະຫ໌ອີກຄັ້ງໜຶ່ງ ທັ້ງນີ້ກໍ່ດ້ວຍການນັບຖືຢ່າງບໍ່ມີຂອບເຂດຕໍ່ບັນດານະບີ ແລະ ອະລີຍ໌ ໂດຍການຂໍດຸອາ ວອນຂໍຄວາມຊ່ວຍເຫຼືອຕໍ່ທ່ານເຫລົ່ານັ້ນ ຮວມທັ້ງການກະທໍາຊີຣິກອື່ນ ໆ ອີກ,

ຄົນເຫລົ່ານີ້ບໍ່ຮູ້ຈັກຄວາມໝາຍຂອງຄຳວ່າ "ລາອີລາຮະອິລລັລລໍຫ໌"
ຢ່າງທີ່ພວກກຸຟຟາຣຊາວອາຣັບຮູ້ຈັກຄວາມໝາຍຂໍ້ຄວາມນີ້
(ຂໍອັລລໍຫ໌ຊົງຊ່ວຍເຫລືອດ້ວຍເຖີດ).

ການຊີຣິກເຊັ່ນນີ້
ຍັງຄົງມີລະບາດຢູ່ຈົນກະທັ່ງເຖິງຍຸກປັດຈຸບັນຂອງເຮົາ
ເນື່ອງຈາກການແຜ່ກະຈາຍຂອງຄວາມບໍ່ຮູ້ ແລະ
ຍຸກທີ່ຫ່າງໄກຈາກຍຸກຂອງທ່ານນະບີ ຊັລລັລລໍຮຸ ອະໄລຮິ
ວະສັລລໍາ.

ຂໍ້ສົງໄສຄຸມເຄືອຂອງຄົນລຸ່ນຫຼັງເຫລົ່ານີ້ກໍ່ເຊັ່ນດຽວກັບຂໍ່ສົງໄສຄຸມເຄືອຂອງຄົນລຸ່ນທຳອິດ ໃນອະດີດ
ນັ້ນກໍ່ຄືຄຳເວົ້າຂອງຄົນເຫລົ່ານັ້ນທີ່ພວກເຂົາເຄົາລົບບູຊາ

ຂໍ້ສົງໄສຄຸມເຄືອຂອງຄົນລຸ່ນຫຼັງເຫລົ່ານີ້ກໍ່ເຊັ່ນດຽວກັບຂໍ່ສົງໄສຄຸມເຄືອຂອງຄົນລຸ່ນທຳອິດ ໃນອະດີດ
ນັ້ນກໍ່ຄືຄຳເວົ້າຂອງຄົນເຫລົ່ານັ້ນ ທີ່ເວົ້າວ່າ "ພວກເຫລົ່ານີ້
(ຜູ້ຄົນທີ່ພວກເຂົາເຄົາລົບບູຊາ)
ຄືຜູ້ຂໍໄຖ່ບາບແທນພວກເຮົາ ນະ ອັລລໍຫ໌
ເຮົາບໍ່ໄດ້ເຄົາລົບພັກດີພວກເຂົາເຫລົ່ານັ້ນນອກຈາກເພື່ອພວກເຂົາເຫຼົ່ານັ້ນ
ຈະໄດ້ເຮັດໃຫ້ເຮົາເຂົ້າໃກ້ຊິດກັບອັລລໍຫ໌ຢ່າງແທ້ຈິງ,
ອັລລໍຫ໌ໄດ້ຊົງລົບລ້າງຂໍ້ສົງໄສຄຸມເຄືອອັນນີ້ ແລະ
ພຣະອົງໄດ້ຊົງແຈ້ງໃຫ້ຊາບວ່າໃຜເຄົາລົບພັກດີອື່ນຈາກອັລລໍຫ໌ ບໍ່ວ່າເປັນອີ່ຫຍັງກໍ່ຕາມ ເຂົາຜູ້ນັ້ນກໍ່ໄດ້ຕັ້ງພາຄີກັບພຣະອົງ
ແລະ ໄດ້ປະຕິເສດສັດທາ ດັ່ງທີ່ອັລລໍຫ໌ໄດ້ກ່າວວ່າ:

﴿وَيَعْبُدُونَ مِنْ دُونِ اللَّهِ مَا لَا يَضُرُّهُمْ وَلَا يَنْفَعُهُمْ وَيَقُولُونَ هَؤُلَاءِ شُفَعَاؤُنَا عِنْدَ اللَّهِ﴾

(ແລະເຂົາເຫລົ່ານັ້ນໄດ້ເຄົາລົບພັກດີສິ່ງອື່ນຈາກອັລລໍຫ໌ ເຊິ່ງບໍ່ໄດ້ໃຫ້ໂທດແກ່ພວກເຂົາ ແລະ ບໍ່ໄດ້ໃຫ້ປະໂຫຍດແກ່ພວກເຂົາ ແລະ ພວກເຂົາຈະກ່າວວ່າ ພວກເຫຼົ່ານີ້ແຫລະ ຄືຜູ້ຊ່ວຍເຫຼືອເຮົາ ນະ ທີ່ອັລລໍຫ໌) (ໂອງການທີ່ 10 ບົດທີ່ 18). ພຣະອົງອັລລໍຫ໌ຈຶ່ງໄດ້ຕອບໂຕ້ພວກເຂົາວ່າ:

﴿قُلْ أَتُنَبِّئُونَ اللَّهَ بِمَا لَا يَعْلَمُ فِي السَّمَاوَاتِ وَلَا فِي الْأَرْضِ سُبْحَانَهُ وَتَعَالَى عَمَّا يُشْرِكُونَ﴾

ຈົ່ງກ່າວເຖີດ (ມຸຮໍາມັດ) ພວກເຈົ້າຈະບອກອັລເລາະຮ໌ເຖິງສິ່ງທີ່(ພວກເຂົ້າໃຈວ່າ) ພຣະອົງບໍ່ຊົງຮັບຮູ້ໃນບັນດາຊັ້ນຟ້າ ແລະ ແຜ່ນດິນແນວນັ້ນບໍ່? ພຣະອົງຊົງມະຫາບໍລິສຸດ ແລະ ຊົງສູງສົ່ງ ເໜືອສິ່ງທີ່ພວກເຂົາຕັ້ງພາຄີຂຶ້ນ) (ໂອງການທີ່ 10 ບົດທີ່ 18). ດັ່ງນັ້ນອັລລໍຫ໌ໄດ້ຊົງແຈ້ງໄວ້ໃນອາຍະຫ໌ນີ້ວ່າ ການເຄົາລົບພັກດີອື່ນຈາກພຣະອົງບໍ່ວ່າຈະເປັນນະບີ ບັນດາວະລີຍ໌ ຫຼື ຄົນອື່ນ ໆ ກໍ່ຕາມ ຍ່ອມຖືວ່າການເຄົາລົບພັກດີນັ້ນ ເປັນຊີຣິກຢ່າງໃຫຍ່ຫຼວງ ເຖິງແມ່ນວ່າຜູ້ກະທຳຈະຕັ້ງຊື່ເປັນອື່ນຈາກນັ້ນກໍ່ຕາມ ພຣະອົງໄດ້ກ່າວວ່າ:

﴿وَالَّذِينَ اتَّخَذُوا مِنْ دُونِهِ أَوْلِيَاءَ مَا نَعْبُدُهُمْ إِلَّا لِيُقَرِّبُونَا إِلَى اللَّهِ زُلْفَى﴾

(ແລະ ບັນດາຜູ້ທີ່ຍຶດຖືສິ່ງອື່ນຈາກອັລລໍຫ໌ໃຫ້ເປັນວະລີຍ໌(ຜູ້ຄຸ້ມຄອງ) ເພື່ອເຄົາລົບພັກດີ (ພວກເຂົາຈະກ່າວວ່າ)

ເຮົາບໍ່ໄດ້ເຄົາລົບພັກດີພວກເຂົາເຫລົ່ານັ້ນ
ເວັ້ນແຕ່ເພື່ອເຂົາເຫລົ່ານັ້ນຈະເຮັດໃຫ້ເຮົາໃກ້ຊິດຕໍ່ອັລລໍຫ໌) (ໂອງການທີ່ 39 ບົດທີ່ 3). ອັລລໍຫ໌ຈຶ່ງໄດ້ຕອບໂຕ້ພວກເຂົາດ້ວຍພຣະດຳລັດວ່າ:

﴿إِنَّ اللَّهَ يَحْكُمُ بَيْنَهُمْ فِي مَا هُمْ فِيهِ يَخْتَلِفُونَ إِنَّ اللَّهَ لَا يَهْدِي مَنْ هُوَ كَاذِبٌ كَفَّارٌ﴾

(ແທ້ຈິງອັລລໍຫ໌
ຈະຊີງຈະຕັດສິນພວກເຂົາໃນສິ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ
ແທ້ຈິງອັລລໍຫ໌ຈະບໍ່ຊີງຊີ້ນຳທາງແກ່ຜູ້ກ່າວເທັດ(ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະຕິເສດ) (ໂອງການທີ່ 39 ບົດທີ່ 3). ພຣະອົງໄດ້ຊີແຈງໃຫ້ເຮົາໄດ້ຊາບໃນອາຍະຫ໌ນີ້ວ່າ ການເຄົາລົບພັກດີຂອງພວກເຂົາ ທີ່ມີຕໍ່ສິ່ງອື່ນຈາກພຣະອົງ ບໍ່ວ່າຈະດ້ວຍການວອນຂໍ ຄວາມຢ້ານກົວ ຄວາມຫວັງ ແລະ ສິ່ງອື່ນ ໆ ນັ້ນ ຍ່ອມຖືວ່າເປັນການກຸຟຣ (ປະຕິເສດ) ຕໍ່ພຣະອົງ ແລະ ພຣະອົງປະກາດວ່າຄຳເວົ້າຂອງພວກເຂົາທີ່ວ່າພຣະເຈົ້າຫຼາຍອົງຂອງພວກເຂົາຈະເຮັດໃຫ້ພວກເຂົາໃກ້ຊິດກັບອັລລໍຫ໌ຫຼາຍຍິ່ງຂຶ້ນນັ້ນເປັນຄຳກ່າວທີ່ຂີ້ຕົວະໂກຫົກມົດເທັດ.

ສ່ວນໜຶ່ງຈາກການເຊື່ອໝັ້ນທີ່ເຮັດໃຫ້ຕົກເປັນກາຟິຣ (ຕົກສາສະໜາ) ອັນເປັນການເຊື່ອໝັ້ນທີ່ກົງກັນຂ້າມກັບຫຼັກການເຊື່ອໝັ້ນທີ່ຖືກຕ້ອງ ແລະ ຂັດແຍ້ງກັບສິ່ງທີ່ບັນດາຣໍຊູລໄດ້ນຳມານັ້ນ ກໍ່ໄດ້ແກ່ການເຊື່ອໝັ້ນຂອງກຸ່ມຜູ້ປະຕິເສດພຣະເຈົ້າໃນຍຸກປັດຈຸບັນນີ້ ເຊິ່ງນັ້ນກໍ່ຄື ກຸ່ມຜູ້ດຳເນີນຕາມຄຳສອນຂອງມາຣກຊ໌ ເລນິນ ແລະ

ບຸກຄົນອື່ນ ໆ ບໍ່ວ່າເຂົາເຫລົ່ານັ້ນຈະເອີ້ນຊື່ວ່າສັງຄົມນິຍົມ ຄອມມິວນິສ ຫຼື ອີ່ຫຍັງກໍ່ຕາມ ແຕ່ທະວ່າຮາກຖານວ່ວມຂອງຄົນເຫລົ່ານີ້ຈຳນວນໜຶ່ງກໍ່ຄືການປະຕິເສດພຣະເຈົ້າ ແລະ ຊີວິດເປັນພຽງວັດຖຸ, ອີກທັ່ງຍັງລວມເຖິງການປະຕິເສດວັນສິ້ນໂລກ ປະຕິເສດນະຣົກ ສະຫວັນ ແລະ ປະຕິເສດສາສະໜາທັ້ງໝົດ ຜູ້ທີ່ພິຈາລະນາເບິ່ງຕຳລາ ແລະ ສຶກສາສະພາບຂອງຄົນເຫຼົ່ານັ້ນແລ້ວ ຈະຮູ້ຢ່າງແນ່ນອນໂດຍບໍ່ຕ້ອງສົງໄສເລີຍວ່າ ການເຊື່ອໝັ່ນຢ່າງນີ້ເປັນການເຊື່ອທີ່ກົງກັນຂ້າມກັບສາສະໜາແຫ່ງຟາກຟ້າ ແລະ ເປັນການເຊື່ອໝັ່ນທີ່ຈະເຮັດໃຫ້ຜູ້ທີ່ເຊື່ອເຊັ່ນນັ້ນເດີນໄປສູ່ບັ້ນປາຍທີ່ເລວຮ້າຍທີ່ສຸດໃນໂລກນີ້ ແລະ ໂລກໜ້າ.

ແລະ ສ່ວນໜຶ່ງຈາກການເຊື່ອມັ່ນທີ່ກົງກັນຂ້າມກັບຫຼັກສັດຈະທຳ ນັ້ນກໍ່ໄດ້ແກ່ການເຊື່ອມັ່ນຂອງບາງຄົນໃນກຸ່ມບາຕີນີຍະຫ໌ ແລະ ກຸ່ມຊູຟີເວົ້າວ່າ ຄົນບາງກຸ່ມທີ່ພວກເຂົາເອີ້ນວ່າ "ອະລີຍ໌" ນັ້ນ ໄດ້ມີສ່ວນຮ່ວມກັບອັລລໍຫ໌ໃນການຈັດການ ແລະ ບໍລິຫານກິດຈະການໂລກ ພວກເຂົາໄດ້ໃຫ້ຊື່ຄົນເຫລົ່ານັ້ນວ່າ ອັລ-ອັກຕອບ ອັລ-ອັກຕ່າດ ອັລ-ອັກວາສ ແລະ ຊື່ອື່ນ ໆ ອີກ ລ້ວນຄືຜູ້ທີ່ໄດ້ຮັບການຮ້ອງຂໍຄວາມເຊື່ອເຫລືອ ແລ້ວແຕ່ຜູ້ເຊື່ອຖືຈະປະດິດຄິດຂຶ້ນມາຕັ້ງໃຫ້ແກ່ພຣະເຈົ້າຂອງເຂົາ, ແລະ ນີ້ຍ່ອມເປັນການຕັ້ງພາຄີທີ່ນ່າກຽດຊັງທີ່ສຸດໃນດ້ານຣູບູບີຍະຫ໌ (ການເຊື່ອຖືເລື່ອງເອກະພາບຂອງອັລລໍຫ໌ໃນການສ້າງ

ແລະ ການບໍລິຫານຈັດການຂອງພຣະອົງ) ເຊິ່ງນີ້ເປັນເລື່ອງຊົ່ວຮ້າຍຍິ່ງໄປກ່າວການຊີຣິກໃນສະໄໝຈາຮິລີຍະຫ໌ ເພາະພວກກາຟີຣອາຣັບໃນສະໄໝຈາຮິລີຍະຫ໌ນັ້ນບໍ່ໄດ້ຕັ້ງພາຄີກັບພຣະອົງໃນດ້ານເຕົາຮີດຣູບູບີຍະຫ໌ ຫາກແຕ່ພວກເຂົາຕັ້ງພາຄີກັບພຣະອົງໃນເລື່ອງການອິບາດະຫ໌ ແລະ ການຊີຣິກຂອງພວກເຂົາກໍ່ເປັນໃນຍາມປົກຕິສຸກສ່ວນໃນພາວະຄັບຂັນແລ້ວ ພວກເຂົາຈະຖະວາຍການອິບາດະຫ໌ແກ່ອັລລໍຫ໌ພຽງອົງດຽວ ດັ່ງທີ່ອັລລໍຫ໌ໄດ້ຕຣັດວ່າ:

﴿فَإِذَا رَكِبُوا فِي الْفُلْكِ دَعَوُا اللَّهَ مُخْلِصِينَ لَهُ الدِّينَ فَلَمَّا نَجَّاهُمْ إِلَى الْبَرِّ إِذَا هُمْ يُشْرِكُونَ٦٥﴾

(ດັ່ງນັ້ນເມື່ອພວກເຂົາໂດຍສານເຮືອ ພວກເຂົາຈະຂໍວິງວອນຕໍ່ອັລລໍຫ໌ໃນຖານະຜູ້ບໍລິສຸດໃຈ ມອບການເຄົາລົບພັກດີຕໍ່ພຣະອົງ ແຕ່ເມື່ອພຣະອົງໄດ້ຊ່ວຍພວກເຂົາໃຫ້ຂຶ້ນເທິງບົກປອດໄພແລ້ວ ເມື່ອນັ້ນພວກເຂົາກໍ່ຕັ້ງພາຄີຕໍ່ພຣະອົງ) (ໂອງການທີ່ 29 ບົດທີ່ 65). ສ່ວນທາງດ້ານເຕົາຮີດຣູບູບີຍະຫ໌ນັ້ນພວກເຂົາກໍ່ຍອມຮັບວ່າເປັນຂອງອັລລໍຫ໌ອົງດຽວເທົ່ານັ້ນ ດັ່ງທີ່ພຣະອົງໄດ້ຕຣັດວ່າ:

﴿وَلَئِنْ سَأَلْتَهُمْ مَنْ خَلَقَهُمْ لَيَقُولُنَّ اللَّهُ﴾

(ແລະຖ້າເຈົ້າ (ມຸຮຳມັດ) ຖາມພວກເຂົາເຫຼົ່ານັ້ນວ່າໃຜເປັນຜູ້ສ້າງພວກເຂົາ ແນ່ນອນພວກເຂົາຈະກ່າວວ່າອັລລໍຫ໌) (ໂອງການທີ່ 43 ບົດທີ່ 87). ພຣະອົງກ່າວຕື່ມອີກວ່າ:

﴿قُلْ مَنْ يَرْزُقُكُمْ مِنَ السَّمَاءِ وَالْأَرْضِ أَمَّنْ يَمْلِكُ السَّمْعَ وَالْأَبْصَارَ وَمَنْ يُخْرِجُ الْحَيَّ مِنَ الْمَيِّتِ وَيُخْرِجُ الْمَيِّتَ مِنَ الْحَيِّ وَمَنْ يُدَبِّرُ الْأَمْرَ فَسَيَقُولُونَ اللَّهُ فَقُلْ أَفَلَا تَتَّقُونَ ٣١﴾

(ຈົ່ງກ່າວເຖີດ (ມຸຮຳມັດ) ໃຜເປັນຜູ້ປະທານປັດໄຈຍັງຊີບທີ່ມາຈາກຟາກຟ້າແລະແຜ່ນດິນແກ່ພວກທ່ານ ຫຼື ໃຜເປັນເຈົ້າຂອງການໄດ້ຍິນການເບິ່ງເຫັນ ແລະ ໃຜເປັນຜູ້ໃຫ້ມີຊີວິດຫຼັງຈາກການຕາຍ ແລະ ໃຜເປັນຜູ້ໃຫ້ຕາຍຫຼັງຈາກມີຊີວິດມາ ແລະ ໃຜເປັນຜູ້ບໍລິຫານກິດຈະການ ແລ້ວພວກເຈົ້າຈະກ່າວກັນວ່າ “ອັລລໍຫ໌” ດັ່ງນັ້ນຈົ່ງກ່າວເຖີດ (ມຸຮຳມັດ) ພວກທ່ານບໍ່ຢຳເກງບໍ່!) (ໂອງການທີ່ 10 ບົດທີ່ 31). ແລະໂອງການອື່ນ ໆ ທີ່ມີຄວາມໝາຍທຳນອງນີ້ຍັງມີອີກຫຼາຍ.

ສິ່ງທີ່ພວກມຸຊຣິກີນ (ຜູ້ຕັ້ງພາຄີ) ໃນສະໄໝຫຼັງ ໆ ນີ້ໄດ້ເພີ່ມຕື່ມໄປຈາກມຸຊຣິກີນຍຸກຕົ້ນ ໆ

ສ່ວນພວກມຸຊຣິກີນ (ຜູ້ຕັ້ງພາຄີ) ໃນສະໄໝຫຼັງ ໆ ນີ້ໄດ້ເພີ່ມຕື່ມໄປຈາກມຸຊຣິກີນຍຸກຕົ້ນ ໆ ອີກສອງດ້ານຄື : ດ້ານທີ່ໜຶ່ງ

ບາງຄົນໃນພວກຍຸກຫຼັງນັ້ນໄດ້ເພີ່ມການຕັ້ງພາຄີໃນເລື່ອງເຕົາຮີດຣູບູບີຍະຫ໌, ດ້ານທີ່ສອງ

ພວກເຂົາຕັ້ງພາຄີທັ້ງໃນຍາມປົກຕິສຸກ ແລະ ໃນຍາມຄັບຂັນ ດັ່ງທີ່ຜູ້ຄົບຄ້າສະມາຄົມກັບພວກເຂົາເຫລົ່ານີ້ຍ່ອມຈະເຫັນສິ່ງທີ່ພວກເຂົາກະທຳກັນ ນະ ຫລຸມຝັງສົບຂອງທ່ານຮຸເຊັນ ແລະ ອັລ-ບັດວີຍ໌ ແລະ ຄົນອື່ນ ໆ ໃນປະເທດອີຍິບ ນອກຈາກນີ້ກໍ່ມີ ນະ ຫລຸມຝັງສົບຂອງອັລ-ໄອດະລຸສ ໃນເອເດນ ອັລ-ຮາດີໃນປະເທດເຍເມນ ອິບນຸ ອະເຣາະບີຍ໌ ທີ່ປະເທດຊີເຣຍ ເຊັກ ອັບດຸລກໍເດຣ ອັລ-ຈິລານີຍ໌ປະເທດອີຣັກ ແລະ

ຫລຸມຝັງສົບຂອງຄົນທີ່ມີຊື່ສຽງໂດ່ງດັງອື່ນ ໆ ອີກ ເຊິ່ງສາມັນຊົນທົ່ວໄປໃຫ້ຄວາມນັບຖືຢ່າງລົ້ນເຫລືອ ອີກທັ້ງຫຍັງທັນເຫສິດທິສະເພາະຂອງອັລລໍຫ໌ຫຼາຍ ໆ ຢ່າງໄປໃຫ້ແກ່ຫລຸມຝັງສົບຂອງບຸກຄົນເຫລົ່ານັ້ນ ນ້ອຍຄົນທີ່ຄັດຄ້ານການກະທຳຂອງຄົນເຫລົ່ານັ້ນ ແລະແຈ້ງບອກໃຫ້ພວກເຂົາໄດ້ຮູ້ເຖິງຄວາມຈິງຂອງເຕົາຮີດ (ການໃຫ້ເອກະພາບ)

ທີ່ອັລລໍຫ໌ໄດ້ຊົງແຕ່ງຕັ້ງທ່ານນະບີມຸຮຳມັດ ຊັລລໍລຮຸ ອະໄລຮິ ວະຊັລລໍາ ແລະ ບັນດາຣໍຊູລກ່ອນຫນ້າທ່ານໃຫ້ມາເຜີຍແຜ່ ດັ່ງນັ້ນເຮົາຈຶ່ງຂໍກ່າວວ່າ "ອິນນາລິລລາຮິ ວະອິນນາ ອີໄລຮິ ຣໍຈິອູນ" ແທ້ຈິງເຮົາເປັນກຳມະສິດຂອງອັລລໍຫ໌ ແລະ ແທ້ຈິງເຮົານັ້ນຕ້ອງກັບໄປສູ່ພຣະອົງ. ແລະ ເຮົາຂໍຕໍ່ອັລລໍຫ໌ ໄດ້ໂປດໃຫ້ຄົນເຫລົ່ານັ້ນໄດ້ກັບໄປສູ່ທາງອັນທ່ຽງກົງ ຂໍໃຫ້ມີຜູ້ຮຽກຮ້ອງໃນລະຫວ່າງພວກເຂົາໄປສູ່ທາງທີ່ຖືກຕ້ອງ ເພີ່ມທະວີຫຼາຍຂຶ້ນ ແລະ ຂໍພຣະອົງໄດ້ໂປດອຳນວຍຄວາມສຳເລັດໃຫ້ແກ່ບັນດາຜູ້ນຳ ແລະ ອຸລາມາອູ (ນັກວິຊາການ) ຂອງມຸສລີມີນໃນການຕໍ່ຕ້ານການຊີຣິກເຊັ່ນນີ້ ຂະຈັດມັນ ແລະ ຫົນທາງຂອງມັນໃຫ້ສູນສິ້ນໄປ ແທ້ຈິງອັລລໍຫ໌ນັ້ນ ຊົງໄດ້ຍິນ ແລະ ໃກ້ຊິດຍິ່ງ.

ແລະ ສ່ວນຫນຶ່ງຂອງການເຊື່ອມັ່ນທີ່ກົງກັນຂ້າມກັບຫຼັກການເຊື່ອມັ່ນທີ່ຖືກຕ້ອງ ໃນເລື່ອງຂອງບັນດາພຣະນາມ ແລະ ຄຸນນະລັກສະນະຂອງອັລລໍຫ໌ນັ້ນ ກໍ່ໄດ້ແກ່ຫຼັກການເຊື່ອມັ່ນຂອງອະຫ໌ລຸລບິດອະຫ໌ ເຊັ່ນ

ພວກຈະຫ໌ມີຍະຫ໌ ພວກມຸອູຕະຊີລະຫ໌ ແລະຜູ້ດຳເນີນຕາມແນວທາງຂອງພວກເຂົາເຫລົ່ານັ້ນ ໃນການປະຕິເສດຄຸນລັກສະນະຂອງພຣະອົງ ແລະ ລົບລ້າງຄຸນລັກສະນະທີ່ສົມບູນຂອງອັລລໍຫ໌ ແລະໄດ້ໃຫ້ຄຸນລັກສະນະອແກ່ພຣະອົງດ້ວຍຄຸນລັກສະນະຂອງ ສິ່ງທີ່ບໍ່ມີ ຫຼື ສິ່ງທີ່ເປັນວັດຖຸ ຫຼື ສິ່ງທີ່ເປັນໄປບໍ່ໄດ້ ມະຫາບໍລິສຸດແດ່ອັລລໍຫ໌ ແລະ ຊົງສູງສົ່ງເຫນືອຄຳກ່າວຫາໃດ ໆ ທັ້ງສິ້ນ.

ລວມເຖິງບາງຄົນທີ່ຕິດເຂົ້າໄປຢູ່ໃນກຸ່ມບຸກຄົນດັ່ງກ່າວ ເຊິ່ງໄດ້ແກ່ຜູ້ທີ່ປະຕິເສດບາງຢ່າງໃນຄຸນລັກສະນະ ແລະ ຍືນຍັນໃນບາງຄຸນລັກສະນະ ເຊັ່ນ ພວກອາຊາອິເຣາະຫ໌ເປັນຕົ້ນ ດັ່ງນັ້ນໃນການທີ່ພວກເຂົາຍືນຍັນໃນບາງຄຸນລັກສະນະ ພວກເຂົາກໍ່ຈຳຕ້ອງເຮັດຄືກັບທີ່ພວກເຂົາພະຍາຍາມຫຼີກຫນີ ໃນເລື່ອງຄຸນລັກສະນະທີ່ພວກເຂົາປະຕິເສດ ແລະ ທີ່ພວກເຂົາໄດ້ຕີຄວາມຫຼັກຖານຕ່າງ ໆ ທີ່ກ່ຽວຂ້ອງ ໂດຍທີ່ພວກເຂົາຂັດແຍ້ງກັບຫຼັກຖານທີ່ຮັບມາໂດຍການຖ່າຍທອດ (ຈາກອັລກຸຣອານ ແລະ ສຸນນະຫ໌) ແລະ ຫຼັກຖານທາງສະຕິປັນຍາ ພວກເຂົາຂັດແຍ້ງຢ່າງຊັດເຈນໃນເລື່ອງເຊັ່ນນີ້.

ສ່ວນອະຫ໌ລຸສສຸນນະຫ໌ ວັລຈະມາອະຫ໌ນັ້ນ ພວກເຂົາຍືນຍັນໃຫ້ກັບ ອັລລໍຫ໌ໃນສິ່ງທີ່ພຣະອົງຊົງຍືນຍັນໃຫ້ແກ່ຕົວຂອງພຣະອົງເອງ ຫຼື ຍືນຍັນຕາມທີ່ທ່ານນະບີຂອງພຣະອົງຍືນຍັນໃຫ້ກັບພຣະອົງ

ໃນຮູບຂອງການໃຫ້ຄວາມສົມບູນ ບໍ່ວ່າຈະເປັນເລື່ອງພຣະນາມ ຫຼື ຄຸນລັກສະນະຂອງອັລລໍຫ໌ກໍ່ຕາມ ພວກເຂົາເຊື່ອມັ່ນໃນເຊິ່ງທີ່ຂະຈັດໃຫ້ພຣະອົງຊົງປອດຈາກຄວາມຄ້າຍຄືງກັບມວນສັບພະສິ່ງ ດ້ວຍການເຊື່ອມັ່ນທີ່ປອດຈາກວິທີທາງການປະຕິເສດ ພວກເຂົາໄດ້ປະຕິບັດຕາມຫຼັກຖານທັ້ງໝົດ ພວກເຂົາບໍ່ບິດເບືອນ ບໍ່ປ່ຽນແປງ ແລະ ບໍ່ຖືຕາມທີ່ບາງກຸ່ມຖືວ່າພຣະອົງບໍ່ມີຄຸນລັກສະນະ ໃນທີ່ສຸດພວກເຂົາກໍ່ປອດຈາກການຂັດແຍ້ງ ເຊິ່ງຄົນອື່ນ ໆ ຕົກຢູ່ໃນການຂັດແຍ້ງນີ້ (ດັ່ງທີ່ໄດ້ເຄີຍຊີ້ແຈງໄວ້ແລ້ວ), ນີ້ຄືຫົນທາງແຫ່ງຄວາມປອດໄພ ແລະ ຄວາມສັນຕິສຸກໃນດຸນຍາ ແລະ ອາຄິເຣາະຫ໌ ເປັນຫົນທາງທີ່ທ່ຽງກົງຕາມຊາວສະລັຟ (ບັນພະຊົນອິສລາມຍຸກເຣີ່ມຕົ້ນ) ຂອງປະຊາຊາດນີ້ ແລະ ບັນດາຜູ້ນຳຂອງພວກເຂົາໄດ້ດຳເນີນໄປແລ້ວ ແລະ ຊົນລຸ່ນຫຼັງຂອງປະຊາຊາດຈະບໍ່ຢູ່ໃນຄວາມຖືກຕ້ອງ ເວັ້ນແຕ່ດ້ວຍສິ່ງທີ່ຊົນລຸ່ນທຳອິດໄດ້ດຳເນີນຕົນຢ່າງຖືກຕ້ອງມາກ່ອນແລ້ວ ນັ້ນກໍ່ຄືການດຳເນີນຕາມອັລກຸຣອານ ແລະ ສຸນນະຫ໌ ແລະ ລະຖິ້ມສິ່ງທີ່ຂັດແຍ້ງກັບສອງສິ່ງທີ່ກ່າວມານີ້.

## ຈຳເປັນຕ້ອງອີບາດະຫ໌ຕໍ່ອັລລໍຫ໌ອົງດຽວ ແລະ ຊີ້ແຈງສາເຫດແຫ່ງໄຊຊະນະເຫນືອສັດຕູຂອງອັລລໍຫ໌

ສິ່ງຈຳເປັນສຳຄັນທີ່ສຸດເຫນືອມຸກັລລັຟ (ຜູ້ບັນລຸສາສະໜາພາວະ) ແລະ

ເປັນຂໍ້ບັນຫຍັດທີ່ຍິ່ງໃຫຍ່ທີ່ສຸດ ກໍ່ຄື ການທີ່ລາວເຄົາລົບພັກດີພຣະຜູ້ເປັນເຈົ້າຂອງລາວ ພຣະຜູ້ເປັນເຈົ້າແຫ່ງຊັ້ນຟ້າ ແລະ ແຜ່ນດິນ ພຣະຜູ້ເປັນເຈົ້າແຫ່ງບັນລັງຍິ່ງໃຫຍ່ ຜູ້ຕຣັດໄວ້ໃນຄໍາພີອັນຊົງກຽດຂອງພຣະອົງວ່າ:

﴿إِنَّ رَبَّكُمُ اللَّهُ الَّذِي خَلَقَ السَّمَاوَاتِ وَالْأَرْضَ فِي سِتَّةِ أَيَّامٍ ثُمَّ اسْتَوَى عَلَى الْعَرْشِ يُغْشِي اللَّيْلَ النَّهَارَ يَطْلُبُهُ حَثِيثًا وَالشَّمْسَ وَالْقَمَرَ وَالنُّجُومَ مُسَخَّرَاتٍ بِأَمْرِهِ أَلَا لَهُ الْخَلْقُ وَالْأَمْرُ تَبَارَكَ اللَّهُ رَبُّ الْعَالَمِينَ٥٤﴾

(ແທ້ຈິງພຣະເຈົ້າຂອງພວກເຈົ້ານັ້ນ ຄື ອັລລໍຫ໌ ຜູ້ຊົງສ້າງບັນດາຊັ້ນຟ້າ ແລະ ແຜ່ນດິນ ພາຍໃນຫົກມື້ ແລະ ສະຖິດຢູ່ເທິງບັນລັງ ພຣະອົງຊົງໃຫ້ກາງຄືນຄອງຄຸມກາງເວັນໃນສະພາບທີ່ກາງຄືນ ໄລ່ຕາມກາງເວັນຢ່າງວ່ອງໄວ ແລະ ພຣະອົງໄດ້ສ້າງດວງອາທິດ ແລະ ດວງຈັນ ແລະ ບັນດາດວງດາວຂຶ້ນຖືກກໍາໜົດໃຫ້ກໍາໜົດເຮັດໜ້າທີ່ບໍລິການ ຕາມພຣະບັນຊາຂອງພຣະອົງ ຈົ່ງຮັບຮູ້ວ່າ ການສ້າງ ແລະ ກິດຈະການທັງຫຼາຍເປັນສິດທິຂອງພຣະອົງເທົ່ານັ້ນ ມະຫາບໍລິສຸດແດ່ອັລລໍຫ໌ ຜູ້ເປັນພຣະເຈົ້າແຫ່ງສາກົນລະໂລກ) (ໂອງການທີ່ 7 ບົດທີ່ 54). ແລະ ການອິບາດະຫ໌ເຊິ່ງເປັນພຣະປະສົງຂອງອັລລໍຫ໌ທີ່ສົງສ້າງ ຍິນ ແລະ ມະນຸດຂຶ້ນມານັ້ນ ກໍ່ຄືການເຄົາລົບພັກດີຕໍ່ພຣະອົງຜູ້ດຽວເທົ່ານັ້ນ ດັ່ງທີ່ພຣະອົງໄດ້ກ່າວວ່າ:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ٥٦﴾

(ແລະ ຂ້າບໍ່ໄດ້ສ້າງຍີນ(ຜີ) ແລະ ມະນຸດ ມາເພື່ອຈຸດປະສົງອື່ນໃດ ເວັ້ນແຕ່ການກາບໄຫວ້ເຄົາລົບພັກດີຕໍ່ຂ້າ) (ໂອງການທີ່ 51 ບົດທີ່ 56). ແລະ ການອິບາດະຫ໌ເຊິ່ງເປັນພຣະປະສົງຂອງອັລລໍຫ໌ທີ່ສົງສ້າງ ຍິນ ແລະ ມະນຸດຂຶ້ນມານັ້ນ ກໍ່ຄືການເຄົາລົບພັກດີຕໍ່ພຣະອົງຜູ້ດຽວເທົ່ານັ້ນ ໂດຍການອິບາດະຫ໌ປະເພດຕ່າງ ໆ ອັນໄດ້ແກ່ ການລະຫມາດ ການຖືສິນອົດ ການຈ່າຍຊະກາດ ການເຮັດຫັຈ ການກົ້ມຣຸກົອະ ການກາບສຸຍຸດ ການຕໍວາຟ ການເຊືອດສັດ ການບົນບານ ມອບຄວາມເກຼງກົວ ຄວາມຫວັງ ການຂໍຄວາມຊ່ວຍເຫລືອ ການຂໍຄວາມຄຸ້ມກັນ ແລະ ທຸກປະເພດຂອງການຂໍວິງວອນ ແລະ ນັບເຂົ້າຢູ່ໃນການນີ້ເຊັ່ນກັນ ກໍ່ໄດ້ແກ່ການເຊື່ອຟັງ ແລະ ປະຕິບັດຕາມພຣະບັນຊາຂອງອັລລໍຫ໌ ແລະ ລະຖິ້ມທຸກຢ່າງທີ່ພຣະອົງຊົງຫ້າມຕາມທີ່ຄັມພີອັນຊົງກຽດຂອງພຣະອົງ ແລະ ສຸນນະຫ໌ຂອງທ່ານຣໍຊູລຜູ້ຊື່ສັດຂອງພຣະອົງໄດ້ຊີ້ແຈງເອົາໄວ້. ອັລລໍຫ໌ໄດ້ຊົງມີພຣະບັນຊາໃຫ້ຍິນ ແລະ ມະນຸດ ເຮັດການເຄົາລົບພັກດີທີ່ເອົ້າມາແລ້ວນັ້ນ ເຊິ່ງຈຸດນີ້ຄືຈຸດປະສົງຫຼັກຂອງພຣະອົງໃນການສ້າງຍິນ ແລະ ມະນຸດຂຶ້ນມາ ລົງປະທານບັນດາຣໍຊູລ ແລະ ຄໍາພີມາ ເພື່ອຊີ້ແຈ້ງລາຍລະອຽດ ພ້ອມທັ້ງສະແດງການປະຕິບັດການອິບາດະຫ໌ເຫລົ່ານັ້ນ

ໃນທຸກຮູບແບບທີ່ຖືກຕ້ອງ ຕາມຄວາມປະສົງຂອງພຣະອົງໂດຍກ່າວວ່າ:

﴿يَا أَيُّهَا النَّاسُ اعْبُدُوا رَبَّكُمُ الَّذِي خَلَقَكُمْ وَالَّذِينَ مِنْ قَبْلِكُمْ لَعَلَّكُمْ تَتَّقُونَ ٢١﴾

(ມະນຸດເອີຍ ຈົ່ງເຄົາລົບອິບາດະຫ໌ ພຣະຜູ້ເປັນເຈົ້າຂອງພວກເຈົ້າຜູ້ຊົງສ້າງພວກເຈົ້າ ແລະ ບັນດາຜູ້ທີ່ມາກ່ອນພວກທ່ານເກີດ ເພື່ອວ່າພວກເຈົ້າຈະຢຳເກງ (ຢ້ານຕໍ່ອັລລໍຫ໌) (ໂອງການທີ່ 2 ບົດທີ່ 21). ແລະພຣະຜູ້ຊົງເດຊານຸພາບໄດ້ກ່າວວ່າ:

﴿وَقَضَى رَبُّكَ أَلَّا تَعْبُدُوا إِلَّا إِيَّاهُ وَبِالْوَالِدَيْنِ إِحْسَانًا﴾

(ແລະພຣະເຈົ້າຂອງເຈົ້າບັນຊາວ່າ ພວກເຈົ້າຢ່າເຄົາລົບພັກດີຜູ້ໃດນອກຈາກພຣະອົງເທົ່ານັ້ນ ແລະ ຈົ່ງເຮັດດີດີຕໍ່ພໍ່ແມ່) (ໂອງການທີ່ 17 ບົດທີ່ 23). ຄວາມໝາຍໃນຄຳວ່າ "ກໍດໍ່" ໃນອາຍະຫ໌ທີ່ນີ້ຄື ການສັ່ງໃຊ້ ການແນະນຳ. ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَمَا أُمِرُوا إِلَّا لِيَعْبُدُوا اللَّهَ مُخْلِصِينَ لَهُ الدِّينَ حُنَفَاءَ وَيُقِيمُوا الصَّلَاةَ وَيُؤْتُوا الزَّكَاةَ وَذَلِكَ دِينُ الْقَيِّمَةِ٥﴾

(ແລະພວກເຂົາບໍ່ໄດ້ຖືກບັນຊາໃຫ້ກະທຳອື່ນໃດ ນອກຈາກເພື່ອເຄົາລົບພັກດີຕໍ່ອັລລໍຫ໌ ເປັນຜູ້ມີເຈດຕະນາບໍລິສຸດໃນການພັກດີຕໍ່ພຣະອົງ ເປັນຜູ້ຢູ່ໃນແນວທາງທີ່ທ່ຽງກົງ ແລະດຳລົງການລະຫມາດ ແລະ ຈ່າຍຊະກາດ ແລະ ນັ້ນຄືສາສະໜາອັນທ່ຽງທຳ) (ໂອງການທີ່ 98 ບົດທີ່ 5). ໂອງການຕ່າງ ໆ ທີ່ມີຄວາມໝາຍທຳນອງນີ້ມີຢູ່ຫຼວງຫຼາຍ ແລະ ພຣະອົງກ່າວຕໍ່ອີກວ່າ

﴿وَمَا آتَاكُمُ الرَّسُولُ فَخُذُوهُ وَمَا نَهَاكُمْ عَنْهُ فَانْتَهُوا وَاتَّقُوا اللَّهَ إِنَّ اللَّهَ شَدِيدُ الْعِقَابِ﴾

(ແລະອັນໃດທີ່ຣ໌ຊູລໄດ້ນຳມາຍັງພວກເຈົ້າກໍ່ຈົ່ງຍຶດເອົາໄວ້ ແລະ ອັນໃດທີ່ທ່ານໄດ້ຫ້າມກໍ່ຈົ່ງລະເວັ້ນເສຍ ພວກເຈົ້າຈົ່ງຍຳເກງຕໍ່ອັລລໍຫ໌ເຖີດ ແທ້ຈິງອັລລໍຫ໌ເປັນຜູ້ຊົງເຂັ້ມງວດໃນການລົງໂທດ) (ໂອງການທີ່ 59 ບົດທີ່ 7).

ແລະອັລລໍຫ໌ຜູ້ຊົງມະຫາບໍລິສຸດໄດ້ຕຣັດວ່າ:

﴿يَا أَيُّهَا الَّذِينَ آمَنُوا أَطِيعُوا اللَّهَ وَأَطِيعُوا الرَّسُولَ وَأُولِي الْأَمْرِ مِنْكُمْ فَإِنْ تَنَازَعْتُمْ فِي شَيْءٍ فَرُدُّوهُ إِلَى اللَّهِ وَالرَّسُولِ إِنْ كُنْتُمْ تُؤْمِنُونَ بِاللَّهِ وَالْيَوْمِ الْآخِرِ ذَٰلِكَ خَيْرٌ وَأَحْسَنُ تَأْوِيلًا٥٩﴾

(ຜູ້ສັດທາທັງຫຼາຍ ຈົ່ງເຊື່ອຟັງປະຕິບັດຕາມອັລລໍຫ໌ ແລະ ຈົ່ງເຊື່ອຟັງປະຕິບັດຕາມຣ໌ຊູລເຖີດ ແລະ ຜູ້ປົກຄອງໃນຫມູ່ພວກເຈົ້າດ້ວຍ ແລະ ຖ້າພວກເຈົ້າຂັດແຍ້ງກັນໃນສິ່ງໃດ ກໍ່ຈົ່ງນຳສິ່ງນັ້ນກັບໄປຫາອັລລໍຫ໌(ອັລກຸຣອານ) ແລະ ຣ໌ຊູລ (ສຸນນະຫ໌) ຫາກພວກເຈົ້າສັດທາຕໍ່ອັລລໍຫ໌ ແລະ ວັນສິ້ນໂລກ ນັ້ນແຫລະເປັນສິ່ງທີ່ດີຍິ່ງ ແລະ ເປັນການກັບໄປທີ່ສວຍງາມຍິ່ງ) (ໂອງການທີ່ 4 ບົດທີ່ 59).

ແລະພຣະຜູ້ຊົງເດສານຸພາບໄດ້ກ່າວວ່າ:

﴿مَنْ يُطِعِ الرَّسُولَ فَقَدْ أَطَاعَ اللَّهَ﴾

(ຜູ້ໃດ້ເຊື່ອຟັງຣ໌ຊູລ ແນ່ນອນລາວກໍເຊື່ອຟັງອັລລໍຫ໌ແລ້ວ) (ໂອງການທີ່ 4 ບົດທີ່ 80).

ແລະ ພຣະຜູ້ຊົງມະຫາບໍລິສຸດໄດ້ຕຣັດວ່າ:

﴿وَلَقَدْ بَعَثْنَا فِي كُلِّ أُمَّةٍ رَسُولًا أَنِ اعْبُدُوا اللَّهَ وَاجْتَنِبُوا الطَّاغُوتَ﴾

(ແລະໂດຍແນ່ນອນ ເຮົາໄດ້ສົ່ງຣ໌ຊູລມາໃນທຸກປະຊາຊາດ (ໂດຍບັນຊາວ່າ) ພວກທ່ານຈົ່ງເຄົາລົບພັກດີຕໍ່ອັລລໍຫ໌ ແລະ ຈົ່ງຫຼີກຫນີອອກຫ່າງຈາກພວກຮູບປັ້ນ(ຈະເວັດ) (ໂອງການທີ່ 16 ບົດທີ່ 36), ແລະອັລລໍຫ໌ຜູ້ຊົງມະຫາບໍລິສຸດໄດ້ຕຣັດວ່າ:

﴿وَمَا أَرۡسَلۡنَا مِن قَبۡلِكَ مِن رَّسُولٍ إِلَّا نُوحِيٓ إِلَيۡهِ أَنَّهُۥ لَآ إِلَٰهَ إِلَّآ أَنَا۠ فَٱعۡبُدُونِ ٢٥﴾

(ແລະເຮົາບໍ່ໄດ້ສົ່ງຣ໌ຊູລຄົນໃດມາກ່ອນຫນ້າເຈົ້າ ຍົກເວັ້ນແຕ່ເຮົາໄດ້ວະຮີໃຫ້ແກ່ເຂົາວ່າ ແທ້ຈິງ ບໍ່ມີພຣະເຈົ້າອື່ນໃດທີ່ແທ້ຈິງນອກຈາກຂ້າ ດັ່ງນັ້ນພວກເຈົ້າຈົ່ງເຄົາລົບພັກດີຕໍ່ຂ້າ) (ໂອງການທີ່ 21 ບົດທີ່ 25), ແລະ ພຣະອົງກ່າວຕື່ມອີກວ່າ:

﴿الٓر ۚ كِتَٰبٌ أُحۡكِمَتۡ ءَايَٰتُهُۥ ثُمَّ فُصِّلَتۡ مِن لَّدُنۡ حَكِيمٍ خَبِيرٍ ١ أَلَّا تَعۡبُدُوٓاْ إِلَّا ٱللَّهَ ۚ إِنَّنِي لَكُم مِّنۡهُ نَذِيرٌ وَبَشِيرٌ ٢﴾

(ອະລິຟ ລາມ ຣໍ (ນີ້ຄື) ຄຳພີທີ່ໂອງການທັ້ງຫລາຍຂອງມັນຖືກວາງໄວ້ຢ່າງຮັດກຸມຊັດ ແຈ້ງ ແລະ ຖືກຈຳແນກແຍກແຍະ (ຂໍ້ບັນຊາຕ່າງ ໆ) ຢ່າງຊັດແຈ້ງ ຈາກພຣະຜູ້ຊົງສະຫຼາດຫຼັກແຫລມ ແລະ ຜູ້ຊົງຮອບຮູ້ຊ່ຽວຊານ)

ເພື່ອພວກເຈົ້າຈະບໍ່ໄປເຄົາລົບພັກດີຕໍ່ຜູ້ອື່ນນອກຈາກອັລລໍຫ໌ ແທ້ຈິງຂ້ອຍໄດ້ຮັບການແຕ່ງຕັ້ງຈາກພຣະອົງ ມາຍັງພວກທ່ານເພື່ອເປັນຜູ້ຕັກເຕືອນ ແລະ ຜູ້ແຈ້ງຂ່າວດີ) (ໂອງການທີ່ 11 ບົດທີ່ 1-2).

ດັ່ງນັ້ນ ອາຍາຕທີ່ຊັດແຈ້ງເຫຼົ່ານີ້ ແລະ ທີ່ມີຄວາມໝາຍທຳນອງດຽວກັນ ເຊິ່ງລະບຸໄວ້ໃນຄຳພີຂອງອັລລໍຫ໌

ລ້ວນແລ້ວແຕ່ບໍ່ງຊີ້ເຖິງຄວາມຈຳເປັນທີ່ຕ້ອງມອບການເຄົາລົບພັກດີຕໍ່ອັລລໍຫ໌ພຽງອົງດຽວເທົ່ານັ້ນ

ເຊິ່ງນີ້ຄືຮາກຖານຂອງອິສລາມ ແລະ ເປັນທີ່ມາຂອງຫຼັກປະຕິບັດ ໃນທຳນອງດຽວກັນນີ້ກໍ່ເນັ້ນເຖິງຈຸດນີ້ວ່າເປັນເຫດຜົນສູງສຸດຂອງການສ້າງຍິນ ແລະ ມະນຸດ ການປະທານບັນດາຣໍຊູລ ແລະ ຄຳພີຕ່າງ ໆ ສະນັ້ນຈຶ່ງຈຳເປັນແກ່ບັນດາມຸກັລລັຟ (ຜູ້ບັນລຸສາສະນາພາວະ) ຈະຕ້ອງເອົາໃຈໃສ່ໃນເລື່ອງນີ້ ສຶກສາເຮັດຄວາມເຂົ້າໃຈ ແລະ ລະມັດລະວັງບໍ່ໃຫ້ເປັນຄືຄົນຈຳນວນຫຼາຍ ທີ່ສັງກັດຢູ່ໃນອິສລາມແລ້ວກະທຳເຮັດເກີນຢ່າງຂອບເຂດ ໃນການຍົກຍ່ອງບັນດານະບີ ຄົນສໍລິຫ໌ ການກໍ່ສ້າງມັສຍິດ ແລະ ໂດມບົນຫລຸມຝັງສົບຂອງຄົນເຫຼົ່ານັ້ນ ຂໍວິງວອນຕໍ່ພວກເຂົາ ຂໍຄວາມຊ່ວຍເຫລືອ ຫັນໄປເພິ່ງຄົນເຫຼົ່ານັ້ນ ວອນຂໍໃຫ້ຄົນເຫຼົ່ານັ້ນເຮັດທຸລະໃຫ້ ຂໍໃຫ້ປົດເປື້ອງພາວະຄັບຂັນ ຂໍໃຫ້ຫາຍປ່ວຍ ຂໍໃຫ້ໄດ້ຮັບໄຊຊະນະ ແລະ ອື່ນ ໆ ອີກຍັງເປັນປະເພດຕ່າງ ໆ ຂອງການຊິຣິກ (ການຕັ້ງພາຄີ) ທີ່ໃຫຍ່ທີ່ສຸດ, ໃນລາຍງານຫະດີຊສໍຮີຫ໌ ຈາກທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ

ປະກົດວ່າມີສິ່ງພ້ອງກັບຂໍ້ບົ່ງຊີ້ທີ່ມີຢູ່ໃນຄັມພີຂອງອັລລໍຫ໌ ເພາະໃນສໍຮີຫ໌ຂອງທ່ານອິຫມ່າອັລ-ບຸກຄໍຣີ ແລະ ມຸສລິມ ໄດ້ລະບຸດັ່ງນີ້. "ຄວາມໝາຍ" ລາຍງານຈາກທ່ານມຸອາຊ ຣໍດີຍັລລໍຮຸ ອັນຮຸ ວ່າທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ກ່າວແກ່ລາວວ່າ

«أتدري ما حق الله على العباد وحق العباد على الله؟ فقال معاذ: قلت الله ورسوله أعلم، فقال النبي –صلى الله عليه وسلم- حق الله على العباد أن يعبدوه ولا يشركوا به شيئا، وحق العباد على الله أن لا يعذب من لا يشرك به شيئا» الحديث.

"ທ່ານຮູ້ ຫຼືບໍ່ວ່າອີ່ຫຍັງຄືສິດຂອງອັລລໍຫ໌ທີ່ມີຕໍ່ປວງບ່າວ ແລະ ອີ່ຫຍັງຄືສິດຂອງປວງບ່າວທີ່ມີຕໍ່ອັລລໍຫ໌?" ຂ້ອຍຕອບວ່າ "ອັລລໍຫ໌ ແລະ ຣໍຊູລຂອງພຣະອົງເທົ່ານັ້ນທີ່ຮູ້ດີ" ທ່ານນະບີຈຶ່ງກ່າວວ່າ "ສິດຂອງອັລລໍຫ໌ທີ່ມີຕໍ່ປວງບ່າວກໍ່ຄື ການທີ່ພວກເຂົາເຄົາລົບພັກດີພຣະອົງ ແລະ ບໍ່ເອົາສິ່ງໃດມາຮ່ວມເປັນພາຄີກັບພຣະອົງ ແລະ ສິດຂອງປວງບ່າວທີ່ມີຕໍ່ອັລລໍຫ໌ກໍ່ຄື ການທີ່ພຣະອົງຈະບໍ່ລົງລົງໂທດຜູ້ທີ່ບໍ່ເອົາສິ່ງໃດມາຮ່ວມເປັນພາຄີກັບພຣະອົງ"[1] ໃນຕໍາລາຫະດີຊ ສໍຮີຫ໌ຂອງອັລ-ບຸກໍຣີເຊິ່ງເປັນລາຍງານຈາກອິບນຸມັສອູດ ຣໍດີຍັລລໍຮຸ ອັນຮຸ ມີວ່າ ທ່ານນະບີກ່າວວ່າ:

«من مات وهو يدعو لله ندا دخل النار»

ຄວາມວ່າ "ຜູ້ໃດຕາຍໃນສະພາບທີ່ເຂົາວິງວອນຕໍ່ຜູ້ອື່ນເທົ່າທຽມກັບອັລລໍຫ໌ ເຂົາຕ້ອງຕົກນະຣົກ"[2] ແລະອິຫມ່າມມຸສລິມໄດ້ນໍາສະເຫນີໄວ້ໃນຕໍາລາຫະດີຊສໍຮີຫ໌ຂອງທ່ານ ເຊິ່ງເປັນລາຍງານຈາກທ່ານຈາບິຣ ເຣາະດີຍັລລໍຮຸ ອັນຮຸ ວ່າທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ກ່າວວ່າ :

«من لقي الله لا يشرك به شيئا دخل الجنة ومن لقيه يشرك به شيئا دخل النار»

---

1 ບັນທຶກໂດຍທ່ານບຸກໍຣີ ຫນັງສືອິສຕະຊານ (5912), ທ່ານມຸສລິມ ອັລ-ອີມານ (30), ອັດຕີຣມີຊີ ອັລອີມານ (2643), ອິບນຸມາຈະຫ໌ ອັຊຊະຫ໌ດ (4296), ອະຫ໌ມັດ (3/157).

2 ບັນທຶກໂດຍທ່ານບຸກໍຣີ ຫນັງສືຕັຟຊີຣອັລກຸຣອານ (4227), ທ່ານມຸສລິມ ອັລ-ອີມານ (92), ອະຫ໌ມັດ (1/374).

ຄວາມໝາຍວ່າ

"ຜູ້ໃດພົບອັລລໍຫ໌ໂດຍທີ່ເຂົາບໍ່ໄດ້ຕັ້ງພາຄີກັບພຣະອົງ ລາວຈະໄດ້ເຂົ້າສະຫວັນ ແລະ ຜູ້ໃດພົບພຣະອົງໂດຍທີ່ເຂົາຕັ້ງພາຄີຮ່ວມກັບພຣະອົງ ລາວກໍ່ຕົກນະຣົກ"[1]

ຫະດີສທີ່ມີຄວາມໝາຍທຳນອງດຽວກັນນີ້ມີມາກໝາຍ ແລະ ສິ່ງນີ້ຄືບັນຫາທີ່ສຳຄັນ ແລະ ໃຫຍ່ຫຼວງຍິ່ງ ອັລລໍຫ໌ຊົງແຕ່ງຕັ້ງຣໍຊູລຂອງພຣະອົງໃຫ້ເຊີນຊວນເຜີຍແຜ່ໄປສູ່ເຕົາຮີດ ແລະ ຫ້າມປາມບໍ່ໃຫ້ເຮັດການຊີຣິກ ທ່ານຣໍຊູລ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ຈຶ່ງເຮັດໜ້າທີ່ປ່າວປະກາດເຜີຍແຜ່

ສິ່ງທີ່ອັລລໍຫ໌ໄດ້ຊົງບັນຊາມາໃຫ້ແກ່ທ່ານຢ່າງສົມບູນຍິ່ງແລ້ວ ທ່ານໄດ້ຖືກຕໍ່ຕ້ານ ແລະ ຖືກທຳຮ້າຍຢ່າງຮຸນແຮງທີ່ສຸດໃນການເຮັດວຽກງານເພື່ອອັລລໍຫ໌ ແຕ່ທ່ານກໍ່ອົດທົນຕໍ່ວຽກນັ້ນ ແລະ ບັນດາສາວົກຂອງທ່ານກໍ່ອົດທົນຢ່າງທີ່ສຸດ ຄຽງຂ້າງກັບທ່ານໃນການເຜີຍແຜ່ ແລະ ຮຽກຮ້ອງເຊີນຊວນຈົນກະທັ່ງອັລລໍຫ໌ໄດ້ຂະຈັດຮູບປັ້ນ ແລະ ຈະເວັດຈົນໝົດສິ້ນໄປຈາກຄາບສະມຸດອາຣັບ ຜູ້ຄົນທັ້ງຫຼາຍໄດ້ພາກັບຮັບອິສລາມ ຮູບປັ້ນທີ່ຮຽງລາຍຮອບໆ ແລະ ໃນກະບະຫ໌ກໍ່ຖືກຂະຈັດໝົດສິ້ນ ຮູບປັ້ນທີ່ມີຊື່ຕົວຢ່າງ ອັລ-ລາຕ, ອັລ-ອຸຊຊາ ແລະ ມະນາຕ ຖືກທຳລາຍຈົນໝົດ ລວມທັ້ງຮູບປັ້ນທີ່ມີຢູ່ຕາມເຜົ່າ ແລະ ກົ໊ກຕ່າງ ໆ

[1] ບັນທຶກໂດຍທ່ານບຸກຄໍຣີ ຫນັງສືອັລ-ອິລ (129), ທ່ານມຸສລິມ ອັລ-ອີມານ (32), ອະຫ໌ມັດ (3/157).

ໃນຊົນຊາວອາຣັບ ບັນຍັດຂອງອັລລໍຫ໌ປະກົດຂຶ້ນເດັ່ນຊັດ ສາສະໜາອິສລາມໄດ້ກໍ່ຮ່າງຂຶ້ນຢ່າງຊັດເຈນໃນຄາບສະມຸດອາຣັບ,
ຫຼັງຈາກນັ້ນບັນດາມຸສລິມກໍ່ໄດ້ມຸ່ງໜ້າຮຽກຮ້ອງເຊີນຊວນ ແລະ ຈີຮາດ
ເພື່ອຂະຫຍາຍອິສລາມໃຫ້ເປັນທີ່ແຜ່ຫຼາຍອອກໄປນອກຄາບສະມຸດອາຣັບ
ແລະດ້ວຍຄວາມແຮງມືຂອງພວກເຂົານີ້ເອງທີ່ເປັນເຫດໃຫ້ອັລລໍຫ໌ຊົງ
ຮິດາຍະຫ໌ປວງບ່າວຜູ້ເຊື່ອງຖືກບັນທຶກວ່າຈະໄດ້ຮັບຄວາມສຸກ ແລະ
ດ້ວຍເຫດແຫ່ງພວກເຂົານີ້ເອງທີ່ພຣະອົງໄດ້ເຜີຍແຜ່ສັດຈະທັມ ແລະ ຄວາມເປັນທັມອອກສູ່ພື້ນທີ່ສ່ວນໃຫຍ່ທົ່ວໂລກ ແລະ ຄົນເຫຼົ່ານັ້ນກໍ່ໄດ້ກາຍເປັນຜູ້ນຳແຫ່ງການແນະນຳ
ຊີ້ແຈ້ງສູ່ແນວທາງທີ່ຖືກຕ້ອງ ເປັນຜູ້ນຳແຫ່ງສັດຈະທັມ ເປັນຜູ້ຮຽກຮ້ອງເຊີນຊວນສູ່ຄວາມເປັນທັມ ແລະ ການຟື້ນຟູພັດທະນາ
ພວກເຂົາໄດ້ເປັນຕົວຢ່າງແຫ່ງການຈະເລີນຮອຍຕາມແກ່ຊົນຮຸ່ນ "ຕາບິອີນ" (ບັນພະຊົນມຸສລິມຖັດຈາກລໍຮາບະຫ໌) ແລະ ຊົນຮຸ່ນຕໍ່ ໆ ມາທີ່ໄດ້ດຳເນີນຕາມແນວທາງນັ້ນດ້ວຍດີ ຄົນເຫຼົ່ານີ້ທັ້ງໝົດເປັນຜູ້ນຳແຫ່ງການບອກທາງ ແລະ ຜູ້ຮຽກຮ້ອງແຫ່ງສັດຈະທັມ
ທີ່ໄດ້ເຜີຍແຜ່ສາສະໜາຂອງອັລລໍຫ໌
ຮຽກຮ້ອງເຊີນຊວນມະນຸດທັ້ງຫຼາຍ
ໄປສູ່ການໃຫ້ເອກະພາບແດ່ອັລລໍຫ໌

ຕໍ່ສູ້ໃນຫົນທາງຂອງອັລລໍຫ໌ທັ້ງດ້ວຍແຮງກາຍ ແລະ ສັບສິນຂອງພວກເຂົາ ພວກເຂົາຈະບໍ່ເກງກົວຄຳຕຳນິໃດ ໆ ທີ່ກ່ຽວກັບການເຮັດເພື່ອອັລລໍຫ໌ ດ້ວຍເຫດນີ້ພຣະອົງຈຶ່ງຊົງສະໜັບສະນຸນຊ່ວຍເຫຼືອພວກເຂົາ ແລະ ຊົງປະທານແກ່ພວກເຂົາໄຊຊະນະເຫນືອຜູ້ທີ່ມາຮຸກຮານ ແລະ ຊົງຕອບແທນພວກເຂົາຢ່າງຄົບຖ້ວນ ດັ່ງທີ່ໄດ້ຊົງສັນຍາໄວ້ໃນໂອງການຂອງອັລລໍຫ໌ວ່າ :

﴿يَا أَيُّهَا الَّذِينَ آمَنُوا إِنْ تَنْصُرُوا اللَّهَ يَنْصُرْكُمْ وَيُثَبِّتْ أَقْدَامَكُمْ٧﴾

(ໂອ້ບັນດາຜູ້ສັດທາທັ້ງຫຼາຍ ຫາກພວກເຈົ້າສະໜັບສະໜຸນຊ່ວຍເຫຼືອ (ສາສະໜາຂອງອັລລໍຫ໌) ພຣະອົງກໍຈະຊົງຊ່ວຍເຫລືອພວກເຈົ້າ ແລະ ຈະຊົງເຮັດໃຫ້ຕີນຂອງພວກເຈົ້າໝັ້ນຄົງ) (ໂອງການທີ່ 47 ບົດທີ່ 7). ແລະ ພຣະອົງຊົງ ຕຣັດວ່າ

﴿وَلَيَنْصُرَنَّ اللَّهُ مَنْ يَنْصُرُهُ ۚ إِنَّ اللَّهَ لَقَوِيٌّ عَزِيزٌ ٤٠ الَّذِينَ إِنْ مَكَّنَّاهُمْ فِي الْأَرْضِ أَقَامُوا الصَّلَاةَ وَآتَوُا الزَّكَاةَ وَأَمَرُوا بِالْمَعْرُوفِ وَنَهَوْا عَنِ الْمُنْكَرِ ۗ وَلِلَّهِ عَاقِبَةُ الْأُمُورِ ٤١﴾

(ແລະແນ່ນອນອັລລໍຫ໌ ຈະຊົງຊ່ວຍເຫລືອຜູ້ທີ່ຊ່ວຍເຫຼືອພຣະອົງ ແທ້ຈິງອັລລໍຫ໌ເປັນຜູ້ຊົງພະລັງ ຜູ້ຊົງເດຊານຸພາບຢ່າງແທ້ຈິງ)

(ຄົນເຫຼົ່ານັ້ນຄື ບັນດາຜູ້ທີ່ຫາກເຮົາໃຫ້ພວກເຂົາມີອຳນາດໃນແຜ່ນດິນ ພວກເຂົາກໍ່ຈະດຳລົງລະຫມາດ ແລະ ບໍລິຈາກຊະກາດ ແລະ ໃຊ້ກັນໃຫ້ເຮັດຄວາມດີ ແລະ ຫ້າມປາມກັນໃຫ້ລະເວັ້ນຄວາມຊົ່ວ ແລະ

ບັ້ນປາຍຂອງກິດຈະການທັງຫຼາຍນັ້ນ
ເປັນສິດຂອງອັລລໍຫ໌ອັລລໍຫ໌ອົງດຽວ) (ໂອງການທີ່ 22 ບົດທີ່ 40-41). ຕໍ່ມາ ມະນຸດໄດ້ປ່ຽນແປງໄປ
ເກີດຄວາມແຕກແຍກກັນ
ເມີນເສີຍຕໍ່ການຕໍ່ສູ້ໃນຫົນທາງອິສລາມ
ຮັກຄວາມສຸກສະບາຍ ແລະ ຕາມອາລົມໃຝ່ຕໍ່າ ຄວາມຊົ່ວຊ້າຕ່າງ ໆ ກໍ່ປະກົດຫຼາຍຂຶ້ນໃນລະຫວ່າງມະນຸດ
ເວັ້ນແຕ່ວ່າຈະມີບາງຄົນທີ່ອັລລໍຫ໌ຮັກສາຄຸ້ມຄອງລາວ
ດ້ວຍເຫດດັ່ງກ່າວພຣະອົງຈຶ່ງຊົງໃຫ້ຄວາມປ່ຽນແປງເກີດຂຶ້ນແກ່ພວກເຂົາ
ພຣະອົງໃຫ້ສັດຕູຂອງພວກເຂົາມີອຳນາດເຫນືອພວກເຂົາ
ທັງນີ້ເປັນຜົນຕອບແທນຈາກການທີ່ພວກເຂົາໄດ້ປະພຶດປະຕິບັດມາ
ໂດຍທີ່ພຣະຜູ້ອະພິບານຂອງເຈົ້ານັ້ນບໍ່ໄດ້ອະທັມຕໍ່ບ່ອງບ່າວເລີຍ ອັລລໍຫ໌ໄດ້ກ່າວວ່າ :

﴿ذَلِكَ بِأَنَّ اللَّهَ لَمْ يَكُ مُغَيِّرًا نِعْمَةً أَنْعَمَهَا عَلَى قَوْمٍ حَتَّى يُغَيِّرُوا مَا بِأَنْفُسِهِمْ﴾

(ນັ້ນກໍ່ຍ້ອນວ່າ
ອັລລໍຫ໌ບໍ່ໄດ້ຊົງເປັນຜູ້ປ່ຽນແປງຄວາມກະລຸນາໃດ ໆ ທີ່ພຣະອົງປະທານມັນແກ່ກຸ່ມຊົນໃດ
ຈົນກວ່າພວກເຂົາຈະໄດ້ປ່ຽນແປງສິ່ງທີ່ຢູ່ໃນຕົວຂອງພວກເຂົາເອງ) (ໂອງການທີ່ 8 ບົດທີ່ 53). ສະນັ້ນ ຈຶ່ງເປັນໜ້າທີ່ທີ່ຈຳເປັນຂອງມຸສລິມທຸກຄົນບໍ່ວ່າຈະເປັນຜູ້ປົກຄອງປະເທດ ຫຼື ປະຊາຊົນ
ທີ່ຈະຕ້ອງກັບໄປສູ່ອັລລໍຫ໌ດ້ວຍຄວາມບໍລິສຸດໃຈແດ່ອັລລໍຫ໌ອົງດຽວເທົ່ານັ້ນ ແລະ

ສຳນຶກຜິດຂໍອະໄພຍະໂທດຕໍ່ອັລລໍຫ໌ໃນສິ່ງທີ່ຜ່ານມາແລ້ວ ອັນໄດ້ແກ່ຄວາມບົກພ່ອງ ແລະ ບາບຂອງພວກເຂົາ ແລ້ວຝ້າວປະຕິບັດສິ່ງທີ່ອັລລໍຫ໌ຊົງມີບັນຊາໃຫ້ເຮັດ ແລະ ອອກຫ່າງຈາກສິ່ງທີ່ພຣະອົງຊົງຫ້າມປາມ ອີກທັ້ງຍັງຕ້ອງສັ່ງເສຍເຊິ່ງກັນແລະກັນ ແລະ ໃຫ້ຄວາມຮ່ວມມື ປະສານງານຮ່ວມກັນໃນເລື່ອງດັ່ງກ່າວ.

ແລະອີກສ່ວນໜຶ່ງທີ່ສຳຄັນຫຼາຍໃນເລື່ອງດັ່ງກ່າວນັ້ນກໍ່ຄື ການສະຫາປະນາບົດລົງໂທດຕາມບັນຍັດສາສະໜາ ເອົາບົດບັນຍັດສາສະໜາມາເປັນຂໍ້ຕັດສິນເມື່ອມີຄວາມຂັດແຍ້ງເກີດຂຶ້ນໃນທຸກແງ່ມຸມຂອງຊີວິດມະນຸດ ການຕັດສິນຄວາມກັນຕາມບົດບັນຍັດຂອງອັລລໍຫ໌ ບໍ່ຖືປະຕິບັດຕາມກົດໝາຍທີ່ຫມູ່ມະນຸດໂຫວດຂຶ້ນມາ ແລະ ຂັບແຍ້ງກັບບົດບັນຫຍັດຂອງອັລລໍຫ໌ ບໍ່ຫັນໄປໃຊ້ບົດບັນຫຍັດເຫຼົ່ານັ້ນ ແລະ ຈຳເປັນຕ້ອງໃຫ້ປະຊາກອນມຸສລິມທຸກຊາດໃຊ້ບັນຫຍັດສາສະໜາເປັນຂໍ້ຕັດສິນ ອີກທັ້ງບັນດາອຸລາມາກໍ່ຈຳເປັນຕ້ອງໃຫ້ຄວາມຮູ້ ຄວາມເຂົ້າໃຈແກ່ປວງຊົນໃນເລື່ອງຂອງສາສະໜາ ເຜີຍແຜ່ ແລະ ເຮັດໃຫ້ເກີດຄວາມຕື່ນໂຕ ໃນການນຳບົດບັນຫຍັດຂອງອັລລໍຫ໌ມາຖືປະຕິບັດ ໃນທຸກແງ່ມຸມຂອງຊີວິດປະຈຳວັນ ສັ່ງເສຍເຊິ່ງກັນແລະກັນ ເພື່ອຄວາມກົມກຽວ ອົດທົນ ກຳຊັບກັນໃນເລື່ອງຄຸນງາມຄວາມດີ ຫ້າມປາມການເຮັດຊົ່ວທຸກຮູບແບບ ແລະ ສົ່ງເສີມບັນດາຜູ້ປົກຄອງໃຫ້ເຮັດເຊັ່ນນັ້ນ,

ນອກຈາກນັ້ນແລ້ວ ຈໍາເປັນຕ້ອງປາບປາມ ແລະ ຕໍ່ຕ້ານອຸດົມການທີ່ບ່ອນທໍາລາຍ ເຊັ່ນ ສັງຄົມນິຍົມ ຊາດນິຍົມ ການຖືເຜົ່າພັນດີກວ່າເຜົ່າອື່ນ ການດູຫມິ່ນຜິວ ແລະ ອື່ນ ໆ ທີ່ເປັນອຸດົມການ ຫຼື ຄວາມຄິດຕ່າງ ໆ ທີ່ຂັດແຍ້ງກັບບົດບັນຫຍັດຂອງອັລລໍຫ໌, ດ້ວຍເຫດຕ່າງ ໆ ທີ່ກ່າວມາແລ້ວທັງໝົດ

ອັລລໍຫ໌ຈະຊົງປັບປຸງແກ້ໄຂສິ່ງທີ່ເສື່ອມເສຍໃຫ້ເປັນສິ່ງດີແກ່ບັນດາມຸສລິມ

ຈະຊົງເຮັດໃຫ້ກຽດທີ່ຫາຍໄປຈາກພວກເຂົາກັບສູ່ພວກເຂົາອີກ ຈະຊົງຊ່ວຍເຫລືອພວກເຂົາເຫລົ່ານັ້ນໃຫ້ມີໄຊເຫນືອສັດຕູ ແລະ

ຈະຊົງເຮັດໃຫ້ພວກເຂົາມີຄວາມມັ່ນຄົງບົນພື້ນແຜ່ນດິນໂລກນີ້ ດັ່ງທີ່ອັລລໍຫ໌ໄດ້ຕຣັດວ່າ :

﴿وَكَانَ حَقًّا عَلَيْنَا نَصْرُ الْمُؤْمِنِينَ﴾

(ແລະໜ້າທີ່ຂອງເຮົາຄືການຊ່ວຍເຫຼືອຜູ້ສັດທາ)

(ໂອງການທີ່ 30 ບົດທີ່ 47). ແລະ ພຣະອົງກ່າວຕື່ມອີກວ່າ:

﴿وَعَدَ اللَّهُ الَّذِينَ آمَنُوا مِنْكُمْ وَعَمِلُوا الصَّالِحَاتِ لَيَسْتَخْلِفَنَّهُمْ فِي الْأَرْضِ كَمَا اسْتَخْلَفَ الَّذِينَ مِنْ قَبْلِهِمْ وَلَيُمَكِّنَنَّ لَهُمْ دِينَهُمُ الَّذِي ارْتَضَى لَهُمْ وَلَيُبَدِّلَنَّهُمْ مِنْ بَعْدِ خَوْفِهِمْ أَمْنًا يَعْبُدُونَنِي لَا يُشْرِكُونَ بِي شَيْئًا وَمَنْ كَفَرَ بَعْدَ ذَلِكَ فَأُولَئِكَ هُمُ الْفَاسِقُونَ٥٥﴾

(ອັລລໍຫ໌ໄດ້ຊົງສັນຍາກັບບັນດາຜູ້ສັດທາ ແລະ ບັນດາຜູ້ກະທໍາຄວາມດີທັງຫຼາຍວ່າ ແນ່ນອນພຣະອົງຈະຊົງໃຫ້ພວກເຂົາເປັນຕົວແທນ ນະ ໂລກນີ້ ດັ່ງທີ່ໄດ້ໃຫ້ແກ່ບັນດາຊົນກ່ອນພວກເຂົາເປັນຕົວແທນມາກ່ອນແລ້ວ ແລະ

ແນ່ນອນພະອົງຈະຊົງເຮັດໃຫ້ສາສະໜາຂອງພວກເຂົາ ເຊິ່ງພຣະອົງຊົງໂປດປານເປັນທີ່ໝັ້ນຄົງເປັນກຽດແກ່ພວກເຂົາ ແລະ ແນ່ນອນພຣະອົງຈະຊົງປ່ຽນແປງໃຫ້ພວກເຂົາໄດ້ຮັບຄວາມປອດໄພ ຫຼັງຈາກຄວາມຢ້ານກົວຂອງພວກເຂົາ ໂດຍທີ່ພວກເຂົາຈະຕ້ອງເຄົາລົບພັກດີຕໍ່ຂ້າ ບໍ່ຕັ້ງພາຄີອື່ນໃດຕໍ່ຂ້າ ແລະ ຜູ້ໃດປະຕິເສດສັດທາຫຼັງຈາກນັ້ນ ຊົນເຫຼົ່ານັ້ນພວກເຂົາຄືຜູ້ຝ່າຝືນ) (ໂອງການທີ່ 24 ບົດທີ່ 55). ແລະອັລລໍຫ໌ຜູ້ຊົງມະຫາບໍລິສຸດໄດ້ຕຣັດວ່າ:

﴿إِنَّا لَنَنْصُرُ رُسُلَنَا وَالَّذِينَ آمَنُوا فِي الْحَيَاةِ الدُّنْيَا وَيَوْمَ يَقُومُ الْأَشْهَادُ ٥١﴾

(ແທ້ຈິງເຮົາຈະຊ່ວຍເຫຼືອບັນດາຣໍຊູລຂອງເຮົາ ແລະ ບັນດາຜູ້ສັດທາຢ່າງແນ່ນອນ ທັງໃນຊີວິດຂອງໂລກນີ້ ແລະ ມື້ທີ່ເຊິ່ງປວງພະຍານຈະຢືນຂຶ້ນເປັນພະຍານ) (ໂອງການທີ່ 40 ບົດທີ່ 51).

﴿يَوْمَ لَا يَنْفَعُ الظَّالِمِينَ مَعْذِرَتُهُمْ وَلَهُمُ اللَّعْنَةُ وَلَهُمْ سُوءُ الدَّارِ ٥٢﴾

(ມື້ທີ່ການແກ້ຕົວຂອງພວກເຂົາຈະບໍ່ອໍານວຍຜົນແກ່ບັນດາຜູ້ອະທໍາ ແລະ ສໍາລັບພວກເຂົາຈະໄດ້ຮັບການສາບແຊ່ງ ແລະ ສໍາລັບພວກເຂົາຈະມີທີ່ພໍານັກອັນຊົ່ວຊ້າ) (ໂອງການທີ່ 40 ບົດທີ່ 52).

ແລ້ວອັລລໍຫ໌ນັ້ນຄື ຜູ້ທີ່ເຮົາວິງວອນຂໍໃຫ້ຊົງປັບປຸງແກ້ໄຂບັນດາຜູ້ນໍາຂອງຊາວມຸສລິມ ແລະ ປະຊາຊົນທົ່ວໄປ ຂໍພຣະອົງໄດ້ໂປດປະທານແກ່ພວກເຂົາເຫລົ່ານັ້ນ ເຊິ່ງຄວາມເຂົ້າໃຈຖ່ອງແທ້ໃນສາສະໜາ

ຂໍພຣະອົງໄດ້ໂປດຊົງລວມພວກເຂົາເຫລົ່ານັ້ນໃຫ້ເປັນປຶກແຜ່ນ ດໍາລົງມັ່ນຢູ່ບົນຕັກວາ (ຄວາມຍໍາເກງ) ຕໍ່ພຣະອົງ ຂໍໄດ້ໂປດຊົງຊີ້ນໍາພວກເຂົາເຫລົ່ານັ້ນສູ່ແນວທາງຂອງພຣະອົງທີ່ທ່ຽງຕົງ ໄດ້ໂປດຊ່ວຍເຫລືອສະນັບສະນູນສັດຈະທັມ ແລະ ຂະຈັດສິ່ງທີ່ເປັນເທັດ

ຂໍໄດ້ໂປດຊົງປະທານຄວາມສໍາເລັດແກ່ພວກເຂົາເຫລົ່ານັ້ນໃນຄວາມຮ່ວມມືກັນໃນເລື່ອງທີ່ເປັນຄຸນນະທັມ ຄວາມຍໍາເກງ ການສັ່ງເສຍເຊິ່ງກັນແລະກັນໃຫ້ມີສັດຈະທັມ ແລະ ມີຄວາມມານະອົດທົນ ແທ້ຈິງ ພຣະອົງນັ້ນຊົງເປັນຜູ້ມີສິດ ແລະ ເປັນຜູ້ຊົງອະນຸພາບໃນເລື່ອງດັ່ງກ່າວ, ຂໍອັລລໍຫ໌ໄດ້ຊົງປະທານພອນ ແລະ ຄວາມສັນຕິແດ່ບ່າວ ແລະ ຣໍຊູລຜູ້ທີ່ດີຍິ່ງຂອງພຣະອົງ ຄືທ່ານນະບີຜູ້ເປັນອິຫມ່າ ແລະ ຜູ້ນໍາຂອງເຮົາ ມຸຮໍາມັດ ບິນ ອັບດຸລລໍຫ໌ ຊໍລລັລລໍຮຸ ອະໄລຮິ ວະສັລລັມ ແລະ ແດ່ວົງວານລວມທັ້ງສາວົກຂອງທ່ານ ຕະຫຼອດຈົນຜູ້ຈະເລີນຮອຍຕາມແນວທາງຂອງທ່ານທັ້ງມວນ , ຂໍຄວາມສັນຕິ ຄວາມເມດຕາ ແລະ ຄວາມຈໍາເລີນຮຸ່ງເຮືອງຈາກອັລລໍຫ໌ຈົ່ງປະສົບແດ່ທ່ານທັ້ງຫຼາຍ.

# الفهرس

ຄວາມເຊື່ອທີ່ຖືກຕ້ອງ ແລະ ຄວາມເຊື່ອທີ່ບໍ່ຖືກ ........................................ 2
ບົດນຳ ........................................................................................................ 2
ການສັດທາຕໍ່ອັລລໍຫ໌.......................................................................................... 7
ການສັດທາເຊື່ອຕໍ່ເທວະດາ ມະລາອິກະຫ໌................................................. 23
ການສັດທາຕໍ່ຄຳພີຕ່າງ ໆ.......................................................................... 25
ການສັດທາຕໍ່ບັນດາຣໍຊູລ (ສາດສະດາ) ................................................... 28
ການສັດທາຕໍ່ວັນອາຄິເຣາະຫ໌ (ໂລກໜ້າ)................................................. 29
ການສັດທາຕໍ່ກົດກຳໜົດສະພາວະ (ກໍດັຣ) ............................................. 30
ການເຊື່ອວ່າອີມານ (ຄວາມສັດທາ) ເປັນທັ້ງຄຳເວົ້າ ແລະ ການກະທຳ ຈະເພີ່ມຂຶ້ນດ້ວຍການເຊື່ອຟັງ ແລະ ຈະລົດລົງດ້ວຍການເຮັດສິ່ງບໍ່ດີ..... 33
ການມີຄວາມຮັກຄວາມມັກເພື່ອອັລລໍຫ໌ ມີຄວາມກຽດຊັງເພື່ອອັລລໍຫ໌ ມີການຜູກສຳພັນ ການອອກຫ່າງ ບົນພື້ນຖານຂອງບົດບັນຍັດແຫ່ງອັລລໍຫ໌................................................. 35
ກຸ່ມຄົນທີ່ດຳເນີນຢູ່ບົນເສັ້ນທາງທີ່ຂັດກັບຄວາມຖືກຕ້ອງ ...................... 39
ຈຳເປັນຕ້ອງອີບາດະຫ໌ຕໍ່ອັລລໍຫ໌ອົງດຽວ ແລະ ຊີ້ແຈງສາເຫດແຫ່ງໄຊຊະນະເຫນືອສັດຕູຂອງອັລລໍຫ໌............................. 49

lo152v1.0 - 03/09/2026